95669

Public Disclosure Authorized
Public Disclosure Authorized
Public Disclosure Authorized
Public Disclosure Authorized




# ບົດລາຍງານເສດຖະກິດຂອງ ສປປ ລາວ

## ເພື່ອສ້າງສະຖຽນລະພາບໃຫ້ເສດຖະກິດມະຫາພາກ ແລະ ສ້າງການເຕີບໂຕ ຢ່າງກວ້າງຂວາງ

ເມສາ 2015

**ຫົວຂໍ້ສະເພາະ:**

1. ຄວາມໝາຍຂອງ ປະຊາຄົມເສດຖະກິດອາຊຽນ (AEC) 2015 ຕໍ່ ສປປ ລາວ
2. ເສີມຂະຫຍາຍການສ້າງວຽກເຮັດງານທຳ ຢ່າງມີສະມັດຕະພາບ ເພື່ອການເຕີບໂຕ ຢ່າງກວ້າງຂວາງ

ພະແນກຄຸ້ມຄອງເສດຖະກິດມະຫາພາກແລະນະໂຍບາຍການເງິນພາກລັດ
ພາກພື້ນອາຊີແລະປາຊີຟິກ

WORLD BANK GROUP

# ອັດຕາແລກປ່ຽນ

(ອັດຕາແລກປ່ຽນວັນທີ 11 ມີນາ 2015)

| | | |
|---|---|---|
| ສະກຸນເງິນ | = | ລາວກີບ |
| 8,105 ກີບ | = | US$1.00 |
| ປີງົບປະມານ | = | ຕຸລາ ເຖິງ ກັນຍາ |

# ຄຳສັບຫຍໍ້

| | |
|---|---|
| ATIGA | ຂໍ້ຕົກລົງດ້ານການຄ້າສິນຄ້າໃນອາຊຽນ |
| AEC | ປະຊາຄົມເສດຖະກິດອາຊຽນ |
| AFAS | ກອບຂໍ້ຕົກລົງດ້ານການຄ້າການບໍລິການໃນອາຊຽນ |
| ASEAN | ກຸ່ມປະເທດສະມາຊິກອາຊຽນ |
| BOL | ທະນາຄານແຫ່ງ ສປປ ລາວ |
| BOP | ດຸນການຊໍາລະກັບຕ່າງປະເທດ |
| CLMV | ປະເທດກຳປູເຈຍ, ສປປ ລາວ, ມຽນມາ ແລະ ຫວຽດນາມ |
| COD | ມື້ເລີ່ມທຳການຜະລິດໄຟຟ້າຂາຍ |
| CPI | ດັດຊະນີລາຄາຜູ້ຊົມໃຊ້ |
| DMFAS | ລະບົບຄຸ້ມຄອງບໍລິຫານໜີ້ສິນແລະວິເຄາະການເງິນ |
| EAP | ພາກພື້ນອາຊີຕາເວັນອອກແລະປາຊີຟິກ |
| EDL | ລັດວິສາຫະກິດໄຟຟ້າລາວ |
| FDI | ການລົງທຶນໂດຍກົງຈາກຕ່າງປະເທດ |
| FY | ປີງົບປະມານ |
| GDP | ລວມຍອດຜະລິດຕະພັນພາຍໃນ |
| GFIS | ລະບົບຕິດຕາມການເງິນພາກລັດ |
| GOL | ລັດຖະບານແຫ່ງ ສປປ ລາວ |
| HC | ສຸກສາລາ |
| IMF | ກອງທຶນການເງິນສາກົນ |
| IPP | ໂຄງການຜະລິດໄຟຟ້າເອກະລາດ |
| LDC | ປະເທດດ້ອຍພັດທະນາ |
| LSX | ຕະຫຼາດຫຼັກຊັບລາວ |
| MCH | ສຸຂະພາບແມ່ແລະເດັກ |
| MOF | ກະຊວງການເງິນ |
| MOIC | ກະຊວງອຸດສາຫະກຳແລະການຄ້າ |
| NA | ສະພາແຫ່ງຊາດ |
| NEER | ອັດຕາແລກປ່ຽນທີ່ມີປະສິດທິພາບປະຈຸບັນ |
| NFA | ຊັບສິນຕ່າງປະເທດສຸດທິ |
| NPL | ໜີ້ທີ່ບໍ່ເກີດດອກອອກຜົນ |
| NSEDP | ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ |
| OPEC | ອົງການປະເທດຜູ້ຜະລິດນ້ຳມັນ |
| PIP | ໂຄງການລົງທຶນຂອງລັດ |
| PPG | ໜີ້ສິນຕ່າງປະເທດຂອງພາກລັດແລະການຄ້ຳປະກັນຂອງພາກລັດ |
| PV | ມູນຄ່າປະຈຸບັນ |
| REER | ອັດຕາແລກປ່ຽນທີ່ມີປະສິດທິພາບຕົວຈິງ |
| SOCBs | ທະນາຄານທຸລະກິດລັດ |
| SOE | ລັດວິສາຫະກິດ |
| TSA | ບັນຊີຄັງເງິນລວມສູນ |
| VAT | ອາກອນມູນຄ່າເພີ່ມ |
| WBG | ກຸ່ມທະນາຄານໂລກ |
| WEO | ບົດລາຍງານທ່າອ່ຽງເສດຖະກິດໂລກ |
| WTO | ອົງການການຄ້າໂລກ |
| YOY | ປີນີ້ທຽບໃສ່ປີຜ່ານມາ |

| | | |
|---|---|---|
| ຮອງປະທານປະຈຳພາກພື້ນ | : | ແອັກເຊລ ວັນ ຕູອດເຊັນເບີກ |
| ຜູ້ອຳນວຍການປະຈຳປະເທດ | : | ອຣິກ ຊັກດາວ |
| ຜູ້ອຳນວຍການອາວຸໂສປະຈຳຂະແໜງ | : | ມາເຊໂລ ກຸຍກາເລ |
| ຫົວໜ້າຫ້ອງການປະຈຳ ສປປ ລາວ | : | ແຊລລີ ເບີນນິງແຮມ |
| ຜູ້ຈັດການປະຈຳຂະແໜງ | : | ແມັດທິວ ເວີກກິດສ |
| ຫົວໜ້າທີມງານ | : | ແກ້ວມະນີວອນ ພິມມະຫາໄຊ |

# ບົດຂອບໃຈ

**ບົດລາຍງານເສດຖະກິດ ສປປ ລາວ - ເມສາ 2015** ໄດ້ຖືກກະກຽມໂດຍທີມງານວິຊາການຂອງທະນາຄານໂລກ ພາຍໃຕ້ການຊີ້ນໍາຂອງ ແມັດທິວ ເວີກກິດສ (ຜູ້ຈັດການປະຈໍາຂະແໜງ, ຂະແໜງເສດຖະກິດມະຫາພາກແລະການຄຸ້ມຄອງນະໂຍບາຍການເງິນງົບປະມານ) ແລະ ຊາລີ ເບີນນິງແຮມ (ຫົວໜ້າຫ້ອງການທະນາຄານໂລກ). ທີມງານປະກອບມີ ອາເລນ ດໍຣ (ນັກເສດຖະສາດອາວຸໂສ), ສົມນຶກ ດາວະດິງ (ນັກເສດຖະສາດອາວຸໂສ) ແລະ ແກ້ວມະນີວອນ ພິມມະຫາໄຊ (ນັກເສດຖະສາດ) ແລະ ການປະກອບສ່ວນໃສ່ ພາກທີ II ຈາກ ກ້ອນສະຫວ່າງ ຫງາດສາຍຊົນ (ນັກເສດຖະສາດການຄ້າ) ແລະ ຣິຊາດ ຣິຄອດ (ນັກເສດຖະສາດອາວຸໂສ) ໃນຫົວຂໍ້ "ຄວາມໝາຍຂອງ ປະຊາຄົມເສດຖະກິດອາຊຽນ (AEC) 2015 ຕໍ່ ສປປ ລາວ" ແລະ ລາສ ເອັມ ຊອນເດີກາດ (ຫົວໜ້າໂຄງການ) ໃນຫົວຂໍ້ "ເສີມຂະຫຍາຍການສ້າງວຽກເຮັດງານທໍາ ຢ່າງມີສະມັດຕະພາບ ເພື່ອການເຕີບໂຕຢ່າງກວ້າງຂວາງ". ຂໍຂອບໃຈ ສຸກສະຫວັນ ສົມບູນຂັນ (ຜູ້ຊ່ວຍທີມງານ), ຕຸ້ມຄໍາ ຫຼວງລາດ ແລະ ມະນີເພັດ ເພັງສະຫວັດດີ (ທີມງານພົວພັນພາຍນອກ) ສໍາລັບວຽກບໍລິຫານແລະເຜີຍແຜ່ບົດລາຍງານສະ ບັບນີ້.

ທີມງານຂໍສະແດງຄວາມຂອບໃຈຢ່າງສູງ ຕໍ່ພະນັກງງານຈາກກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່, ທະນາຄານແຫ່ງ ສປປ ລາວ ແລະ ຕົວແທນຈາກສະພາອຸດສາຫະກໍາ ແລະ ການຄ້າ ແລະ ກຸ່ມທຸລະກິດຕ່າງໆ ທີ່ໄດ້ແລກປ່ຽນທັດສະນະຄໍາຄິດຄໍາເຫັນ ແລະ ສະໜອງຂໍ້ມູນທີ່ເປັນປະໂຫຍດຫຼາຍຕໍ່ການກະກຽມບົດລາຍງານສະບັບນີ້.

ເນື້ອໃນ ແລະ ການຕີລາຄາໃນບົດລາຍງານນີ້ແມ່ນຄໍາເຫັນຂອງຜູ້ຂຽນ ແລະ ທີມງານ ບໍ່ແມ່ນຄໍາເຫັນຕົວແທນ ຂອງກຸ່ມທະນາຄານໂລກ, ຄະນະອໍານວຍການ ຫຼື ລັດຖະບານຂອງປະເທດສະມາຊິກ.

# ສາລະບານ


ບົດສະຫລຸບຫຍໍ້ 10
ພາກທີ 1: ສະພາບຂອງເສດຖະກິດໃນໄລຍະຫຼ້າສຸດ 17
ສະພາບເສດຖະກິດໃນພາກພື້ນ 18
ການພັດທະນາເສດຖະກິດໃນ ສປປ ລາວໃນໄລຍະມໍ່ໆມານີ້ 19
ການເຕີບໂຕຂອງເສດຖະກິດ 19
ສະພາບເງິນເຟີ້ 21
ລາຍຮັບ ແລະ ລາຍຈ່າຍພາກລັດ 21
ໜີ້ສິນພາກລັດ 25
ການຊຳລະກັບຕ່າງປະເທດ 28
ອັດຕາແລກປ່ຽນ 32
ສະພາບໃນຂະແໜງເງິນຕາ 32
ພາກທີ II: ຫົວຂໍ້ສະເພາະ 35
ປະຊາຄົມ ເສດຖະກິດ ອາຊຽນ (AEC) 2015 – ຜົນກະທົບຕໍ່ ສປປ ລາວ 36
ການຄ້າດ້ານສິນຄ້າ 36
ການຄ້າດ້ານການບໍລິການ 38
ການລົງທຶນ 39
ການອຳນວຍຄວາມສະດວກທາງດ້ານການຄ້າ 40
ເສີມຂະຫຍາຍການສ້າງວຽກເຮັດງານທຳຢ່າງມີສະມັດຕະພາບ ເພື່ອການເຕີບໂຕຢ່າງກວ້າງຂວາງ 43
ເອກະສານຊ້ອນທ້າຍ 1: ພາບລວມຂອງເສດຖະກິດຂອງສປປ ລາວ 51
ເອກະສານຊ້ອນທ້າຍ 2: ການຄາດຄະເນການຂະຫຍາຍຕົວຂອງເສດຖະກິດໃນພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ 53


# ຮູບສະແດງ


ຮູບສະແດງ 1: ການເຕີບໂຕແລະອັດຕາເງິນເຟີ້ 19
ຮູບສະແດງ 2: ການປະກອບສ່ວນຕໍ່ການເຕີບໂຕຂອງ GDP 19
ຮູບສະແດງ 3: ອັດຕາເງິນເຟີ້ປະຈຳເດືອນ 21
ຮູບສະແດງ 4: ອົງປະກອບຂອງອັດຕາເງິນເຟີ້ໃນໝວດສະບຽງອາຫານ 21
ຮູບສະແດງ 5: ຜົນງານການຈັດຕັ້ງປະຕິບັດງົບປະມານຂອງພາກລັດ 23
ຮູບສະແດງ 6: ລາຍຈ່າຍງົບປະມານ 23
ຮູບສະແດງ 7: ງົບປະມານໃຫ້ແກ່ຂະແໜງສັງຄົມ 23
ຮູບສະແດງ 8: ລາຍຮັບງົບປະມານ 23
ຮູບສະແດງ 9: ງົບປະມານຂອງຂະແໜງສຶກສາ 24
ຮູບສະແດງ 10: ງົບປະມານຂອງຂະແໜງສາທາລະນະສຸກ 24

ຮູບສະແດງ 11: ລາຄານ້ຳມັນສະເລ່ຍ 30
ຮູບສະແດງ 12: ດຸນການຊຳລະກັບຕ່າງປະເທດ 29
ຮູບສະແດງ 13: ມູນຄ່າການສົ່ງອອກສິນຄ້າ 29
ຮູບສະແດງ 14: ມູນຄ່າການນຳເຂົ້າສິນຄ້າ 29
ຮູບສະແດງ 15:ການລົງທຶນຈາກຕ່າງປະເທດ 29
ຮູບສະແດງ 16: ຊັບສິນຕ່າງປະເທດສຸດທິ ແລະ ຄັງສຳຮອງເງິນຕາ ຕ່າງປະເທດ 31
ຮູບສະແດງ 17: ຄັງສຳຮອງ 31
ຮູບສະແດງ 18: ອັດຕາແລກປ່ຽນເງິນກີບ 32
ຮູບສະແດງ 19: ອັດຕາແລກປ່ຽນອັດຕາຕົວຈິງ (REER) 32
ຮູບສະແດງ 20: ອັດຕາການຂະຫຍາຍຕົວຂອງສິນເຊື່ອໃນພາກພື້ນອາຊີຕາເວັນອອກແລະປາຊີຟິກ 32
ຮູບສະແດງ 22: ການປະກອບສ່ວນຕໍ່ການ ຂະຫຍາຍຕົວຂອງສິນ ເຊື່ອ 34
ຮູບສະແດງ 21: ຊັບສິນຂອງພາກທະນາຄານ 34
ຮູບສະແດງ 23: ການປະກອບສ່ວນຕໍ່ການຂະຫຍາຍຕົວຂອງສິນ ເຊື່ອຈາກແຕ່ລະຂະແໜງການ 34
ຮູບສະແດງ 24: ສິນເຊື່ອໃນແຕ່ລະຂະແໜງການ 34
ຮູບສະແດງ 25: ຕົ້ນທຶນທາງການຄ້າຍັງສູງ 41
ຮູບສະແດງ 26: ອັດຕາສ່ວນຂອງຜູ້ປະກອບການໃນ ສປປ ລາວ, ຫວຽດນາມ ແລະ ແຂວງຢູນນານ (ຈີນ) ທີ່ຮ້ອງທຸກວ່າເຂົາເຈົ້າບໍ່ມີ ຫຼື ມີຜູ້ທີ່ມາສະໝັກງານໜ້ອຍຫຼາຍ, ຈັດແບ່ງຕາມລະດັບສີມືແຮງງານ 44
ຮູບສະແດງ 27: ຜົນຜະລິດແລະແຮງງານຈັດແບ່ງຕາມຂະແໜງການໃນເສດຖະກິດລວມຂອງສປປ ລາວ 46
ຮູບສະແດງ 28: ການປະເມີນຄວາມສາມາດໃນການອ່ານໃນລະດັບ ການສຶກສາຂັ້ນຕົ້ນ ຂອງ ສປປ ລາວ 46
ຮູບສະແດງ 29: ປຽບທຽບຄວາມຮູ້ໜັງສືຂອງຜູ້ໃຫຍ່ຈັດແບ່ງຕາມລະດັບການສຶກສາລະຫວ່າງ ສປປ ລາວ ແລະຫວຽດນາມ 47

## ກ່ອງ

ກ່ອງ 1: ລາຍຈ່າຍພາກລັດໃນຂະແໜງສຶກສາແລະສາທາ 24
ກ່ອງ 2: ລາຄານ້ຳມັນຫຼຸດລົງອາດຈະມີຜົນດີຕໍ່ເສດຖະກິດລາວ ແຕ່ກໍ່ຍັງມີຄວາມສ່ຽງດ້ານລົບ 30

## ຕາຕະລາງ

ຕາຕະລາງ 1: ໂຄງສ້າງໜີ້ສິນຕ່າງປະເທດຂອງພາກລັດ 27
ຕາຕະລາງ 2: ຕົວຊີ້ວັດພາລະໜີ້ສິນຕ່າງປະເທດຂອງພາກລັດ 27



*Photo by Remy Rossi / World Bank, 2013*


LAO-VIET ANK
bfl banque franco-lao ltd



*Photo by Bart Verweij / World Bank, 2014*

# ບົດສະຫລຸບຫຍໍ້

## ສະພາບເສດຖະກິດໃນຫວ່າງບໍ່ດົນມານີ້

1. ອີງຕາມການປະເມີນເບື້ອງຕົ້ນ ເສດຖະກິດຂອງ ສປປ ລາວ ຄາດວ່າໄດ້ຂະຫຍາຍຕົວໃນອັດຕາ 7,5 ສ່ວນຮ້ອຍ ໃນປີ 2014 ທຽບກັບສະເລ່ຍ 8 ສ່ວນຮ້ອຍ ໃນລະຫວ່າງ 2011-13 ແຮງຂັບເຄື່ອນແມ່ນມາຈາກ ຂະແໜງກໍ່ສ້າງ ເຊິ່ງສ່ວນໜຶ່ງກໍ່ຕິດພັນກັບການລົງທຶນຈາກຕ່າງປະເທດໃນຂະແໜງພະລັງງານໄຟຟ້າ ແລະ ຜົນປະໂຫຍດດ້ານເສດຖະກິດທີ່ປັ່ນອ້ອມ, ຂະແໜງປ່າໄມ້ (ຈາກການສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ທີ່ເພີ່ມຂຶ້ນ) ແລະ ຂະແໜງບໍລິການ. ການປະກອບສ່ວນຈາກຂະແໜງຊັບພະຍາກອນໂດຍລວມແມ່ນຫລຸດລົງ ເນື່ອງຈາກຜົນຜະລິດຄຳຫລຸດລົງຍ້ອນການຫລຸດລົງຂອງລາຄາໃນຕະຫລາດໂລກແລະປະລິມານແຮ່ຫຼຸດລົງ ແລະ ການຄົງຕົວຂອງການຜົນຜະລິດໄຟຟ້າຈາກບັນດາເຂື່ອນທີ່ມີໃນປະຈຸບັນ. ນອກຈາກນີ້, ມາດຕະການຫລຸດຜ່ອນການຂາດດຸນງົບປະມານໂດຍການຕັດລາຍຈ່າຍ ແລະ ການຫລຸດຜ່ອນການຂະຫຍາຍຕົວຂອງສິນເຊື່ອກໍ່ໄດ້ເຮັດໃຫ້ກິດຈະກຳດ້ານເສດຖະກິດຂະຫຍາຍຕົວຊ້າລົງ.

2. ທ່າອ່ຽງໃນປີ 2015 ຄາດວ່າການຂະຫຍາຍຕົວຈະຊ້າລົງກ່ອນທີ່ຈະເລັ່ງໄວຂຶ້ນໃນໄລຍະກາງ. ການຂະຫຍາຍຕົວຂອງເສດຖະກິດຄາດຄະເນວ່າຈະຢູ່ໃນລະດັບ 6,4 ສ່ວນຮ້ອຍໃນປີນີ້ ດ້ວຍສົມມຸດຖານທີ່ວ່າການລົງທຶນໃສ່ໂຄງການໃໝ່ໃນຂະແໜງພະລັງງານໄຟຟ້າຈະຍັງຄົງລະດັບສູງແຕ່ຂ້ອນຂ້າງຄົງທີ່ ແລະ ຜົນຂອງມາດຕະການຫລຸດຜ່ອນລາຍຈ່າຍເພື່ອຫຼຸດການຂາດດຸນງົບປະມານ ແລະ ການຂະຫຍາຍຕົວຂອງສິນເຊື່ອທີ່ຊ້າລົງ. ຈັງຫວະການຂະຫຍາຍຕົວທີ່ຊ້າລົງຍ້ອນນະໂຍບາຍຮັດກຸມດ້ານລາຍຈ່າຍດັ່ງກ່າວ (ຄວບຄຸມລາຍຈ່າຍ, ອັດຕາການຂະຫຍາຍຕົວຂອງສິນເຊື່ອທີ່ຊ້າລົງ) ຄາດວ່າຈະຊ່ວຍໃຫ້ເສດຖະກິດມະຫາພາກກັບຄືນສູ່ສະຖຽນລະພາບ ເນື່ອງຈາກສະພາບເສດຖະກິດມະຫາພາກໄດ້ປະສົບກັບຄວາມສ່ຽງ ຍ້ອນນະໂຍບາຍກະຕຸ້ນລາຍຈ່າຍໃນຊຸມປີຜ່ານມາ. ທ່າອ່ຽງດັ່ງກ່າວກໍ່ຂຶ້ນກັບຄວາມສ່ຽງດ້ານບວກ ແລະ ດ້ານລົບ. ຄວາມສ່ຽງດ້ານລົບສຳລັບ ສປປ ລາວ ປະກອບມີຄວາມເປັນໄປໄດ້ທີ່ສະພາບຄວາມບໍ່ສະຫງົບໃນປະເທດໄທຈະກັບຄືນມາ ແລະ ນະໂຍບາຍເສດຖະກິດຂອງຈີນທີ່ຈະຊະລໍຕົວເລັກນ້ອຍ ເພື່ອປັບໃຫ້ເສດຖະກິດພັດທະນາໄປຕາມທິດທີ່ມີຄວາມຍືນຍົງ ເຊິ່ງກໍ່ອາດສົ່ງຜົນເຖິງການຄ້າ ແລະ ການລົງທຶນກັບບັນດາປະເທດຄູ່ຄ້າໃນນັ້ນລວມມີ ສປປ ລາວ. ແຕ່ໃນທາງກົງກັນຂ້າມ ຖ້າວ່າລາຄານ້ຳມັນສືບຕໍ່ຫຼຸດລົງ, ບັນດາໂຄງການພະລັງງານໄຟຟ້າສຳເລັດໄວກວ່າແຜນ ແລະ ບັນດາຂະແໜງການອື່ນໆນອກຈາກຊັບພະຍາກອນທຳມະຊາດຂະຫຍາຍຕົວດີກວ່າປີກາຍກໍ່ອາດຈະເປັນປັດໄຈດ້ານບວກທີ່ອາດຈະຊຸກຍູ້ໃຫ້ການຂະຫຍາຍຕົວສູງກວ່າລະດັບຄາດຄະເນດັ່ງກ່າວມາຂ້າງເທິງ ແລະ ໃກ້ຄຽງກັບເປົ້າໝາຍທີ່ລັດຖະບານໄດ້ວາງໄວ້. ໃນດ້ານງົບປະມານກໍ່ຄາດວ່າການຄວບຄຸມລາຍຈ່າຍຈະຊ່ວຍຫຼຸດຜ່ອນການຂາດດຸນງົບປະມານເລັກນ້ອຍ ແລະ ຫຼຸດຜ່ອນຄວາມຟົດຟື້ນຂອງຄວາມຕ້ອງການພາຍໃນ ເຊິ່ງຄາດວ່າຈະຊ່ວຍປະກອບສ່ວນເຮັດໃຫ້ເສດຖະກິດມະຫາພາກກັບຄືນສູ່ສະ

ພາບໝັ້ນທ່ຽງ. ດ້ານດຸນການຊຳລະກັບຕ່າງປະເທດກໍ່ຄາດວ່າດຸນຊຳລະປົກກະຕິຈະຍັງສືບຕໍ່ຂາດດຸນໃນລະດັບສູງຢູ່ເຊິ່ງສ່ວນໜຶ່ງກໍ່ຕິດພັນກັບການນຳເຂົ້າວັດຖຸສຳລັບການກໍ່ສ້າງໂຄງການໄຟຟ້າ ແລະ ດຸນຊຳລະດັ່ງກ່າວຄາດວ່າຈະປັບປຸງຂຶ້ນໃນໄລຍະກາງ ຫຼັງຈາກທີ່ບັນດາໂຄງການພະລັງງານໄຟຟ້າສຳເລັດການກໍ່ສ້າງ ແລະ ເລີ່ມທຳການຜະລິດ ແລະ ສົ່ງອອກ.

**3. ອັດຕາເງິນເຟີ້ສະເລ່ຍໃນປີ 2014 ຫຼຸດລົງເປັນ 4,2 ສ່ວນຮ້ອຍ ຈາກ 6,4 ສ່ວນຮ້ອຍ ໃນປີກ່ອນ ຍ້ອນການເພີ່ມຂຶ້ນຂອງລາຄາສະບຽງອາຫານໃນຈັງຫວະທີ່ຊ້າລົງ ແລະ ລາຄານ້ຳມັນເຊື້ອໄຟທີ່ຫຼຸດລົງ.** ລາຄາໝວດສະບຽງອາຫານໃນປີ 2014 ເພີ່ມຂຶ້ນສະເລ່ຍ 7 ສ່ວນຮ້ອຍ ຈາກປີ 2013 ທຽບກັບ 12,6 ສ່ວນຮ້ອຍ ໃນປີກ່ອນ. ສຳລັບລາຄານ້ຳມັນສະເລ່ຍກໍ່ຫຼຸດລົງຕື່ມອີກ 0,8 ສ່ວນຮ້ອຍ ໃນປີ 2014 ຈາກທີ່ໄດ້ຫຼຸດລົງແລ້ວ 5,4 ສ່ວນຮ້ອຍ ໃນປີ 2013 ສອດຄ່ອງກັບທ່າອ່ຽງລາຄານ້ຳມັນໃນຕະຫຼາດໂລກ. ອັດຕາເງິນເຟີ້ສະເລ່ຍຄາດວ່າຈະຢູ່ໃນລະດັບ 4-5 ສ່ວນຮ້ອຍໃນປີນີ້.

**4. ຫຼັງຈາກທີ່ການຂາດດຸນງົບປະມານເພີ່ມຂຶ້ນໃນສົກປີ 2012/13 ລັດຖະບານກໍ່ໄດ້ນຳໃຊ້ມາດຕະການແກ້ໄຂໃນສົກປີ 2013/14 ແລະ 2014/15 ເພື່ອເຮັດໃຫ້ສະພາບການເງິນພາກລັດກັບຄືນສູ່ສະຖຽນລະພາບ.** ລາຍຮັບລວມທຽບໃສ່ GDP ຄາດວ່າຈະຢູ່ໃນລະດັບຄົງທີ່ 23 ສ່ວນຮ້ອຍໃນສົກປີ 2013/14 ເຊິ່ງມາຈາກລາຍຮັບນອກຈາກຂະແໜງຊັບພະຍາກອນທຳມະຊາດ ແລະ ການປັບປຸງການຄຸ້ມຄອງການເກັບລາຍຮັບທີ່ຊ່ວຍຊົດເຊີຍການຫຼຸດລົງຂອງລາຍຮັບຈາກຂະແໜງບໍ່ແຮ່ ເນື່ອງຈາກວ່າລາຄາໂລຫະຫຼຸດລົງ ແລະ ຜົນຜະລິດຄຳກໍ່ຫຼຸດລົງໃນຂະນະທີ່ລາຍຮັບຈາກການຊ່ວຍເຫຼືອລ້າກໍ່ຫຼຸດລົງ. ສຳລັບດ້ານລາຍຈ່າຍແມ່ນໄດ້ມີການຍົກເລີກລາຍຈ່າຍເງິນອຸດໜູນ ທີ່ສາມາດຊົດເຊີຍການສືບຕໍ່ຂຶ້ນເງິນເດືອນພະນັກງານປີກາຍນີ້. ຫຼັງຈາກນັ້ນກໍ່ໄດ້ມີການຕັດລາຍຈ່າຍອີກຄັ້ງໜຶ່ງປະມານ 1 ສ່ວນຮ້ອຍຕໍ່ GDP ຖ້າທຽບໃສ່ໝົດປີ. ໃນນັ້ນປະມານ 40 ສ່ວນຮ້ອຍແມ່ນ ການຕັດລາຍຈ່າຍລົງທຶນພາກລັດ ແລະ ສ່ວນທີ່ເຫຼືອແມ່ນການຕັດລາຍຈ່າຍບໍລິຫານປົກກະຕິ. ນີ້ສົ່ງຜົນໃຫ້ການຂາດດຸນງົບປະມານຫຼຸດລົງມາເປັນປະມານ 4,3 ສ່ວນຮ້ອຍຕໍ່ GDP ທຽບໃສ່ 6 ສ່ວນຮ້ອຍ ໃນສົກປີກ່ອນ. ເຖິງຢ່າງໃດກໍ່ຕາມ ຖານະການເງິນຂອງລັດຖະບານກໍ່ຍັງມີຄວາມຫຍຸ້ງຍາກຢູ່ເນື່ອງຈາກຄວາມຈຳເປັນໃນການຊຳລະໜີ້ສິນສະສົມຂອງພາກລັດໃນຂະນະນັ້ນ. ການຂາດດຸນງົບປະມານຄາດວ່າຈະຫຼຸດລົງອີກເລັກນ້ອຍເປັນປະມານ 4,2 ສ່ວນຮ້ອຍຕໍ່ GDP ໃນສົກປີ 2014/15. ລັດຖະບານໄດ້ວາງແຜນຈຳກັດການເພີ່ມຂຶ້ນຂອງລາຍຈ່າຍລວມຂອງພາກລັດປະມານ 7 ສ່ວນຮ້ອຍ ທຽບໃສ່ສົກປີຜ່ານມາ ເຊິ່ງສ່ວນໜຶ່ງກໍ່ແມ່ນຍ້ອນການຫຼຸດຜ່ອນຈຳນວນພະນັກງານເຂົ້າໃໝ່, ຮັກສາດັດຊະນີເງິນເດືອນຄົງທີ່. ນອກຈາກນີ້, ການຄຸ້ມຄອງການເກັບລາຍຮັບກໍ່ຄາດວ່າຈະໄດ້ຮັບການປັບປຸງ ແລະ ກໍ່ໄດ້ມີແຜນເພີ່ມອາກອນຊົມໃຊ້ສຳລັບພາຫະນະ ແລະ ສິນຄ້າຟູມເຟືອຍ.

**5. ຄັງສຳຮອງເງິນຕາຕ່າງປະເທດ ທຽບກັບບັນດາຕົວຊີ້ວັດສົມທຽບ ຍັງຕໍ່າຢູ່ທຽບໃສ່ມາດຕະຖານການຄຸ້ມຄອງ.** ຄັງສຳຮອງຢູ່ໃນລະດັບ 815 ລ້ານໂດລາ ໃນເດືອນທັນວາ 2014 ເຊິ່ງເພີ່ມຂຶ້ນ 23 ສ່ວນຮ້ອຍ ທຽບໃສ່ທ້າຍປີ 2013 ເນື່ອງຈາກການໄຫຼເຂົ້າຂອງກະແສການລົງທຶນ ແລະ ການກູ້ຢືມຈາກຕ່າງປະເທດ. ເຖິງຢ່າງໃດກໍ່ຕາມ, ຄັງສຳຮອງສາມາດກຸ້ມການນຳເຂົ້າສິນຄ້າ ແລະ ການບໍລິການຕໍ່າກວ່າ 2 ເດືອນ ແລະ ປະມານ 28 ສ່ວນຮ້ອຍຂອງເງິນຝາກທີ່ເປັນເງິນຕາ. ລະດັບຂອງຕົວຊີ້ວັດດັ່ງກ່າວນີ້ສ່ອງແສງເຖິງຄວາມອ່ອນໄຫວຕໍ່ກໍລະນີເກີດວິກິດການ. ມາດຖານສາກົນຂອງລະດັບຄັງສຳຮອງແມ່ນເພື່ອກຸ້ມການນຳເຂົ້າສິນຄ້າ ແລະ ການບໍລິການໄດ້ 3-6 ເດືອນ. ດັ່ງນັ້ນ ການສະສົມຄັງສຳຮອງໃຫ້ຢູ່ໃນລະດັບພຽງພໍເພື່ອຮອງຮັບໃນກໍລະນີເກີດຄວາມສ່ຽງ ຈະຊ່ວຍຮັກສາສະຖຽນລະພາບຂອງເສດຖະກິດມະຫາພາກ. ການຄວບຄຸມລາຍຈ່າຍເພື່ອຫຼຸດຜ່ອນລະດັບຂາດດຸນງົບປະມານ ແລະ ການເພີ່ມຂຶ້ນຂອງສິນເຊື່ອທີ່ຊ້າລົງແລະທ່າອຽງການອ່ອນຄ່າຂອງເງິນກີບຈະຊ່ວຍຫຼຸດຜ່ອນຄວາມຕ້ອງການພາຍໃນສຳລັບການນຳເຂົ້າເຊິ່ງກໍ່ຈະຊ່ວຍຫຼຸດຜ່ອນຄວາມຕ້ອງການນຳໃຊ້ເງິນຕາ. ນອກຈາກນັ້ນ, ລາຄານ້ຳມັນໃນຕະຫຼາດສາກົນທີ່ຫຼຸດລົງ ເຊິ່ງກໍ່ໄດ້ຫຼຸດລົງ 8 ສ່ວນຮ້ອຍສະເລ່ຍໝົດປີ 2014 ທຽບໃສ່ປີກ່ອນ ກໍ່ຄາດວ່າຈະມີຜົນດີຕໍ່ດຸນການຄ້າແລະດຸນຊຳລະກັບຕ່າງປະເທດຍ້ອນວ່າການນຳເຂົ້ານ້ຳມັນກວມເອົາເກືອບ 20 ສ່ວນຮ້ອຍຂອງການນຳເຂົ້າທັງໝົດ ຂອງ ສປປ ລາວ.

**6. ອັດຕາແລກປ່ຽນຍັງຄົງມີຄວາມໝັ້ນທ່ຽງຢູ່ໃນຂອບການເໜັງຕີງທີ່ທະນາຄານແຫ່ງ ສປປ ລາວ ໄດ້ວາງອອກ ແຕ່ອັດຕາແລກປ່ຽນຕົວຈິງຍັງສືບຕໍ່ແຂງຄ່າ.** ໃນປີ 2014, ເງິນກີບອ່ອນຄ່າ 2,7 ສ່ວນຮ້ອຍ ທຽບກັບ ເງິນໂດລາ ແລະ ແຂງຄ່າ 2,3 ສ່ວນຮ້ອຍ ທຽບກັບເງິນບາດ. ເຖິງຢ່າງໃດກໍ່ຕາມ, ຍ້ອນອັດຕາເງິນເຟີ້ໃນ ສປປ ລາວ ສູງກວ່າໃນບັນດາປະເທດຄູ່ຄ້າເຮັດໃຫ້ອັດຕາແລກປ່ຽນຕົວຈິງຍັງສືບຕໍ່ແຂງຄ່າ. ອັດຕາແລກປ່ຽນຕົວຈິງຂອງເງິນກີບໄດ້ແຂງຄ່າກວ່າ 30 ສ່ວນຮ້ອຍໃນໄລຍະຫ້າປີຜ່ານມາເຊິ່ງກໍ່ໄດ້ກະທົບຄວາມສາມາດໃນການແຂ່ງຂັນຂອງສິນຄ້າສົ່ງອອກຂອງ ສປປ ລາວ ແລະເຮັດໃຫ້ການນຳເຂົ້າມີລາຄາທີ່ຖືກລົງທຽບຖານ ເຊິ່ງກໍ່ເປັນການກົດດັນຕໍ່ຄວາມຕ້ອງການນຳໃຊ້ຄັງສຳຮອງເງິນຕາຕ່າງປະເທດ.

**7. ອັດຕາການຂະຫຍາຍຕົວຂອງສິນເຊື່ອໃນປີ 2014 ມີຈັງຫວະທີ່ຊ້າລົງທຽບກັບຫຼາຍປີທີ່ຜ່ານມາ.** ຫຼັງຈາກທີ່ການປ່ອຍສິນເຊື່ອໄດ້ເພີ່ມຂຶ້ນ ສະເລ່ຍສູງກວ່າ 50 ສ່ວນຮ້ອຍຕໍ່ປີ ໃນລະຫວ່າງ 2008-13, ອັດຕາການຂະຫຍາຍຕົວດັ່ງກ່າວກໍ່ໄດ້ຫຼຸດລົງເປັນ 14 ສ່ວນຮ້ອຍໃນທ້າຍປີ 2014. ເຖິງວ່າອັດຕາການປ່ອຍສິນເຊື່ອຊະລໍຕົວລົງແຕ່ກໍ່ຍັງມີຄວາມເປັນຫ່ວງຕໍ່ຄວາມເຂັ້ມແຂງຂອງຂະແໜງການເງິນການທະນາຄານໂດຍລວມ. ການເພີ່ມຂຶ້ນໄວຂອງລະດັບສິນເຊື່ອໃນຊຸມປີຜ່ານມາໄດ້ເຮັດໃຫ້ວຽກງານການຄຸ້ມຄອງຂະແໜງການເງິນ ແລະ ທະນາຄານປະສົບກັບຄວາມທ້າທາຍ. ອັດຕາໜີ້ສິນທີ່ບໍ່ເກີດດອກອອກຜົນເພີ່ມຂຶ້ນຢ່າງຈະແຈ້ງໃນເຄິ່ງປີ 2014 ເຊິ່ງອັດຕາດັ່ງກ່າວສະເລ່ຍສຳລັບກຸ່ມທະນາຄານທລະກິດລັດກໍ່ໄດ້ເພີ່ມຂຶ້ນຈາກລະດັບຕໍ່າກວ່າ 3 ສ່ວນຮ້ອຍ ໃນທ້າຍປີ 2013 ເປັນປະມານ 8 ສ່ວນຮ້ອຍ ໃນກາງປີ 2014 ແລະອັດຕາສ່ວນຄວາມພຽງພໍຂອງທຶນເຊິ່ງ ແມ່ນອັດຕາສ່ວນທຶນຕໍ່ຊັບສິນຫຼຸດລົງເປັນປະມານ 3 ສ່ວນຮ້ອຍ ເຊິ່ງກໍ່ໄດ້ເພີ່ມຄວາມໜ້າເປັນຫ່ວງຕໍ່ຄວາມເຂັ້ມແຂງຂອງຂະແໜງການດັ່ງກ່າວ ແລະ ຄວາມເປັນໄປໄດ້ທີ່ຈະກໍ່ໃຫ້ເກີດໜີ້ໃນອະນາຄົດ.

## ຫົວຂໍ້ສະເພາະ

### *I. ຄວາມໝາຍຂອງການເຂົ້າເປັນສະມາຊິກປະຊາຄົມເສດຖະກິດອາຊຽນ 2015 ຕໍ່ ສປປ ລາວ*

8. ການເລີ່ມຕົ້ນຈັດຕັ້ງປະຕິບັດປະຊາຄົມເສດຖະກິດອາຊຽນໃນປີ 2015 ຄາດວ່າຈະສ້າງກາລະໂອກາດໃໝ່ໃຫ້ແກ່ ສປປ ລາວ ແຕ່ເພື່ອສາມາດນຳໃຊ້ກາລະໂອກາດດັ່ງກ່າວການປະຕິຮູບນະໂຍບາຍດ້ານການຄ້າ ແລະ ການລົງທຶນ ແລະ ການຈັດຕັ້ງປະຕິບັດຂໍ້ຕົກລົງໃນກອບດັ່ງກ່າວແມ່ນມີຄວາມຈຳເປັນ. ການສົ່ງອອກຂອງ ສປປ ລາວ ສ່ວນຫຼາຍມາຈາກການສົ່ງອອກໄຟຟ້າແລະແຮ່ທາດ ຍ້ອນວ່າຂະແໜງອື່ນໆນອກຈາກຊັບພະຍາກອນທຳມະຊາດຍັງປະສົບກັບສະພາບແວດລ້ອມການດຳເນີນທຸລະກິດທີ່ຍັງມີຕົ້ນທຶນສູງ ແລະ ສະມັດຕະພາບແຮງງານຕໍ່າ. ການຄ້າ ແລະ ການລົງທຶນໃນຂະແໜງທີ່ບໍ່ແມ່ນຊັບພະຍາກອນທຳມະຊາດຄາດວ່າຈະບໍ່ເພີ່ມຂຶ້ນຢ່າງໄວວາໃນໄລຍະສັ້ນເນື່ອງຈາກອຸປະສັກຕໍ່ການຜະລິດ ແລະ ຕໍ່ຄວາມສາມາດແຂ່ງຂັນຂອງພາກເອກະຊົນ (ຂາດແຮງງານທີ່ມີສີມື, ຂາດແຮງງານໂດຍລວມ, ຕົ້ນທຶນການຄ້າ ແລະ ການດຳເນີນທຸລະກິດທີ່ຍັງສູງ). ຜົນກະທົບໄລຍະສັ້ນອາດແມ່ນການເພີ່ມຂຶ້ນຂອງການນຳເຂົ້າສິນຄ້າບໍລິໂພກຍ້ອນລາຄາຂອງສິນຄ້ານຳເຂົ້າອາດຖືກລົງ. ແຕ່ ສປປ ລາວ ກໍ່ອາດຈະສາມາດສ້າງກາລະໂອກາດສຳລັບການລົງທຶນໃໝ່ຍ້ອນຕົ້ນທຶນການນຳເຂົ້າອາດຈະຫຼຸດລົງ ແລະ ການເຄື່ອນຍ້າຍຂອງແຮງງານຕ່າງດ້າວທີ່ມີວິຊາສະເພາະທີ່ໄດ້ຮັບການອະນຸຍາດ ເຊິ່ງ ສປປ ລາວ ຍັງຂາດຢູ່.

9. ເພື່ອໃຫ້ສາມາດເຂົ້າເຖິງໂອກາດໃໝ່ດັ່ງກ່າວ ແລະ ນຳໃຊ້ຜົນປະໂຫຍດທີ່ເກີດພັນກັບການເຊື່ອມໂຍງເຂົ້າໃນພາກພື້ນຍັງມີຄວາມຈຳເປັນສຳລັບ ສປປ ລາວ ໃນການສືບຕໍ່ປັບປຸງບັນຍາກາດການລົງທຶນ. ບາດກ້າວທີ່ສຳຄັນ ລວມມີ : i) ສືບຕໍ່ການປະຕິຮູບ ດ້ານນະໂຍບາຍ ແລະ ກົດລະບຽບ; ii) ຮັບປະກັນການຈັດຕັ້ງປະຕິບັດຂໍ້ຕົກລົງໃນກອບການເຊື່ອມໂຍງຢ່າງມີປະສິດທິຜົນ ໃນວຽກງານການອຳນວຍຄວາມສະດວກດ້ານການຄ້າ ແລະ ອຸປະສັກຕໍ່ການຄ້າທີ່ບໍ່ແມ່ນພາສີເພື່ອຫຼຸດຜ່ອນຕົ້ນທຶນຕໍ່ການຄ້າ; iii) ສ້າງ ແລະ ໃຫ້ການຮັບຮູ້ຕໍ່ມາດຕະຖານລະດັບສີມື ແລະ ໃບປະກາດຂອງສາຍອາຊີບ ທີ່ຢູ່ໃນກອບຂໍ້ຕົກລົງຂອງປະຊາຄົມ; iv) ປັບປຸງສີມືແຮງງານ v) ສ້າງລະບອບ ແລະ ນະໂຍບາຍສົ່ງເສີມການລົງທຶນທີ່ໂປ່ງໃສ ແລະ ບໍ່ມີການຈຳແນກ ແລະ vi) ສົ່ງເສີມການລົງທຶນທີ່ມີຄຸນນະພາບ. ຕົວຢ່າງລວມມີຄວາມຕ້ອງການອັນຮີບດ່ວນໃນການທົບທວນລະບົບການຂໍອະນຸຍາດດຳເນີນທຸລະກິດເປັນລະບົບທັນສະໄໝທີ່ຈະຊ່ວຍໃຫ້ຂັ້ນຕອນສອດຄ່ອງກັນ, ປະຢັດເວລາ, ໂປ່ງໃສ ແລະ ມີຄວາມແນ່ນອນ. ການປະຕິຮູບລົງລວງເລິກດັ່ງກ່າວແມ່ນມີຄວາມສຳຄັນຕໍ່ການດຳເນີນທຸລະກິດໃນ ສປປ ລາວ ໃຫ້ເປັນໄປບົນພື້ນຖານມາດຖານກົດລະບຽບອັນດຽວກັນແລະເພື່ອແນໃສ່ການປັບປຸງຄວາມສາມາດໃນການແຂ່ງຂັນຂອງພາກເອກະຊົນຂອງ ສປປ ລາວ ອີກດ້ວຍ.

---

1. *ອາຊີບທີ່ອະນຸຍາດໃຫ້ເຄື່ອນຍ້າຍສະດວກໃນກອບ AEC ລວມມີເອົາພຽງແຕ່ ອາຊີບນາງພະຍາບານ, ນັກອອກແບບ, ວິສະວະກອນ, ນັກການປາ, ໝໍປົວແຂ້ວ, ນັກບັນຊີ ແລະ ນັກສຳຫຼວດເທົ່ານັ້ນ.*

## *II. ເສີມຂະຫຍາຍການສ້າງວຽກເຮັດງານທຳຢ່າງມີສະມັດຕະພາບ ເພື່ອການເຕີບໂຕຢ່າງກວ້າງຂວາງ*

10. ເພື່ອຊຸກຍູ້ໃຫ້ເສດຖະກິດມີການຂະຫຍາຍຕົວແບບມີຖານກວ້າງຂວາງ ແລະ ໝັ້ນຄົງ, ທຸກຄົນສາມາດປະກອບສ່ວນໃນການຂະຫຍາຍຕົວດັ່ງກ່າວ ແລະ ໄດ້ຮັບຜົນປະໂຫຍດເພື່ອກ້າວໄປເຖິງການຫຼຸດຜ່ອນຄວາມທຸກຍາກ ແມ່ນມີຄວາມຈຳເປັນໃນການແກ້ໄຂບັນຫາສຳຄັນເລື່ອງສີມື ແລະ ຜະລິດຕະພາບຂອງແຮງງານ. ແຮງງານສ່ວນຫຼາຍຍັງເຮັດວຽກໃນຂະແໜງກະສິກຳເຊິ່ງຜະລິດຕະພາບແຮງງານຍັງຕ່ຳ. ດັ່ງນັ້ນຈຶ່ງເຮັດໃຫ້ຄວາຕ້ອງການແຮງງານຫຼາຍໃນຂະແໜງກະສິກຳ ແລະ ການເຄື່ອນຍ້າຍຂອງແຮງງານຈາກຂະແໜງກະສິກຳໄປຂະແໜງອື່ນໆຍັງມີຈຳກັດ. ການເຄື່ອນຍ້າຍຂອງແຮງງານຍັງຖືກຈຳກັດໂດຍຄວາມຈຳກັດຂອງຕຳແໜ່ງງານໃນຂະແໜງອື່ນໆນອກຈາກກະສິກຳທີ່ສາມາດໃຫ້ຄ່າຕອບແທນສູງກວ່າ ແລະ ມີຜະລິດຕະພາບສູງກວ່າ ເຊິ່ງສ່ວນໜຶ່ງກໍ່ເປັນຍ້ອນອຸປະສັກຕໍ່ການສ້າງຕັ້ງ ແລະ ດຳເນີນທຸລະກິດ. ເຖິງແມ່ນວ່າການຂະຫຍາຍຕົວຂອງເສດຖະກິດຈະຢູ່ໃນລະດັບທີ່ສູງໃນທົດສະຫວັດທີ່ຜ່ານມາ ເຊິ່ງສ່ວນໜຶ່ງກໍ່ຍ້ອນການພັດທະນາຂະແໜງຊັບພະຍາກອນທຳມະຊາດ ແຕ່ການສ້າງວຽກເຮັດງານທຳໃນຂະແໜງດັ່ງກ່າວແມ່ນມີຄວາມຈຳກັດຫຼາຍ. ບັນຫາກ່ຽວກັບສີມືແຮງງານ ບໍ່ພຽງແຕ່ຕິດພັນກັບສີມືດ້ານວິຊາຊີບເທົ່ານັ້ນແຕ່ມັນຍັງມາຈາກການຂາດທັກສະພື້ນຖານໃນການອ່ານ ແລະ ການຄິດໄລ່ຕັ້ງແຕ່ໄວເດັກ. ດັ່ງນັ້ນ, ຕໍ່ກັບບັນຫາທີ່ກ່າວມານັ້ນ ວຽກງານການປັບປຸງຜະລິດຕະພາບໃນຂະແໜງກະສິກຳຖືເປັນບູລິມະສິດສຳລັບການປັບປຸງຊີວິດການເປັນຢູ່ ແລະ ຫຼຸດຜ່ອນຄວາມທຸກຍາກ ເນື່ອງຈາກວ່າມັນຈະຊ່ວຍເພີ່ມລາຍຮັບໃຫ້ຊາວກະສິກອນ ແລະ ຊ່ວຍຫຼຸດຜ່ອນຄວາມທຸກຍາກ ເຊິ່ງສຸດທ້າຍຈະຕ້ອງການແຮງງານທຳການຜະລິດໜ້ອຍລົງ ແລະ ສາມາດຊ່ວຍໃຫ້ແຮງງານບາງຈຳນວນສາມາດຊອກຫາວຽກໃນຂະແໜງອື່ນໆທີ່ສາມາດໃຫ້ຜົນຕອບແທນສູງກວ່ານອກຈາກຂະແໜງກະສິກຳ. ໃນຂະນະດຽວກັນ, ການສົ່ງເສີມດັ່ງກ່າວກໍ່ຄວນໄປຄຽງຄູ່ກັນກັບການປັບປຸງຜະລິດຕະພາບໃນຂະແໜງອື່ນໆນອກຈາກກະສິກຳ ແລະ ການເຮັດໃຫ້ຂັ້ນຕອນການສ້າງແລະດຳເນີນທຸລະກິດມີຄວາມສອດຄ່ອງໄປໃນລວງດຽວເພື່ອໃຫ້ພາກເອກະຊົນມີຄວາມຫຼາກຫຼາຍ ແລະ ສາມາດສ້າງວຽກເຮັດງານທຳຕື່ມອີກ. ໃນດ້ານການສະໜອງ, ການປັບປຸງການສຶກສາເດັກກ່ອນໄວຮຽນແລະທັກສະຄວາມຮູ້ໜັງສື ແລະ ການສ້າງທັກສະວິຊາສະເພາະທີ່ເປັນທີ່ຕ້ອງການຂອງໜ້າວຽກແມ່ນມີຄວາມສຳຄັນ.

## ສະພາບເສດຖະກິດມະຫາພາກໂດຍຫຍໍ້

### ການເຕີບໂຕຂອງເສດຖະກິດຊ້າລົງໃນປີ 2014 ແຕ່ຍັງຖືວ່າເຂັ້ມແຂງຢູ່…

ສ່ວນຮ້ອຍປ່ຽນແປງທຽບໃສ່ປີກາຍ




*ແຫຼ່ງຂໍ້ມູນ: ລັດຖະບານ, ສະພາການຄ້າແລະການປະເມີນຂອງທີມງານທະນາຄານໂລກ*

### ອັດຕາເງິນເຟີ້ກໍ່ຫຼຸດລົງເນື່ອງຈາກລາຄາໝວດສະບຽງອາຫານເພີ່ມຂຶ້ນຊ້າລົງ ແລະ ລາຄານ້ຳມັນຫຼຸດລົງ

ສ່ວນຮ້ອຍປ່ຽນແປງທຽບໃສ່ປີກາຍ




*ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດແລະການຄິດໄລ່ຂອງທະນາຄານໂລກ*

### ການຫຼຸດຜ່ອນການຂາດດຸນງົບປະມານເລີ່ມແຕ່ສົກປີ 2013/14

ສ່ວນຮ້ອຍຕໍ່ GDP




*ແຫຼ່ງຂໍ້ມູນ: ກະຊວງການເງິນແລະການປະເມີນຂອງທີມງານທະນາຄານໂລກ*

### ຜົນສ່ວນຫຼາຍແມ່ນຍ້ອນມາດຕະການດ້ານລາຍຈ່າຍ

ສ່ວນຮ້ອຍຕໍ່ GDP




*ແຫຼ່ງຂໍ້ມູນ: ກະຊວງການເງິນແລະການປະເມີນຂອງທີມງານທະນາຄານໂລກ*

### ຄັງສຳຮອງທຽບກັບຕົວທຽບຍັງຢູ່ໃນລະດັບຕ່ຳຢູ່




*ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ ແລະ ການປະເມີນຂອງທີມງານທະນາຄານໂລກ*

### ເຖິງແມ່ນວ່າສິນເຊື່ອຈະຂະຫຍາຍຕົວຊ້າລົງ ແຕ່ຄວາມສ່ຽງສຳລັບຂະແໜງການທະນາຄານກໍ່ຍັງຄົງຢູ່




*ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ ແລະ ການປະເມີນຂອງທີມງານທະນາຄານໂລກ*

**ການຄ້າຂອງ ສປປ ລາວ ໄດ້ມີການເຊື່ອມໂຍງຫຼາຍຂຶ້ນ ແຕ່ສ່ວນຫຼາຍຍັງແມ່ນຈາກຊັບພະຍາກອນທຳມະຊາດ...**

ອັດຕາສ່ວນການສົ່ງອອກແລະນຳເຂົ້າສິນຄ້າແລະການບໍລິການຕໍ່ GDP




*ແຫຼ່ງຂໍ້ມູນ: ກະຊວງການຄ້າ, ຄູ່ຄ້າແລະການປະເມີນຂອງທີມງານທະນາຄານໂລກ*

**...ແລະຕົ້ນທຶນໃນການຄ້າກໍ່ຍັງສູງຢູ່**

ຄ່າຂົນສົ່ງນຳເຂົ້າແລະສົ່ງອອກຕໍ່ 1 ຕູ້ຄອນເທນເນີ (ໂດລາຕໍ່ຕູ້ຄອນເທນເນີ)




*ແຫຼ່ງຂໍ້ມູນ: ບົດລາຍງານ Doing Business 2013, 2014, 2015*

*ໝາຍເຫດ: ຕົ້ນທຶນໃນການເຮັດການຄ້າລວມທັງຄ່າຂົນສົ່ງສຳລັບການນຳເຂົ້າ ແລະ ສົ່ງອອກຕໍ່ 1 ຕູ້ຄອນເທນເນີ*

**...ນອກຈາກນັ້ນຍັງຂາດແຮງງານທີ່ມີສີມື ແລະ ຜະລິດຕະພາບແຮງງານຍັງຕ່ຳລວມທັງຢູ່ໃນຂະແໜງກະສິກຳທີ່ມີແຮງງານເຮັດວຽກເປັນຈຳນວນຫຼາຍ ...**

ໂຄງປະກອບຂອງເສດຖະກິດຕາມເວລາທີ່ໃຊ້ໃນແຕ່ລະຂະແໜງການ (ສ່ວນຮ້ອຍໃນທັງໝົດ)




*ແຫຼ່ງຂໍ້ມູນ: ບົດລາຍງານການພັດທະນາລາວ 2014 ອີງຕາມຂໍ້ມູນສຳຫຼວດການຊົມໃຊ້ແລະລາຍຈ່າຍຂອງຄົວເຮືອນ ຄັ້ງທີ່ 5*

**ບັນຫາດັ່ງກ່າວອາດບໍ່ພຽງແຕ່ຕິດພັນກັບການຝຶກອົບຮົມວິຊາຊີບແຕ່ຍັງຕິດພັນກັບຄວາມຈຳເປັນໃນການປັບປຸງທັກສະການຮູ້ໜັງສືຕັ້ງແຕ່ການສຶກສາໃນໄວເດັກອີກດ້ວຍ**

ຄະແນນຈາກການທົດສອບຄວາມຮູ້ໜັງສືແບບພື້ນຖານ (ຄະແນນແຕ່ 0-8) ສຳລັບນັກຮຽນທີ່ມີລະດັບການສຶກສາຕ່າງໆ




*ແຫຼ່ງຂໍ້ມູນ: ບົດລາຍງານການພັດທະນາ ສປປ ລາວ 2014*

# ພາກທີ 1: ສະພາບຂອງເສດຖະກິດໃນໄລຍະຫຼ້າສຸດ



*Photo by Remy Rossi / World Bank, 2013*

## ສະພາບເສດຖະກິດໃນພາກພື້ນ

**1. ເສດຖະກິດໂລກໄດ້ມີທ່າທີວ່າຈະຟື້ນຕົວຂຶ້ນແຕ່ກໍ່ຍັງຄົງບໍ່ສະໝ່ຳສະເໝີໃນແຕ່ລະພາກພື້ນ. ເສດຖະກິດໂລກໄດ້ຂະຫຍາຍຕົວປະມານ 2,6 ສ່ວນຮ້ອຍໃນປີ 2014 ແລະ ຄາດວ່າຈະສືບຕໍ່ຂະຫຍາຍຕົວອີກ 3 ສ່ວນຮ້ອຍໃນປີ 2015.** ການຟື້ນຕົວຂອງກິດຈະກຳດ້ານເສດຖະກິດໃນບັນດາປະເທດທີ່ມີລາຍຮັບສູງຈະຊ່ວຍກະຕຸ້ນຄວາມຕ້ອງການຕໍ່ການນຳເຂົ້າສິນຄ້າຈາກປະເທດທີ່ກຳລັງພັດທະນາໃນພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ ເຊິ່ງຈະຊ່ວຍໃຫ້ພາກພື້ນດັ່ງກ່າວສາມາດຮັກສາການເຕີບໂຕໄວ້ໄດ້. ການເຕີບໂຕໂດຍລວມຂອງບັນດາປະເທດກຳລັງພັດທະນາໃນອາຊີຕາເວັນອອກ ແລະ ປາຊີຟິກຊະລໍຕົວລົງເປັນ 6,9 ສ່ວນຮ້ອຍໃນປີ 2014 ແລະ ຄາດວ່າອາດຈະສືບຕໍ່ຊ້າລົງອີກເນື່ອງຈາກການຊະລໍຕົວເລັກນ້ອຍຂອງເສດຖະກິດຈີນ. ເຖິງຢ່າງໃດກໍ່ຕາມ ແຕ່ການເຕີບໂຕໃນພາກພື້ນນີ້ກໍ່ຍັງໄວກວ່າໝູ່ (ເບິ່ງເອກະສານຊ້ອນທ້າຍ 2 ສຳລັບການຄາດຄະເນອັດຕາການເຕີບໂຕ).

**2. ສຳລັບທ່າອ່ຽງຕໍ່ໄປໃນໄລຍະສັ້ນ, ການຊະລໍຕົວເລັກນ້ອຍຂອງເສດຖະກິດຈີນຄາດວ່າຈະຊົດເຊີຍກັບການຟື້ນຕົວຂອງເສດຖະກິດປະເທດອື່ນໆໃນພາກພື້ນ.** ການເຕີບຂອງເສດຖະກິດຈີນຊະລໍຕົວລົງເປັນ 7,4 ສ່ວນຮ້ອຍ ໃນປີ 2014 ແລະ ຄາດວ່າຈະຢູ່ໃນລະດັບ 7,1 ສ່ວນຮ້ອຍ ໃນປີ 2015 ຍ້ອນຄວາມເອົາຈິງເອົາຈັງໃນການປະຕິບັດນະໂຍບາຍການແກ້ບັນຫາຄວາມສ່ຽງຕໍ່ພາກການເງິນແລະຄວາມຈຳກັດດ້ານໂຄງສ້າງ ແລະ ກໍ່ທິດທາງທີ່ຈະປັບປຸງເສດຖະກິດໃຫ້ໄປຕາມທິດທາງທີ່ມີຄວາມຍືນຍົງຫຼາຍຂຶ້ນ. ມາດຕະການຄວບຄຸມໜີ້ສິນຂອງລັດຖະບານທ້ອງຖິ່ນໃນຈີນ, ການຄວບຄຸມຂະແໜງການເງິນທີ່ບໍ່ເປັນທາງການ, ການຈັດການຄວາມສາມາດຜະລິດທີ່ສູງເກີນໄປ ແລະ ຄວາມຕ້ອງການນຳໃຊ້ພະລັງງານຫຼາຍ ແລະ ມົນລະພິດທີ່ຖືກສ້າງຂຶ້ນ ຈະເຮັດໃຫ້ການລົງທຶນ ແລະ ການຜະລິດສິນຄ້າອຸດສາຫະກຳຊະລໍຕົວລົງ. ຖ້າບໍ່ລວມຈີນ ການຂະຫຍາຍຕົວຂອງພາກພື້ນຈະຢູ່ໃນລະດັບຕ່ຳສຸດທີ່ 4,6 ສ່ວນຮ້ອຍໃນປີ 2014 ຍ້ອນການຊະລໍຕົວຂອງເສດຖະກິດອິນໂດເນເຊຍແລະໄທ ກ່ອນທີ່ຈະຟື້ນຕົວເປັນປະມານ 5,2 ສ່ວນຮ້ອຍໃນປີ 2015. ການເຕີບໂຕດັ່ງກ່າວ ທີ່ບໍ່ລວມເອົາຈີນຄາດວ່າຈະຄ່ອຍໆຟື້ນຕົວຂຶ້ນຍ້ອນການສົ່ງອອກທີ່ເພີ່ມຂຶ້ນແລະຄາດວ່ານະໂຍບາຍການປັບເສດຖະກິດພາຍໃນຂອງບັນດາປະເທດເສດຖະກິດໃຫຍ່ໃນອາຊຽນຈະຄ່ອຍຜ່ອນຄາຍລົງ. ເຖິງຢ່າງໃດກໍ່ຕາມ, ຄວາມສາມາດຂອງແຕ່ລະປະເທດໃນການນຳໃຊ້ໂອກາດຈາກການຟື້ນຕົວຂອງເສດຖະກິດໂລກກໍ່ຈະແຕກຕ່າງກັນ ເຊິ່ງກໍ່ຂຶ້ນກັບອຸປະສັກຕໍ່ການລົງທຶນ, ຄວາມສາມາດແຂ່ງຂັນຂອງການສົ່ງອອກແລະລາຄາຂອງສິນຄ້າສົ່ງອອກທີ່ຫຼຸດລົງໂດຍສະເພາະສຳລັບບັນດາປະເທດທີ່ສົ່ງອອກແຮ່ທາດ ແລະ ໂລຫະ.

**3. ການຟື້ນຕົວຂອງເສດຖະກິດໃນປະເທດທີ່ມີລາຍຮັບສູງຍັງມີຄວາມບໍ່ແນ່ນອນວ່າມີຄວາມແຂງແຮງ ແລະ ຍືນຍົງປານໃດ ແລະ ກໍ່ຍັງບໍ່ແນ່ນອນກ່ຽວກັບກອບເວລາທີ່ທະນາຄານກາຂອງບັນດາປະເທດດັ່ງກ່າວຈະປັບນະໂຍບາຍເງິນຕາ.** ຄວາມສ່ຽງຕົ້ນຕໍການເຕີບໂຕໃນພາກພື້ນແມ່ນວ່າການຟື້ນຕົວຂອງເສດຖະກິດໂລກເຊິ່ງໃນນັ້ນແມ່ນຄວາມຕ້ອງການນຳເຂົ້າຂອງປະເທດທີ່ພັດທະນາແລ້ວ ຕໍ່ສິນຄ້າສົ່ງອອກປະເທດທີ່ກຳລັງພັດທະນາອາດຈະຊ້າກວ່າທີ່ຄາດໄວ້ໃນເບື້ອງຕົ້ນ. ນອກຈາກນັ້ນ, ສະພາບການເງິນສາກົນອາດຈະຮັດກຸມຂຶ້ນດ້ວຍການ

ເພີ່ມດອກເບ້ຍໃນບາງປະເທດ ແລະ ຄວາມບໍ່ແນ່ນອນດ້ານການເງິນອາດເພີ່ມສູງຂຶ້ນ ໂດຍສະເພາະຖ້າວ່າສະພາບຄວາມບໍ່ສະຫງົບດ້ານພູມສາດການເມືອງຍິ່ງເພີ່ມທະວີຂຶ້ນ ກໍ່ຈະເຮັດໃຫ້ຄວາມສາມາດໃນການຊໍາລະໜີ້ສິນຂອງບາງປະເທດພົບກັບຄວາມຫຍຸ້ງຍາກ. ຕິດພັນກັບນີ້ ລາຄາຂອງອະສັງຫາລິມະຊັບໃນບາງປະເທດກໍ່ອາດຈະຖືກກະທົບອີກດ້ວຍ.

*ແຫຼ່ງຂໍ້ມູນ: ບົດລາຍງານເສດຖະກິດພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ ເດືອນຕຸລາ 2014, ບົດລາຍງານເສດຖະກິດໂລກ ມັງກອນ 2015*

## ການພັດທະນາເສດຖະກິດໃນ ສປປ ລາວ ໃນໄລຍະມໍ່ໆມານີ້

### *ການເຕີບໂຕຂອງເສດຖະກິດ*

1. ການປະເມີນເບື້ອງຕົ້ນຄາດວ່າການຂະຫຍາຍຕົວຂອງເສດຖະກິດໃນປີ 2014 ຢູ່ໃນລະດັບ 7,5 ສ່ວນຮ້ອຍເຊິ່ງຫຼຸດລະດັບສະເລ່ຍ 8 ສ່ວນຮ້ອຍໃນລະຫວ່າງປີ 2011-2013 ເນື່ອງຈາກການຊະລໍຕົວຂອງບາງຂະແໜງການເສດຖະກິດ ແລະ ການຮັດກຸມດ້ານງົບປະມານ (ຮູບສະແດງ 1). ໃນດ້ານການຜະລິດ ປັດໄຈຕົ້ນຕໍໃນການຂັບເຄື່ອນເສດຖະກິດໃນປີ 2014 ແມ່ນມາຈາກຂະແໜງກໍ່ສ້າງແລະຂະແໜງທີ່ຕິດພັນກັບການກໍ່ສ້າງ ເຊິ່ງສ່ວນໜຶ່ງກໍ່ໄດ້ຮັບການກະຕຸ້ນຈາກການລົງທຶນໃນຂະແໜງຊັບພະຍາກອນທໍາມະຊາດ ແລະ ຜົນປະໂຫຍດດ້ານເສດຖະກິດຕໍ່ຂະແໜງທີ່ປັ່ນອ້ອມ. ນອກຈາກນີ້ ກໍ່ຍັງມີຂະແໜງປ່າໄມ້ (ທີ່ສະແດງອອກໃນການສົ່ງອອກໄມ້) ແລະ ຂະແໜງບໍລິການ (ຮູບສະແດງ 2). ເຖິງແມ່ນວ່າການປະກອບສ່ວນທາງກົງດ້ານຜົນຜະລິດ[2] ຈາກຂະແໜງຊັບພະຍາກອນຈະຫຼຸດລົງ ແຕ່ການກໍ່ສ້າງໂຄງການໃນຂະແໜງຊັບພະຍາກອນກໍ່ໄດ້ປະກອບສ່ວນທາງອ້ອມຕໍ່ຂະແໜງການກໍ່ສ້າງແລະບໍລິການ[3]. ແຕ່ການປະກອບສ່ວນໂດຍກົງຈາກຜົນຜະລິດໄຟຟ້າແມ່ນບໍ່ເພີ່ມຂຶ້ນຫຼາຍ

**ຮູບສະແດງ 1: ການເຕີບໂຕແລະອັດຕາເງິນເຟີ້**
(ການປ່ຽນແປງທຽບກັບປີກາຍ)




*ແຫຼ່ງຂໍ້ມູນ: ລັດຖະບານ, ສະພາອຸດສາຫະກໍາ ແລະ ການຄ້າ ແລະ ການຄໍານວນ ແລະ ຄາດຄະເນຂອງທີມງານທະນາຄານໂລກ*

**ຮູບສະແດງ 2: ການປະກອບສ່ວນຕໍ່ການເຕີບໂຕຂອງ GDP**
(ຈຸດສ່ວນຮ້ອຍ)




*ແຫຼ່ງຂໍ້ມູນ: ລັດຖະບານ, ສະພາອຸດສາຫະກໍາ ແລະ ການຄ້າ ແລະ ການຄໍານວນ ແລະ ຄາດຄະເນຂອງພະນັກງານທະນາຄານໂລກ*

---

2 *ການປະກອບສ່ວນທາງກົງແມ່ນການປະກອບສ່ວນຈາກຜົນຜະລິດທີ່ເພີ່ມຂຶ້ນຫຼືຫຼຸດລົງ (ຕົວຢ່າງ ຈໍານວນກີກາວັດໂມງທີ່ຖືກຜະລິດຫຼັງຈາກທີ່ໂຄງການເລີ່ມທໍາການຜະລິດ ຫຼື ຜົນຜະລິດແຮ່ທາດທີ່ເພີ່ມຂຶ້ນຈາກການຂະຫຍາຍຫຼືປັບປຸງໂຮງງານ). ການປະກອບສ່ວນທາງອ້ອມ ແມ່ນມາຈາກການກະຕຸ້ນກິດຈະກໍາໃນຂະແໜງການປັ່ນອ້ອມອື່ນໆ (ເຊັ່ນຂະແໜງບໍລິການ ແລະ ກໍ່ສ້າງ) ເຊິ່ງສ່ວນຫຼາຍໃນໄລຍະການກໍ່ສ້າງໂຄງການ.*

3 *ຂະແໜງຊັບພະຍາກອນທໍາມະຊາດລວມມີພະລັງງານໄຟຟ້າ ແລະ ບໍ່ແຮ່*

ຈາກປີກ່ອນຍ້ອນການຜະລິດສ່ວນຫຼາຍມາຈາກ ໂຄງການທີ່ມີຢູ່ແລ້ວ ແລະ ໂຄງການຂະໜາດນ້ອຍ. ການປະກອບສ່ວນຈາກຂະແໜງບໍ່ແຮ່ຕໍ່ການເຕີບໂຕລວມກໍ່ຫຼຸດລົງເນື່ອງຈາກຜົນຜະລິດຄຳຫຼຸດລົງ ເຊິ່ງເປັນຜົນມາຈາກລາຄາ ແລະ ປະລິມານແຮ່ທີ່ຫຼຸດລົງ. ເຖິງຢ່າງໃດກໍ່ຕາມ, ໂດຍລວມແລ້ວ ການກໍ່ສ້າງ ເຊິ່ງສ່ວນໜຶ່ງກໍ່ຕິດພັນກັບໂຄງການພະລັງງານໄຟຟ້າຂະໜາດໃຫຍ່[4] ທີ່ສ່ວນຫຼາຍເປັນການລົງທຶນຈາກຕ່າງປະເທດແມ່ນໄດ້ປະກອບສ່ວນທາງອ້ອມຕໍ່ຂະແໜງການກໍ່ສ້າງໂດຍລວມ ແລະ ຂະແໜງອື່ນທີ່ປິ່ນອ້ອມ ເຊິ່ງກໍ່ໄດ້ຊົດເຊີຍການຫຼຸດລົງຂອງການລົງທຶນພາກລັດຕົວຈິງຍ້ອນນະໂຍບາຍຮັດກຸມລາຍຈ່າຍ. ຂະແໜງປ່າໄມ້ (ສ່ວນຫຼາຍຕິດພັນກັບການສົ່ງອອກໄມ້) ແມ່ນໄດ້ປະກອບສ່ວນເພີ່ມຂຶ້ນຫຼາຍໃນປີ 2014 ເຊິ່ງສ່ອງແສງເຖິງການສົ່ງອອກໄມ້ທີ່ເພີ່ມຂຶ້ນປະມານ 60 ສ່ວນຮ້ອຍ ເປັນປະມານ 1,5ຕື້ໂດລາ ໄປປະເທດໃກ້ຄຽງ[5]. ດ້ານການບໍລິການກໍ່ຂະຫຍາຍຕົວແບບໝັ້ນທ່ຽງ ເຊິ່ງຖືກຂັບເຄື່ອນໂດຍການຄ້າຂາຍຍົກຂາຍຍ່ອຍ, ທະນາຄານ, ການຄົມມະນາຄົມ ແລະ ການສື່ສານເຊິ່ງສ່ວນໜຶ່ງກໍ່ຕິດພັນກັບຂະແໜງຊັບພະຍາກອນ.

**2. ທ່າອ່ຽງໃນປີ2015ຄາດວ່າການຂະຫຍາຍຕົວຈະຊ້າລົງກ່ອນທີ່ຈະເລັ່ງໄວຂຶ້ນໃນໄລຍະກາງ.** ການຄາດຄະເນດັ່ງກ່າວແມ່ນອີງໃສ່ສົມມຸດຖານທີ່ວ່າການລົງທຶນໃສ່ໂຄງການໃໝ່ໃນຂະແໜງພະລັງງານໄຟຟ້າຈະຍັງຄົງລະດັບສູງແຕ່ຂ້ອນຂ້າງຄົງທີ່ ແລະ ຜົນຂອງມາດຕະການຫລຸດຜ່ອນລາຍຈ່າຍເພື່ອຫຼຸດການຂາດດຸນງົບປະມານ ແລະ ການຂະຫຍາຍຕົວຂອງສິນເຊື່ອທີ່ຊ້າລົງ. ການເຕີບໂຕຕົວຈິງຄາດຄະເນວ່າຈະຢູ່ໃນລະດັບ 6,4 ສ່ວນຮ້ອຍໃນປີ 2015[6], ກ່ອນທີ່ຈະເລັ່ງຂຶ້ນໃນໄລຍະກາງ. ຈັງຫວະການຂະຫຍາຍຕົວທີ່ຊ້າລົງຍ້ອນນະໂຍບາຍຮັດກຸມດ້ານລາຍຈ່າຍດັ່ງກ່າວ (ຄວບຄຸມລາຍຈ່າຍ, ອັດຕາການຂະຫຍາຍຕົວຂອງສິນເຊື່ອທີ່ຊ້າລົງ) ຄາດວ່າຈະຊ່ວຍໃຫ້ເສດຖະກິດມະຫາພາກກັບຄືນສູ່ສະຖຽນລະພາບ ເນື່ອງຈາກສະພາບເສດຖະກິດມະຫາພາກໄດ້ປະສົບກັບຄວາມສ່ຽງຍ້ອນນະໂຍບາຍກະຕຸ້ນລາຍຈ່າຍໃນຊຸມປີຜ່ານມາ. ການຄາດຄະເນດັ່ງກ່າວກໍ່ຂຶ້ນກັບຄວາມສ່ຽງດ້ານບວກ ແລະ ດ້ານລົບ. ຄວາມສ່ຽງດ້ານລົບສຳລັບ ສປປ ລາວ ປະກອບມີຄວາມເປັນໄປໄດ້ທີ່ສະພາບຄວາມບໍ່ສະຫງົບໃນປະເທດໄທຈະກັບຄືນມາ ແລະ ນະໂຍບາຍເສດຖະກິດຂອງຈີນທີ່ຈະຊະລໍຕົວເລັກນ້ອຍເພື່ອປັບໃຫ້ເສດຖະກິດພັດທະນາໄປຕາມທິດທີ່ມີຄວາມຍືນຍົງ ເຊິ່ງກໍ່ອາດສົ່ງຜົນເຖິງການຄ້າ ແລະ ການລົງທຶນກັບບັນດາປະເທດຄູ່ຄ້າໃນນັ້ນລວມມີ ສປປ ລາວ. ແຕ່ໃນທາງກົງກັນຂ້າມ ຖ້າວ່າລາຄານ້ຳມັນສືບຕໍ່ຫຼຸດລົງ, ບັນດາໂຄງການພະລັງງານໄຟຟ້າສຳເລັດໄວກວ່າແຜນ ແລະ ບັນດາຂະແໜງການອື່ນໆນອກຈາກຊັບພະຍາກອນທຳມະຊາດຂະຫຍາຍຕົວດີກວ່າປີກາຍກໍ່ອາດຈະເປັນປັດໄຈດ້ານບວກທີ່ອາດຈະຊຸກຍູ້ໃຫ້ການຂະຫຍາຍຕົວສູງກວ່າລະດັບຄາດຄະເນດັ່ງກ່າວມາຂ້າງເທິງ ແລະ ໃກ້ຄຽງກັບເປົ້າໝາຍທີ່ລັດຖະບານໄດ້ວາງໄວ້. ການຂາດດຸນງົບປະມານກໍ່ຄາດວ່າຈະຫຼຸດລົງອີກເລັກນ້ອຍເປັນ 4,2 ສ່ວນຮ້ອຍຍ້ອນມາດຕະການຄວບຄຸມລາຍຈ່າຍ ໃນຂະນະທີ່ລາຍຮັບຕໍ່ GDP ຄາດວ່າຈະຢູ່ໃນລະດັບຄົງທີ່ເຖິງແມ່ນວ່າລາຍຮັບຈາກ

*4 ໂຄງການທີ່ກຳລັງດຳເນີນການກໍ່ສ້າງລວມມີ ໂຄງການຫົງສາລິກໄນ, ເຂື່ອນໄຊຍະບູລີ, ນ້ຳງຽບ 2, ນ້ຳອູ 2, 5, 6 ແລະ ເຊປ່ຽນເຊນ້ຳນ້ອຍ*

*5 ອີງຕາມຂໍ້ມູນຈາກປະເທດຄູ່ຄ້າ: www.customs-info.com/Trade/Commodity.aspx; www.customs.gov.vn*

*6 ການຄາດຄະເນດັ່ງກ່າວແມ່ນຢູ່ໃນລະຫວ່າງຕົ້ນຂອງອັດຕາການເຕີບໂຕທີ່ອາດຈະເປັນໄປໄດ້ ເພື່ອຄຳນຶງເຖິງຄວາມສ່ຽງດ້ານລົບທີ່ອາດສົ່ງຜົນຕໍ່ເສດຖະກິດ. ຖ້າປັດໄຈດ້ານບວກປະກົດຜົນເປັນຈິງ ກໍ່ຈະເຮັດໃຫ້ອັດຕາການເຕີບໂຕເພີ່ມຂຶ້ນ.*

ຊັບພະຍາກອນອາດຈະຫຼຸດລົງ. ດ້ານດຸນການຊຳລະກັບຕ່າງປະເທດກໍ່ຄາດວ່າດຸນຊຳລະປົກກະຕິຈະຍັງສືບຕໍ່ຂາດດຸນໃນລະດັບສູງເຊິ່ງສ່ວນໜຶ່ງກໍ່ຕິດພັນກັບການນຳເຂົ້າວັດຖຸສຳລັບໂຄງການລົງທຶນໃນຂະແໜງພະລັງງານໄຟຟ້າ ແລະ ດຸນຊຳລະດັ່ງກ່າວຄາດວ່າຈະປັບປຸງຂຶ້ນໃນໄລຍະກາງຫຼັງຈາກທີ່ບັນດາໂຄງການພະລັງງານໄຟຟ້າເລີ່ມທຳການຜະລິດ ແລະ ສົ່ງອອກ.

## ສະພາບເງິນເຟີ້

**3. ອັດຕາເງິນເຟີ້ສະເລ່ຍໃນປີ 2014 ຫຼຸດລົງເປັນ 4,2 ສ່ວນຮ້ອຍ ຈາກ 6,4 ສ່ວນຮ້ອຍໃນປີກ່ອນ ຍ້ອນການເພີ່ມຂຶ້ນຂອງລາຄາສະບຽງອາຫານໃນອັດຕາຊ້າລົງແລະລາຄານ້ຳມັນທີ່ຫຼຸດລົງ.** ລາຄາໝວດສະບຽງອາຫານໃນປີ 2014 ເພີ່ມຂຶ້ນສະເລ່ຍ 7 ສ່ວນຮ້ອຍ ຈາກປີ 2013 ທຽບກັບ 12,6 ສ່ວນຮ້ອຍ ໃນປີກ່ອນ (ຮູບສະແດງ 4). ສຳລັບລາຄານ້ຳມັນສະເລ່ຍກໍ່ຫຼຸດລົງຕື່ມອີກ 0,8 ສ່ວນຮ້ອຍໃນປີ 2014 ຈາກທີ່ໄດ້ຫຼຸດລົງ ແລ້ວ 5,4 ສ່ວນຮ້ອຍໃນປີ 2013 ຕາມທ່າອຽງລາຄານ້ຳມັນໃນຕະຫຼາດໂລກ. ອັດຕາເງິນເຟີ້ສະເລ່ຍຄາດວ່າຈະຢູ່ໃນລະດັບ 4-5 ສ່ວນຮ້ອຍໃນປີນີ້.

**ຮູບສະແດງ 3: ອັດຕາເງິນເຟີ້ປະຈຳເດືອນ**
(ການປ່ຽນແປງທຽບກັບປີກາຍ)




*ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ ແລະ ການຄິດໄລ່ຂອງທີມງານທະນາຄານໂລກ*

**ຮູບສະແດງ 4: ອົງປະກອບຂອງອັດຕາເງິນເຟີ້ໃນໝວດສະບຽງອາຫານ**
(ຈຸດສ່ວນຮ້ອຍ)




*ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ ແລະ ການຄິດໄລ່ຂອງທີມງານທະນາຄານໂລກ*

### *ລາຍຮັບ ແລະ ລາຍຈ່າຍພາກລັດ*

**4. ການຂາດດຸນງົບປະມານໄດ້ຫຼຸດລົງໃນສົກປີ 2013/14 ຍ້ອນມາດຕະການຄວບຄຸມລາຍຈ່າຍ.** ໃນດ້ານລາຍຈ່າຍ, ມາດຕະການເບື້ອງຕົ້ນແມ່ນການຍົກເລີກເງິນອຸດໜູນທີ່ຊຸດເຊີຍການຂຶ້ນດັດຊະນີເງິນເດືອນອີກ 40 ສ່ວນຮ້ອຍ. ສໍາລັບລາຍຮັບລວມຕໍ່ GDP ແມ່ນຍັງຄົງທີ່ຢູ່ປະມານ 23 ສ່ວນຮ້ອຍ ເຊິ່ງສ່ວນຫຼາຍແມ່ນຍ້ອນລາຍຮັບນອກຈາກຂະແໜງຊັບພະຍາກອນທໍາມະຊາດ (ອາກອນມູນຄ່າເພີ່ມ, ອາກອນຊົມໃຊ້ ແລະ ພາສີນໍາເຂົ້າ) ເຊິ່ງຊົດເຊີຍການຫຼຸດລົງຂອງລາຍຮັບຈາກບໍ່ແຮ່ ແລະ ການຊ່ວຍເຫຼືອລ້າ. ໃນເມື່ອການເກັບລາຍຮັບໄດ້ຫຼຸດແຜນທີ່ຕັ້ງໄວ້ສູງໃນເບື້ອງຕົ້ນ ແລະ ກໍ່ມີລາຍຈ່າຍໃນການຊໍາລະໜີ້ສະສົມ ເຮັດໃຫ້ສະພາບຄ່ອງການເງິນຂອງພາກລັດຍັງພົບຄວາມຫຍຸ້ງຍາກ. ຫຼັງຈາກນັ້ນໃນກາງປີ 2014 ກໍ່ໄດ້ມີການ ຕັດລາຍຈ່າຍເພີ່ມເຕີມເຊິ່ງເທົ່າກັບປະມານ 1 ສ່ວນຮ້ອຍຕໍ່ GDP ທຽບໃສ່ໝົດປີ[7]. ຍ້ອນແນວນັ້ນ ຈິ່ງເຮັດໃຫ້ການຂາດດຸນງົບປະມານຫຼຸດລົງຈາກ 6 ສ່ວນຮ້ອຍເປັນ 4,3 ສ່ວນຮ້ອຍ ໃນສົກປີ 2013/14 (ຮູບສະແດງ 5) ແຕ່ວ່າສະພາບຄ່ອງຂອງງົບປະມານຍັງພົບກັບຄວາມຫຍຸ້ງຍາກຢູ່ຍ້ອນມີການຊໍາລະໜີ້ສະສົມຈາກປີ 2012/13 ເປັນສ່ວນຫຼາຍ (ເກືອບເທົ່າ 2 ສ່ວນຮ້ອຍຕໍ່ GDP). ການຂາດດຸນງົບປະມານທີ່ບໍ່ລວມລາຍຮັບຈາກໄຟຟ້າ ແລະ ບໍ່ແຮ່ກໍ່ໄດ້ຫຼຸດລົງເຊັ່ນດຽວກັນ ຈາກປະມານ 10 ສ່ວນຮ້ອຍ ໃນສົກປີ 2012/13 ເປັນ 7 ສ່ວນຮ້ອຍ ໃນປີ 2013/14. ໃນດ້ານການຈັດສັນລາຍຈ່າຍໃຫ້ແກ່ຂະແໜງການສັງຄົມແມ່ນຍັງຂາດຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດຕົວຈິງໂດຍສະເພາະຫຼັງຈາກການຕັດລາຍຈ່າຍດັ່ງທີ່ກ່າວມາຂ້າງເທິງນີ້. ຂໍ້ມູນທີ່ທັນການຈະຊ່ວຍໃຫ້ສາມາດວິເຄາະຜົນຂອງນະໂຍບາຍລາຍຈ່າຍດັ່ງກ່າວຕໍ່ກັບຂະແໜງສຶກສາ ແລະ ສາທາລະນະສຸກ (ກ່ອງ 1: ລາຍຈ່າຍພາກລັດໃນຂະແໜງສຶກສາ ແລະ ສາທາ).

**5. ລາຍຮັບທັງໝົດຕໍ່ GDP ຄາດວ່າຈະຍັງຄົງທີ່ ຍ້ອນການເພີ່ມຂຶ້ນຂອງລາຍຮັບຈາກຂະແໜງອື່ນນອກຈາກຊັບພະຍາກອນໄດ້ຊ່ວຍທົດແທນການຫຼຸດລົງຂອງລາຍຮັບຈາກບໍ່ແຮ່ ແລະ ການຊ່ວຍເຫຼືອລ້າ.** ລັດຖະບານໄດ້ມີມາດຕະການປັບປຸງການເກັບລາຍຮັບເຊິ່ງເຮັດໃຫ້ອັດຕາສ່ວນລາຍຮັບຕໍ່ GDP ຍັງສາມາດຄົງຕົວທີ່ 23 ສ່ວນຮ້ອຍໃນປີ 2013/14ຮູບສະແດງ 7). ລາຍຮັບຈາກບໍ່ແຮ່ຫຼຸດລົງຍ້ອນລາຄາໂລຫະຫຼຸດລົງ ແລະ ປະລິມານຜົນຜະລິດຄໍາກໍ່ຫຼຸດລົງ. ລາຍຮັບຈາກຂະແໜງອື່ນໆແມ່ນປະຕິບັດໄດ້ດີ ເຊິ່ງເພີ່ມຂຶ້ນເປັນ 14,8 ສ່ວນຮ້ອຍຂອງ GDP ໂດຍສະເພາະມາຈາກ ພາສີນໍາເຂົ້າ, ອາກອນຊົມໃຊ້, ອາກອນມູນຄ່າເພີ່ມ. ລາຍຮັບຈາກການຊ່ວຍເຫຼືອລ້າຫຼຸດລົງຈາກ 5,3 ສ່ວນຮ້ອຍເປັນປະມານ 5 ສ່ວນຮ້ອຍຕໍ່ GDP.

---

*7 ລັດຖະບານໄດ້ສະເໜີຕໍ່ສະພາແຫ່ງຊາດເພື່ອຕັດລາຍຈ່າຍຈໍານວນ 659 ຕື້ກີບ ເຊິ່ງໃນນັ້ນ 250 ຕື້ກີບແມ່ນການຫຼຸດລາຍຈ່າຍລົງທຶນ ແລະ ອີກ 409 ຕື້ກີບ ແມ່ນລາຍຈ່າຍບໍລິຫານ (ໜັງສືພິມ Vientiane Times, July 8th, 2014, http://www.vientianetimes.org.la/FreeContent/freeCont_Govt%20seeks%20parliament.htm)*

### ຮູບສະແດງ 5: ຜົນງານການຈັດຕັ້ງປະຕິບັດງົບປະມານຂອງພາກລັດ
(ສ່ວນຮ້ອຍຕໍ່ GDP)




### ຮູບສະແດງ 6: ລາຍຈ່າຍງົບປະມານ
(ສ່ວນຮ້ອຍຕໍ່ GDP)




*ແຫຼ່ງຂໍ້ມູນ: ກະຊວງການເງິນ, ການຄາດຄະເນ ແລະ ການຄິດໄລ່ຂອງທີມງານ ທະນາຄານໂລກ*
*ໝາຍເຫດ: ຂໍ້ມູນນີ້ໄດ້ຖືກທົບທວນຄືນໃຫ້ລວມເອົາການຊ່ວຍເຫຼືອລ້າ ໃນລາຍ ຈ່າຍການລົງທຶນ*

### ຮູບສະແດງ 7: ງົບປະມານໃຫ້ແກ່ຂະແໜງສັງຄົມ
(ອັດຕາສ່ວນຮ້ອຍຕໍ່ລາຍຈ່າຍທັງໝົດບໍ່ລວມລາຍຈ່າຍຊໍາລະໜີ້)




*ແຫຼ່ງຂໍ້ມູນ: ກະຊວງການເງິນ, ການຄາດຄະເນ ແລະ ການຄິດໄລ່ຂອງທີມງານທະນາຄານໂລກ*
*ໝາຍເຫດ: '* ແຜນງົບປະມານສະບັບທໍາອິດ*

### ຮູບສະແດງ 8: ລາຍຮັບງົບປະມານ
(ສ່ວນຮ້ອຍຕໍ່ GDP)




*ແຫຼ່ງຂໍ້ມູນ: ກະຊວງການເງິນ, ການຄາດຄະເນ ແລະ ການຄິດໄລ່ຂອງທີມງານທະນາຄານໂລກ*
*ໝາຍເຫດ: ຂໍ້ມູນນີ້ໄດ້ຖືກທົບທວນຄືນໃຫ້ລວມເອົາການຊ່ວຍເຫຼືອລ້າຕໍ່ລາຍຈ່າຍການລົງທຶນ*

## ກ່ອງ 1: ລາຍຈ່າຍພາກລັດໃນຂະແໜງສຶກສາ ແລະ ສາທາ

**ຮູບສະແດງ 9: ງົບປະມານຂອງຂະແໜງສຶກສາ**
(ອັດຕາສ່ວນຮ້ອຍຕໍ່ລາຍຈ່າຍທັງໝົດ#)




**ຮູບສະແດງ 10: ງົບປະມານຂອງຂະແໜງສາທາລະນະສຸກ**
(ອັດຕາສ່ວນຮ້ອຍຕໍ່ລາຍຈ່າຍທັງໝົດ#)




*ແຫຼ່ງຂໍ້ມູນ: ກະຊວງການເງິນ, ການຄາດຄະເນ ແລະ ການຄິດໄລ່ຂອງທີມງານທະນາຄານໂລກ*
*ໝາຍເຫດ: # ລາຍຈ່າຍທັງໝົດບໍ່ລວມລາຍຈ່າຍຊໍາລະໜີ້)*
*'* ແຜນງົບປະມານສະບັບທໍາອິດ*

**ລາຍຈ່າຍໃຫ້ຂະແໜງບູລິມະສິດສຶກສາ ແລະ ສາທາລະນະສຸກ ໄດ້ເພີ່ມຂຶ້ນອີງຕາມແຜນງົບປະມານສະບັບທໍາອິດຂອງສົກປີ 2012/13 ແລະ 2013/14 ເຊິ່ງສ່ວນຫຼາຍແມ່ນຍ້ອນການເພີ່ມລາຍຈ່າຍພາກເງິນເດືອນ.** ອີງຕາມແຜນລາຍຈ່າຍຂອງຂະແໜງສາທາຈະເພີ່ມຂຶ້ນເປັນປະມານ 220 ລ້ານໂດລາ ຫຼືປະມານ 7 ສ່ວນຮ້ອຍ ຂອງລາຍຈ່າຍພາກລັດທັງໝົດໃນປີ 2013/14 ບໍ່ລວມລາຍຈ່າຍຊໍາລະໜີ້ ເຊິ່ງເພີ່ມຂຶ້ນຈາກລະດັບຕົວຈິງທີ່ຫຼຸດລົງໃນປີ 2011/12. ການເພີ່ມຂຶ້ນສ່ວນຫຼາຍແມ່ນມາຈາກລາຍຈ່າຍປົກກະຕິ (ຮູບສະແດງ 10). ໃນນັ້ນລາຍຈ່າຍບໍລິຫານ ທີ່ບໍ່ລວມເງິນເດືອນໃນຂະແໜງສາທາລະນະສຸກທຽບກັບລາຍຈ່າຍທັງໝົດຄາດວ່າຈະເພີ່ມຂຶ້ນເປັນປະມານ 2,4 ສ່ວນຮ້ອຍ ໃນແຜນປີ 2013/14 (ເປັນປະມານ 76 ລ້ານໂດລາ) ຈາກ 0,7 ສ່ວນຮ້ອຍ ໃນປີ 2011/12 (ປະມານ 13 ລ້ານໂດລາ). ສໍາລັບລາຍຈ່າຍຂະແໜງສຶກສາຄາດວ່າໄດ້ເພີ່ມຂຶ້ນໃນສອງສົກປີທີ່ຜ່ານມາ ເຊິ່ງສ່ວນຫຼາຍແມ່ນລາຍຈ່າຍເງິນເດືອນ ແລະ ເງິນອຸດໜູນ (ປະມານ 490 ລ້ານໂດລາ ໃນແຜນປີ 2013/14). ເຖິງຢ່າງໃດກໍ່ຕາມ, ລາຍຈ່າຍບໍລິຫານນອກຈາກເງິນເດືອນ ເຊິ່ງສໍາຄັນສໍາລັບການປັບປຸງປະສິດທິພາບ ແລະ ຄຸນນະພາບຂອງການບໍລິການພາກລັດແມ່ນມີອັດຕາສ່ວນໜ້ອຍກວ່າ 2 ສ່ວນ ຮ້ອຍ ຂອງລາຍຈ່າຍທັງໝົດ (ປະມານ 45 ລ້ານ ໂດລາ). ລາຍຈ່າຍບໍລິຫານນອກຈາກເງິນເດືອນຖ້າທຽບໃສ່ລາຍຈ່າຍລົງທຶນ ແລະ ລາຍຈ່າຍພາກເງິນເດືອນແລ້ວແມ່ນຍັງມີໜ້ອຍຫຼາຍ ເຊິ່ງອາດກະທົບຕໍ່ຄຸນນະພາບຂອງການບໍລິການພາກລັດ. ໃນດ້ານການປະຕິບັດງົບປະມານຕົວຈິງຫຼັງຈາກທີ່ມີການຂຶ້ນເງິນເດືອນ ແລະ ເງິນອຸດໜູນໃນປີ 2012/13 ແລະ ການຕັດລາຍຈ່າຍໃນປີ 2013/14, ຍັງບໍ່ທັນມີຂໍ້ມູນຫຼ້າສຸດທີ່ຈະຊ່ວຍໃຫ້ວິເຄາະ ແລະ ເຂົ້າໃຈຜົນກະທົບຂອງນະໂຍບາຍລາຍຈ່າຍດັ່ງກ່າວຕໍ່ກັບສອງຂະແໜງການນີ້. ໃນເບື້ອງການສະໜອງແມ່ນການຈັດສັນງົບປະມານໃສ່ສອງຂະແໜງການສໍາຄັນນີ້ ແລະ ໃນເບື້ອງຄວາມຕ້ອງການ ກໍ່ເນັ້ນໃສ່ການປັບປຸງຄວາມສາມາດຂອງຂະແໜງການໃນການນໍາໃຊ້ແຫຼ່ງທຶນໄປພ້ອມໆກັນແມ່ນມີຄວາມສໍາຄັນສໍາລັບການບັນລຸເປົ້າໝາຍການພັດທະນາໃນຕໍ່ໜ້າ.

**6. ການຂາດດຸນງົບປະມານໃນສົກປີ 2014/15 ຄາດວ່າຈະຢູ່ໃນລະດັບຄົງຕົວທີ່ 4,2 ສ່ວນຮ້ອຍ ເນື່ອງຈາກມາດຕະການຫຼຸດຜ່ອນການຂາດດຸນງົບປະມານ.** ບັນດາມາດຕະການດ້ານລາຍຈ່າຍລວມ ມີການຈຳກັດລາຍຈ່າຍລວມຂອງພາກລັດ ແລະ ຫຼຸດຜ່ອນຈຳນວນພະນັກງານລັດຖະກອນໃໝ່. ລັດຖະບານໄດ້ໃຫ້ບູລິມະສິດແກ່ໂຄງການສືບຕໍ່, ຊຳລະໜີ້ໂຄງການລົງທຶນທີ່ສະສົມ ແລະ ຈຳກັດໂຄງການໃໝ່ທີ່ບໍ່ຕິດພັນກັບການຫຼຸດຜ່ອນຄວາມທຸກຍາກ. ໃນແຜນພັດທະນາເສດຖະກິດ-ສັງຄົມປີ 2014/15 ບັນດາມາດຕະການລວມມີບົດແນະນຳໃຫ້ຫົວໜ່ວຍງົບປະມານຈັດສັນຢ່າງໜ້ອຍ 35 ສ່ວນຮ້ອຍຂອງລາຍຈ່າຍລົງທຶນປະຈຳປີເພື່ອຊຳລະໜີ້ລົງທຶນສະສົມ ແລະ ບໍ່ອະນຸຍາດໃຫ້ມີໂຄງການນອກແຜນທີ່ບໍ່ໄດ້ຮັບການຮັບຮອງຈາກສະພາແຫ່ງຊາດ. ນອກຈາກນັ້ນ ຍັງແນະນຳໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງປັບປຸງການຄິດໄລ່ລາຄາຫົວໜ່ວຍສຳລັບການກໍ່ສ້າງໃນຂະແໜງການຂອງຕົນໃຫ້ຖືກກັບສະພາບຕົວຈິງ ແລະ ເຜີຍແຜ່ຂໍ້ມູນດັ່ງກ່າວເພື່ອໃຫ້ການຂຶ້ນແຜນງົບປະມານມີຄວາມຖືກຕ້ອງ ແລະ ສອດຄ່ອງກັບຕົວຈິງຫຼາຍຂຶ້ນ. ມາດຕະການດ້ານລາຍຮັບແມ່ນຈະເນັ້ນໃສ່ການປັບປຸງການບໍລິຫານເກັບກຳລາຍຮັບ ແລະ ຫຼຸດຜ່ອນການຮົ່ວໄຫຼ. ບັນດາມາດຕະການເຫຼົ່ານີ້ຖ້າຈັດຕັ້ງປະຕິບັດຢ່າງເຄັ່ງຄັດກໍ່ອາດຈະສາມາດຊ່ວຍປັບປຸງສະພາບຄ່ອງຂອງການເງິນພາກລັດໄດ້ຫຼາຍ ແລະ ຊ່ວຍໃຫ້ການເງິນພາກລັດກັບຄືນມາມີຄວາມຍືນຍົງ. ເຖິງຢ່າງໃດກໍ່ຕາມ, ປັດໄຈພາຍນອກເຊັ່ນລາຄານ້ຳມັນທີ່ຕ່ຳອາດຈະສົ່ງຜົນຕໍ່ລາຍຮັບພາກລັດ ແລະ ກຳລັງໄດ້ຮັບການຕິດຕາມຢ່າງໃກ້ຊິດ.

### *ໜີ້ສິນພາກລັດ*

**7. ການປະເມີນໜີ້ສິນພາກລັດເບື້ອງຕົ້ນສະແດງໃຫ້ເຫັນວ່າຍອດໜີ້ສິນຕ່າງປະເທດໃນທ້າຍປີ 2013 ໄດ້ເພີ່ມຂຶ້ນຈາກ 2012.** ລະດັບໜີ້ສິນຕ່າງປະເທດທັງໝົດ (ພາກລັດ ແລະ ພາກເອກະຊົນ) ຄາດວ່າຈະເພີ່ມຂຶ້ນຈາກປະມານ 80 ສ່ວນຮ້ອຍຕໍ່ GDP ເປັນປະມານ 84 ສ່ວນຮ້ອຍໃນທ້າຍປີ 2013, ເຊິ່ງກວ່າເຄິ່ງໜຶ່ງແມ່ນໜີ້ສິນຕ່າງປະເທດຂອງພາກລັດ ແລະ ການຄ້ຳປະກັນຈາກພາກລັດ[8] ແລະ ສ່ວນທີ່ເຫຼືອແມ່ນໜີ້ສິນຕ່າງປະເທດຂອງພາກເອກະຊົນ. ໜີ້ສິນຕ່າງປະເທດຂອງພາກລັດ ແລະ ການຄ້ຳປະກັນຂອງພາກລັດຄາດວ່າເພີ່ມຂຶ້ນຈາກ 4,5 ຕື້ໂດລາໃນປີ 2012 (47,7 ສ່ວນຮ້ອຍຕໍ່ GDP) ເປັນ 5,1 ຕື້ໂດລາໃນປີ 2013 (48,3 ສ່ວນຮ້ອຍຕໍ່ GDP) ເຊິ່ງສ່ວນໜຶ່ງແມ່ນຍ້ອນການກູ້ຢືມຈາກຈີນ ແລະ ໄທ ເຊິ່ງກໍ່ຕິດພັນກັບການລົງທຶນຖືຫຸ້ນໃນໂຄງການພະລັງງານໄຟຟ້າ. ມູນຄ່າປະຈຸບັນ (net present value) ຂອງໜີ້ສິນຕ່າງປະເທດຂອງພາກລັດ ໃນທ້າຍປີ 2013 ແມ່ນ 39,8 ສ່ວນຮ້ອຍຕໍ່ GDP ເຊິ່ງເພີ່ມຂຶ້ນຫຼາຍຈາກ 32,5 ສ່ວນຮ້ອຍຕໍ່ GDP ໃນປີ 2012.

**8. ພາລະໜີ້ສິນຕ່າງປະເທດຂອງພາກລັດຍັງຢູ່ໃນລະດັບກາງ ແຕ່ຄວາມສ່ຽງໄດ້ເພີ່ມຂຶ້ນທຽບໃສ່ການປະເມີນໃນປີກ່ອນ.** ໃນກໍລະນີຖ້າວ່າບໍ່ມີການປ່ຽນແປງດ້ານນະໂຍບາຍໃນອະນາຄົດ ໜຶ່ງໃນຕົວຊີ້ວັດຂອງພາລະໜີ້ສິນຕ່າງປະເທດ ເຊິ່ງແມ່ນມູນຄ່າປະຈຸບັນ (net present value) ຂອງໜີ້ສິນຕ່າງປະເທດຂອງພາກລັດຕໍ່ GDP ຄາດວ່າຈະເພີ່ມຂຶ້ນໃນຊຸມປີຕໍ່ໜ້າສູງກວ່າລະດັບທຽບຖານ ກ່ອນ

8 *ອັດຕາສ່ວນດັ່ງກ່າວ ຖືວ່າແມ່ນຢູ່ໃນກຸ່ມທີ່ສູງຖ້າທຽບໃສ່ບັນດາປະເທດອາຊຽນ ເຊັ່ນ ກຳປູເຈຍ (33 ສ່ວນຮ້ອຍຕໍ່ GDP), ພະມ້າ (25 ສ່ວນຮ້ອຍ), ຈີນ (1,5 ສ່ວນຮ້ອຍ), ອິນໂດເນເຊຍ (31 ສ່ວນຮ້ອຍ), ຟີລິປິນ (28 ສ່ວນຮ້ອຍ) ແລະ ມາເລເຊຍ (31 ສ່ວນຮ້ອຍ).*

ທີ່ຈະຫຼຸດລົງໃນໄລຍະກາງ. ການເພີ່ມຂຶ້ນສູງກວ່າລະດັບທຽບຖານໝາຍຄວາມວ່າລະດັບໜີ້ສິນ ແລະ ການຊໍາລະໜີ້ດັ່ງກ່າວໃນອະນາຄົດເພີ່ມຂຶ້ນທຽບກັບລະດັບທຽບຖານທີ່ສ່ອງແສງເຖິງລະດັບທີ່ຍືນຍົງຂອງໜີ້ສິນພາຍນອກຂອງພາກລັດ. ທ່າອ່ຽງດັ່ງກ່າວໝາຍເຖິງພາລະໜີ້ສິນພາກລັດເພີ່ມຂຶ້ນ ແລະ ຄວາມສາມາດຮອງຮັບຂອງງົບປະມານໃນກໍລະນີມີວິກິດການກໍ່ມີຈໍາກັດເຊັ່ນກັນ. ຕົວຊີ້ວັດດ້ານການຊໍາລະໜີ້ສິນແມ່ນຍັງຢູ່ໃນລະດັບຕໍ່າເນື່ອງຈາກວ່າການກູ້ຢືມຂອງພາກລັດສ່ວນໃຫຍ່ແມ່ນມີເງື່ອນໄຂຜ່ອນຜັນ. ອົງປະກອບຂອງໜີ້ສິນຕ່າງປະເທດຂອງພາກລັດສ່ວນຫຼາຍແມ່ນເປັນສະກຸນເງິນຕາເຊິ່ງກໍ່ໝາຍຄວາມວ່າມີຄວາມສ່ຽງສູງໃນກໍລະນີທີ່ເງິນກີບອ່ອນຄ່າລົງຫຼາຍແບບກະທັນຫັນທຽບໃສ່ເງິນຕາຕ່າງປະເທດ.

**9. ການກູ້ຢືມຈາກສອງຝ່າຍກວມເອົາອັດຕາສ່ວນຫຼາຍຂຶ້ນໃນປີ 2013.** ຜູ້ໃຫ້ທຶນສອງຝ່າຍສ່ວນໃຫຍ່ແມ່ນຈີນ, ລັດເຊຍ, ໄທ, ຍີ່ປຸ່ນ ແລະ ເກົາຫຼີ ເຊິ່ງກວມເອົາ 64 ສ່ວນຮ້ອຍຂອງການກູ້ຢືມຕ່າງປະເທດຂອງພາກລັດທັງໝົດໃນທ້າຍປີ 2013[9]. ຜູ້ໃຫ້ທຶນຫຼາຍຝ່າຍກວມເອົາສ່ວນທີ່ເຫຼືອ ເຊິ່ງສ່ວນຫຼາຍແມ່ນທະນາຄານພັດທະນາອາຊີ ແລະ ຕໍ່ມາກໍ່ແມ່ນທະນາຄານໂລກ. ອັດຕາສ່ວນຂອງຜູ້ໃຫ້ທຶນສອງຝ່າຍໄດ້ເພີ່ມຂຶ້ນຫຼາຍທຽບກັບຫຼາຍຝ່າຍ ເຊິ່ງກໍ່ສ່ອງແສງເຖິງການເພີ່ມຂຶ້ນຂອງການກູ້ຢືມໃໝ່ ແລະ ດ້ວຍເງື່ອນໄຂສະເລ່ຍທີ່ມີອັດຕາຜ່ອນຜັນໜ້ອຍລົງ ແລະ ຫຍັບເຂົ້າໃກ້ກັບເງື່ອນໄຂຕະຫຼາດຫຼາຍຂຶ້ນ.

**10. ໜີ້ສິນລວມຂອງພາກລັດທັງໝົດ (ທັງໜີ້ພາຍໃນ ແລະ ຕ່າງປະເທດ) ຖືກປະເມີນຢູ່ປະມານ 59 ສ່ວນຮ້ອຍຕໍ່ GDP ໃນທ້າຍປີ 2013.** ໜີ້ສິນພາຍໃນຄາດວ່າຢູ່ໃນລະດັບ 11 ສ່ວນຮ້ອຍຕໍ່ GDP ໃນທ້າຍປີ 2013 ເຊິ່ງລວມມີການກູ້ຢືມ ຂອງພາກທະນາຄານ ແລະ ການອອກພັນທະບັດ ແລະ ການປ່ອຍສິນເຊື່ອໂດຍກົງຈາກທະນາຄານແຫ່ງ ສປປ ລາວ ໃຫ້ໂຄງການລົງທຶນໃສ່ພື້ນຖານໂຄງລ່າງນອກແຜນ. ໜີ້ສິນພາຍໃນຍັງມີສັດສ່ວນໜ້ອຍຢູ່ຍ້ອນເງື່ອນໄຂອັດຕາດອກເບ້ຍພາຍໃນຍັງສູງກວ່າຂອງໜີ້ສິນຕ່າງປະເທດ. ເຖິງຢ່າງໃດກໍ່ຕາມ, ໃນອະນາຄົດເມື່ອຕະຫຼາດທຶນພາຍໃນພັດທະນາຫຼາຍຂຶ້ນກໍ່ຄາດວ່າການກູ້ຢືມພາຍໃນຈະມີຫຼາຍຂຶ້ນ.

**11. ລັດຖະບານໄດ້ມີບາດກ້າວໃນການສ້າງຄວາມເຂັ້ມແຂງໃຫ້ຂອບການຄຸ້ມຄອງໜີ້ສິນພາກລັດ.** ການສ້າງຄວາມສາມາດໃນວຽກງານການຄຸ້ມຄອງໜີ້ສິນ, ການວິເຄາະຄວາມຍືນຍົງດ້ານໜີ້ສິນ ແລະ ການປະເມີນຜົນຄວາມເປັນໄປໄດ້ຂອງໂຄງການແມ່ນມີຄວາມສໍາຄັນສໍາລັບ ສປປ ລາວ. ລະບົບຕິດຕາມໜີ້ສິນ DMFAS ໄດ້ຖືກນໍາໃຊ້ແລ້ວ ແລະ ການສ້າງຂີດຄວາມສາມາດໃຫ້ພະແນກຄຸ້ມຄອງໜີ້ສິນກໍ່ໄດ້ສືບຕໍ່ດໍາເນີນ. ລະບົບດັ່ງກ່າວຊ່ວຍໃຫ້ພະແນກຄຸ້ມຄອງໜີ້ສິນສາມາດຕິດຕາມແລະປະເມີນໜີ້ສິນໄດ້ແລະສາມາດລາຍງານຂໍ້ມູນໜີ້ສິນໃຫ້ລະບົບຖານຂໍ້ມູນໜີ້ສິນຕ່າງປະເທດຕາມພັນທະຂອງ ສປປ ລາວ. ດໍາລັດປະທານປະເທດວ່າດ້ວຍການຄຸ້ມຄອງໜີ້ສິນພາກລັດໄດ້ຮັບການອະນຸມັດຕາມຫຼັກການ. ດໍາລັດດັ່ງກ່າວໄດ້ກໍານົດຈະແຈ້ງກ່ຽວກັບການແບ່ງຄວາມຮັບຜິດຊອບແລະສິດຂອງແຕ່ລະ

*9 ຈໍານວນດັ່ງກ່າວລວມມີການອອກພັນທະບັດຄັ້ງທໍາອິດ 50 ລ້ານໂດລາ ໃນເດືອນພຶດສະພາ 2013, ອອກພັນທະບັດຄັ້ງທີສອງລວມກັນ ເປັນປະມານ 100 ລ້ານໂດລາ ໃນເດືອນທັນວາ 2013 ໃນຕະຫຼາດຫຼັກຊັບໄທ. ໃນປີ 2014 ກໍ່ໄດ້ອອກຕື່ມປະມານ 170 ລ້ານໂດລາ. ການລະດົມທຶນດັ່ງກ່າວແມ່ນເພື່ອດຸ່ນດ່ຽງງົບປະມານລວມ.*

*ຕາຕະລາງ 1: ໂຄງສ້າງໜີ້ສິນຕ່າງປະເທດຂອງພາກລັດ*

| | ຕື້ໂດລາ | ສ່ວນຮ້ອຍ ຂອງລວມຍອດໜີ້ສິນຕ່າງປະເທດ | ສ່ວນຮ້ອຍ ຂອງ GDP |
|---|---|---|---|
| ທັງໝົດ | 5.1 | 100 | 48 |
| ຫຼາຍຝ່າຍ | 1.8 | 36 | 17 |
| ສອງຝ່າຍ | 3.3 | 64 | 31 |
| ເງື່ອນໄຂຕະຫຼາດ | 0.1 | 3 | 1 |

*ແຫຼ່ງຂໍ້ມູນ: ການປະເມີນຄວາມຍືນຍົງດ້ານໜີ້ສິນປະຈຳປີ 2014 ໂດຍກອງທຶນການເງິນສາກົນແລະທະນາຄານໂລກ*

*ຕາຕະລາງ 2: ຕົວຊີ້ວັດພາລະໜີ້ສິນຕ່າງປະເທດຂອງພາກລັດ*

| | ມາດຖານເພດານໜີ້ສິນ | ຜົນປະເມີນຂອງລະດັບໜີ້ສິນ ໃນທ້າຍປີ 2013 |
|---|---|---|
| ມູນຄ່າປະຈຸບັນຂອງໜີ້ສິນພາກລັດ, ເປັນສ່ວນຮ້ອຍຂອງ | | |
| ລວມຍອດຜະລິດຕະພັນພາຍໃນ GDP | 40 | 40 |
| ມູນຄ່າສົ່ງອອກ | 150 | 92 |
| ລາຍຮັບພາກລັດ | 250 | 221 |
| ການຊຳລະໜີ້ສິນ, ເປັນສ່ວນຮ້ອຍຂອງ | | |
| ການສົ່ງອອກ | 20 | 5 |
| ລາຍຮັບພາກລັດ | 20 | 12 |

*ແຫຼ່ງຂໍ້ມູນ: ລັດຖະບານຂອງ ສປປ ລາວ; ບົດວິເຄາະຄວາມຍືນຍົງດ້ານໜີ້ສິນຂອງສປປລາວ ກະກຽມຮ່ວມກັນລະຫວ່າງ ກອງທຶນການເງິນສາກົນແລະທະນາຄານໂລກ 2014*

ພາກສ່ວນທີ່ກ່ຽວຂ້ອງໃນການກູ້ຢືມ ແລະ ສ້າງໜີ້ໃໝ່ (ລວມມີໜີ້ຂອງພາກລັດ, ການຄ້ຳປະກັນຈາກພາກລັດແລະໜີ້ທີ່ອາດຈະເກີດຂຶ້ນ). ໃນການລົງທຶນ ແລະ ດຳເນີນທຸລະກຳຕາງໜ້າລັດຖະບານ, ກຳນົດເປົ້າໝາຍໃນການຄຸ້ມຄອງໜີ້ສິນ ແລະ ກຳນົດໃຫ້ມີການເຜີຍແຜ່ຂໍ້ມູນໜີ້ສິນໃຫ້ທັນເວລາ. ລັດຖະບານກໍ່ໄດ້ມີບາດກ້າວໃນການສົ່ງເສີມການໂຕ້ວາທີແລະການສະແດງຄຳຄິດຄຳເຫັນແບບເປີດກວ້າງຕໍ່ສາທາລະນະກ່ຽວກັບໜີ້ສິນ ແລະ ໜີ້ທີ່ຕິດພັນກັບໂຄງການລົງທຶນໂດຍການອອກຂ່າວນຳສື່ມວນຊົນ, ເອົາລົງເຜີຍແຜ່ໃນເວັບໄຊຂອງສະພາແຫ່ງຊາດ. ບັນດາບາດກ້າວດັ່ງກ່າວສ່ອງແສງໃຫ້ເຫັນເຖິງຄວາມພະຍາຍາມຂອງພາກລັດໃນການສ້າງຄວາມເຂັ້ມແຂງໃຫ້ວຽກງານການຄຸ້ມຄອງໜີ້ສິນ.

**12. ການປະຕິຮູບດ້ານການບໍລິຫານເງິນສົດໂດຍຄັງເງິນແຫ່ງຊາດກໍ່ໄດ້ລິເລີ່ມຂຶ້ນ.** ກະຊວງການເງິນໄດ້ສ້າງຕັ້ງຫ້ອງການຄັງເງິນໃນຂັ້ນທ້ອງຖິ່ນທີ່ຂຶ້ນກັບສູນກາງ. ບັນຊີເງິນສົດຂອງພາກລັດກໍ່ໄດ້ຖືກຮັບໂຮມເຂົ້າໃນລະບົບບັນຊີຄັງເງິນດຽວ ເຊິ່ງເປັນລະບົບທີ່ມີກົນໄກປະສານກັບທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດລັດອີກ 3 ແຫ່ງ ພາກທະນາຄານຈະລາຍງານຍອດເຫຼືອຂອງພັນທະບັດຄັງເງິນ ໂດຍນຳໃຊ້ລະບົບບັນຊີດຸ່ນດ່ຽງສູນທີ່ໄດ້ເຫັນດີຕົກລົງກັບບັນດາທະນາຄານດັ່ງກ່າວ. ວຽກງານການຄຸ້ມຄອງເງິນສົດກໍ່ຄາດວ່າຈະໄດ້ຮັບການປັບປຸງໃຫ້ເຂັ້ມແຂງຂຶ້ນໂດຍການສ້າງຫ້ອງການບໍລິຫານເງິນສົດ ພາຍໃຕ້ຄັງເງິນແຫ່ງຊາດ, ຄາດຄະເນການຊຳລະໜີ້ແລະໄດ້ປັບປຸງໜ້າທີ່ຮັບຜິດຊອບຂອງຄັງເງິນໃຫ້ຈະແຈ້ງຂຶ້ນໃນການດຳເນີນທຸລະກຳທີ່ກ່ຽວກັບການຄຸ້ມຄອງຊັບສິນແລະໜີ້ສິນດ້ານການເງິນເພື່ອໃຫ້ສາມາດບັນລຸຈຸດປະສົງລະດັບຄາດໝາຍທີ່ໄດ້ວາງໄວ້ສຳລັບວຽກງານບັນຊີດຸ່ນດ່ຽງສູນຢ່າງມີປະສິດທິພາບ.

### *ການຊຳລະກັບຕ່າງປະເທດ*

**13. ການປະເມີນເບື້ອງຕົ້ນຊີ້ໃຫ້ເຫັນວ່າດຸນການຊຳລະກັບຕ່າງປະເທດຈະເພີ່ມຂຶ້ນເລັກນ້ອຍຍ້ອນການສົ່ງອອກຈາກຂະແໜງອື່ນໆນອກຈາກຊັບພະຍາກອນທຳມະຊາດ ແລະ ການລົງທຶນຈາກຕ່າງປະເທດທີ່ຍັງສືບຕໍ່ສູງຢູ່.**ອັດຕາສ່ວນດຸນການຊຳລະປົກກະຕິຕໍ່GDP ຄາດວ່າຈະຫຼຸດລົງເລັກນ້ອຍຈາກ 11,5 ສ່ວນຮ້ອຍເປັນ 11,2 ສ່ວນຮ້ອຍໃນປີ 2014 ເນື່ອງຈາກການເພີ່ມຂຶ້ນຫຼາຍຂອງການສົ່ງອອກໄມ້ໃນປີ 2014 ທີ່ຊົດເຊີຍການຫຼຸດລົງຂອງລາຍຮັບສົ່ງອອກແຮ່ທາດຍ້ອນລາຄາໂລຫະ ແລະ ປະລິມານຄຳຫຼຸດລົງ (ຮູບສະແດງ 12, ຮູບສະແດງ 13). ເຖິງຢ່າງໃດກໍ່ຕາມ ການສົ່ງອອກສິນຄ້າຈາກຂະແໜງການອື່ນໆຍັງບໍ່ທັນເພີ່ມຂຶ້ນຫຼາຍ ເຊິ່ງສ່ວນໜຶ່ງກໍ່ແມ່ນຍ້ອນຂໍ້ຈຳກັດດ້ານການຜະລິດ. ດ້ານການນຳເຂົ້າ ການເພີ່ມຂຶ້ນຂອງການນຳເຂົ້າແມ່ນຍ້ອນສິນຄ້າທຶນເຊິ່ງສ່ວນໜຶ່ງແມ່ນຕິດພັນກັບການລົງທຶນໃນຂະແໜງພະລັງງານ ແລະ ການນຳເຂົ້າສິນຄ້າບໍລິໂພກ[10] (ຮູບສະແດງ 14, ຮູບສະແດງ 15). ປັດໄຈພາຍນອກເຊັ່ນການຫຼຸດລົງຂອງລາຄານ້ຳມັນໃນຕະຫຼາດໂລກຄາດວ່າຈະເປັນຜົນດີຕໍ່ດຸນການຄ້າ ແລະ ການຊຳລະກັບຕ່າງປະເທດເນື່ອງຈາກວ່ານ້ຳມັນກວມເອົາປະມານ 20 ສ່ວນຮ້ອຍຂອງການນຳເຂົ້າທັງໝົດ (ເບິ່ງ ກ່ອງ 2).

---

*10 ໂຄງການພະລັງງານລວມມີ ໂຄງການທັງສາລີກໄບ, ເຂື່ອນໄຊຍະບູລີ, ເຂື່ອນນ້ຳງຽບ 2, ເຂື່ອນນ້ຳອູ 2,5,6, ເຂື່ອນເຊປຽນເຊນ້ຳນ້ອຍແລະອື່ນໆ.*

**ຮູບສະແດງ 12: ດຸນການຊໍາລະກັບຕ່າງປະເທດ**
(ອັດຕາສ່ວນຮ້ອຍຕໍ່ GDP)




*ແຫຼ່ງຂໍ້ມູນ: ການຄິດໄລ່ຂອງທີມງານທະນາຄານໂລກອີງໃສ່ຂໍ້ມູນຈາກທະນາຄານແຫ່ງສປປລາວ, ກະຊວງການຄ້າແລະປະເທດຄູ່ຄ້າ*

**ຮູບສະແດງ 14: ມູນຄ່າການນໍາເຂົ້າສິນຄ້າ**
(ລ້ານໂດລາ)




*ແຫຼ່ງຂໍ້ມູນ: ການຄິດໄລ່ຂອງທີມງານທະນາຄານໂລກອີງໃສ່ຂໍ້ມູນຈາກກະຊວງການຄ້າແລະປະເທດຄູ່ຄ້າ*

**ຮູບສະແດງ 13: ມູນຄ່າການສົ່ງອອກສິນຄ້າ**
(ລ້ານໂດລາ)




*ແຫຼ່ງຂໍ້ມູນ: ການຄິດໄລ່ຂອງທີມງານທະນາຄານໂລກອີງໃສ່ຂໍ້ມູນຈາກກະຊວງການຄ້າ ແລະ ປະເທດຄູ່ຄ້າ*

**ຮູບສະແດງ 15:ການລົງທຶນຈາກຕ່າງປະເທດ**
(ລ້ານໂດລາ)




*ແຫຼ່ງຂໍ້ມູນ: ການຄິດໄລ່ຂອງທີມງານທະນາຄານໂລກອີງໃສ່ຂໍ້ມູນຈາກກະຊວງແຜນການ ແລະ ການລົງທຶນແລະສະພາການຄ້າ*

## ກ່ອງ 2: ລາຄານ້ຳມັນຫຼຸດລົງອາດຈະມີຜົນດີຕໍ່ເສດຖະກິດລາວ ແຕ່ກໍ່ຍັງມີຄວາມສ່ຽງດ້ານລົບ

ຮູບສະແດງ 11: ລາຄານ້ຳມັນສະເລ່ຍ




*ແຫຼ່ງຂໍ້ມູນ: ລາຍງານລາຄາສິນຄ້າຈາກທະນາຄານໂລກ, ມີນາ 2015*

**ລາຄານ້ຳມັນສະເລ່ຍຫຼຸດລົງຢ່າງໄວວາໃນເຄິ່ງທີ່ສອງຂອງປີ 2014.** ລາຄາສະເລ່ຍໝົດປີຫຼຸດລົງ 8 ສ່ວນຮ້ອຍໃນປີ 2014. ນີ້ເປັນຍ້ອນຄວາມຕ້ອງການໃນເສດຖະກິດໂລກຊະລໍຕົວ ໃນຂະນະດຽວກັນ ສະຫະລັດອາເມລິກາກໍ່ເພີ່ມການຜະລິດນ້ຳມັນ ແລະ ກຸ່ມປະເທດຜູ້ຜະລິດນ້ຳມັນ OPEC ກໍ່ບໍ່ມີແຜນທີ່ຈະຫຼຸດຜ່ອນການຜະລິດນ້ຳມັນ. ລາຄານ້ຳມັນທີ່ຕ່ຳຄາດວ່າຈະຊ່ວຍໃຫ້ການຂະຫຍາຍຕົວຂອງເສດຖະກິດໂລກເພີ່ມຂຶ້ນອີກ 0,1 ຈຸດສ່ວນຮ້ອຍ ແລະ ເສດຖະກິດ ຂອງປະເທດກຳລັງພັດທະນາທີ່ນຳເຂົ້ານ້ຳມັນ ເພີ່ມຂຶ້ນອີກ 0,2 ຈຸດສ່ວນຮ້ອຍ ເຊິ່ງລວມທັງພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ.

**ສຳລັບ ສປປ ລາວ ທີ່ເປັນປະເທດນຳເຂົ້ານ້ຳມັນ ກໍ່ຄາດວ່າຈະໄດ້ຮັບຜົນປະໂຫຍດຈາກລາຄານ້ຳມັນທີ່ຕ່ຳ.** ການນຳເຂົ້ານ້ຳມັນກວມເອົາປະມານ 20 ສ່ວນຮ້ອຍຂອງການນຳເຂົ້າທັງໝົດ ຫຼື ປະມານ 9 ສ່ວນຮ້ອຍຕໍ່ GDP. ການຫຼຸດລົງຂອງລາຄານ້ຳມັນສະເລ່ຍໝົດປີຄາດວ່າຈະຊ່ວຍຊົດເຊີຍກັບການເພີ່ມຂຶ້ນ ຂອງຄວາມຕ້ອງການດ້ານປະລິມານ ເຊິ່ງເພີ່ມຂຶ້ນປະມານປີລະ 10 ສ່ວນຮ້ອຍ ແລະ ຄາດວ່າຈະຊ່ວຍໃຫ້ມູນຄ່າການນຳເຂົ້ານ້ຳມັນບໍ່ເພີ່ມຂຶ້ນຫຼາຍທຽບໃສ່ປີກ່ອນແລະຊ່ວຍບໍ່ໃຫ້ດຸນການຊຳລະປົກກະຕິເພີ່ມຂຶ້ນຫຼາຍ.

**ລາຄານ້ຳມັນທີ່ຕ່ຳຈະມີຜົນດີຕໍ່ຜູ້ບໍລິໂພກ ເນື່ອງຈາກວ່າມັນຊ່ວຍເພີ່ມກຳລັງການຊື້ຂອງຜູ້ບໍລິໂພກ.** ໃນເດືອນທັນວາ 2014 ລາຄານ້ຳມັນຫຼຸດລົງອີກ 6 ສ່ວນຮ້ອຍຈາກປີ 2013. ການນຳໃຊ້ນ້ຳມັນເຊື້ອໄຟກວມເອົາປະມານ 8 ສ່ວນຮ້ອຍຂອງກະຕ່າສິນຄ້າບໍລິໂພກທັງໝົດ. ລາຄານ້ຳມັນຕ່ຳກໍ່ໝາຍເຖິງຕົ້ນທຶນການຜະລິດທີ່ຫຼຸດລົງສຳລັບການຜະລິດສິນຄ້າ ແລະ ການບໍລິການ.

**ເຖິງຢ່າງໃດກໍ່ຕາມຄວາມສ່ຽງດ້ານລົບກໍ່ຍັງມີຢູ່.** ລາຄານ້ຳມັນຕ່ຳອາດຈະກະທົບຕໍ່ລາຍຮັບຂອງລັດ ເຊິ່ງລາຍຮັບຈາກນ້ຳມັນ (ຈາກອາກອນຊົມໃຊ້ແລະອາກອນມູນຄ່າເພີ່ມ) ກວມປະມານ 10 ສ່ວນຮ້ອຍ ຂອງລາຍຮັບພາຍໃນ ຫຼື ປະມານ 2 ສ່ວນຮ້ອຍຕໍ່ GDP. ເຖິງຢ່າງໃດກໍ່ຕາມ, ກົນໄກການຄຸ້ມຄອງລາຄານ້ຳມັນພາຍໃນປະເທດທີ່ອາດຈະເຮັດໃຫ້ລາຄາພາຍໃນບໍ່ຫຼຸດລົງໄວວາເທົ່າກັບລາຄານ້ຳມັນໃນຕະຫຼາດໂລກ ອາດຈະຊ່ວຍຫຼຸດຜ່ອນຜົນກະທົບຕໍ່ລາຍຮັບ. ນອກຈາກນັ້ນ, ການທີ່ລາຄານ້ຳມັນຫຼຸດລົງ ສ່ວນໜຶ່ງກໍ່ແມ່ນຍ້ອນການຊະລໍຕົວຂອງເສດຖະກິດຈີນ. ຜົນທາງອ້ອມຕໍ່ ສປປ ລາວ ທີ່ມາຈາກການຊະລໍຕົວຂອງເສດຖະກິດຄູ່ຄ້າເຊັ່ນຈີນ ຫຼືປະເທດອື່ນໆນັ້ນອາດຈະເຮັດໃຫ້ຄວາມຕ້ອງການຕໍ່ການສົ່ງອອກຈາກ ສປປ ລາວ ຫຼຸດລົງ.

**14. ຖັງສຳຮອງເງິນຕາຕ່າງປະເທດທຽບໃສ່ຕົວຊີ້ວັດທຽບຖານ ແມ່ນຖືວ່າຍັງຢູ່ໃນລະດັບຕໍ່າຖ້າທຽບໃສ່ລະດັບທຽບຖານ.** ຖັງສຳຮອງເພີ່ມຂຶ້ນ ແລະ ຢູ່ໃນລະດັບ 815 ລ້ານໂດລາ ໃນເດືອນທັນວາ 2014[11] , ເພີ່ມຂຶ້ນ 23 ສ່ວນຮ້ອຍທຽບກັບປີກ່ອນ (ຮູບສະແດງ 16). ເຖິງຢ່າງໃດກໍ່ຕາມ, ຊັບສິນຕ່າງປະເທດສຸດທິຫຼຸດລົງປະມານ 20 ສ່ວນຮ້ອຍໃນທ້າຍປີ 2014 ເນື່ອງຈາກວ່າໜີ້ສິນຕ່າງປະເທດສຸດທິຂອງທະນາຄານທຸລະກິດເພີ່ມຂຶ້ນຍ້ອນການກູ້ຢືມຈາກຕ່າງປະເທດ. ເພື່ອຫຼຸດຜ່ອນຄວາມກົດດັນຕໍ່ກັບຄວາມຕ້ອງການນຳໃຊ້ຖັງສຳຮອງ ເລີ່ມແຕ່ກາງປີ 2013 ເປັນຕົ້ນມາ ທາງທະນາຄານແຫ່ງ ສປປ ລາວ ໄດ້ແນະນຳໃຫ້ບັນດາທະນາຄານທຸລະກິດຈຳກັດການປ່ອຍສິນເຊື່ອເປັນເງິນຕາຕ່າງປະເທດໃຫ້ລູກຄ້າທີ່ບໍ່ມີລາຍຮັບເປັນເງິນຕາ. ອີກປັດໄຈໜຶ່ງທີ່ເຮັດໃຫ້ລະດັບຖັງສຳຮອງມີການແກວ່ງຕົວແມ່ນຍ້ອນການດັດສົມອັດຕາແລກປ່ຽນ. ອັດຕາສ່ວນຖັງສຳຮອງຕໍ່ເງິນຝາກທີ່ເປັນເງິນຕາຄ່ອຍໆຫຼຸດລົງເຫຼືອເກືອບປະມານ 30 ສ່ວນຮ້ອຍຮອດທ້າຍປີ 2014 ແລະ ກຸ້ມຫຼຸດ 2 ເດືອນຂອງການນຳເຂົ້າສິນຄ້າແລະການບໍລິການ[12](ຮູບສະແດງ 17). ບັນດາຕົວຊີ້ວັດດັ່ງກ່າວມາຂ້າງເທິງຍັງສ່ອງແສງເຖິງຄວາມອ່ອນໄຫວຂອງເສດຖະກິດຕໍ່ກັບຄວາມສ່ຽງຕ່າງໆ. ດັ່ງນັ້ນ ການສະສົມຖັງສຳຮອງເພື່ອເປັນອັນຮອງຮັບໃນກໍລະນີມີວິກິດການ ແມ່ນມີຄວາມສຳຄັນຕໍ່ການຮັກສາສະຖຽນລະພາບຂອງເສດຖະກິດມະຫາພາກ. ການຊະລໍຕົວຂອງອັດຕາການເພີ່ມຂຶ້ນຂອງສິນເຊື່ອແລະການຂາດດຸນງົບປະມານທີ່ຫຼຸດລົງ ຈະຊ່ວຍຫຼຸດຜ່ອນຄວາມຕ້ອງການພາຍໃນ ແລະ ການນຳເຂົ້າ ທີ່ຕ້ອງໄດ້ນຳໃຊ້ເງິນຕາຈາກຖັງສຳຮອງ ພ້ອມກັນນັ້ນລາຄານ້ຳມັນທີ່ຫຼຸດລົງກໍ່ໄດ້ຊ່ວຍຫຼຸດຜ່ອນມູນຄ່າການນຳເຂົ້າ ແລະ ຄວາມຕ້ອງການໃນການໃຊ້ເງິນຕາ.

**ຮູບສະແດງ 16: ຊັບສິນຕ່າງປະເທດສຸດທິ ແລະ ຖັງສຳຮອງເງິນຕາຕ່າງປະເທດ**
(ສ່ວນຮ້ອຍ)




*ແຫຼ່ງຂໍ້ມູນ: ທະນາຄານແຫ່ງສປປລາວ ແລະ ການຄິດໄລ່ຂອງທີມງານທະນາຄານໂລກ*

**ຮູບສະແດງ 17: ຖັງສຳຮອງ**
(ສ່ວນຮ້ອຍ)




*ແຫຼ່ງຂໍ້ມູນ: ທະນາຄານແຫ່ງສປປລາວ ແລະ ການຄິດໄລ່ຂອງທີມງານທະນາຄານໂລກ*

*11 ລະດັບຖັງສຳຮອງຄາດວ່າຈະສາມາດກຸ້ມລະດັບການຊຳລະໜີ້ພາກລັດ (ດອກເບ້ຍແລະຕົ້ນທຶນ) ທີ່ຄາດຄະເນສຳລັບປີ 2015-16 ປະມານ 500 ລ້ານໂດລາ*

*12 ນີ້ແມ່ນການປະເມີນຂອງທີມງານທະນາຄານໂລກອີງຕາມການປະເມີນຂໍ້ມູນການຄ້າຈາກພາກລັດແລະຄູ່ຄ້າ. ຜົນຂອງການປະເມີນຂອງທະນາຄານແຫ່ງ ສປປ ລາວ ແມ່ນກຸ້ມຫຼາຍກວ່າ 4 ເດືອນອີງຕາມຂໍ້ມູນການຄ້າຈາກພາກລັດ. ຂໍ້ມູນຖັງສຳຮອງແມ່ນນຳໃຊ້ແຫຼ່ງດຽວກັນ.*

## *ອັດຕາແລກປ່ຽນ*

15. ທະນາຄານແຫ່ງ ສປປ ລາວ ຮັກສາສະຖຽນລະພາບ ຂອງອັດຕາແລກປ່ຽນເງິນກີບທຽບກັບສະກຸນເງິນຫຼັກ ແຕ່ນະໂຍບາຍການຄຸ້ມຄອງອັດຕາແລກປ່ຽນຄວນພິຈາລະນາຜົນຕໍ່ລະດັບຄັງສຳຮອງ ແລະ ຄວາມສາມາດໃນການແຂ່ງຂັນ. ໃນປີ 2014 ອັດຕາແລກປ່ຽນກີບອ່ອນຄ່າ 2,7 ສ່ວນຮ້ອຍທຽບກັບໂດລາ ໃນຂະນະທີ່ແຂງຄ່າ 2,3 ສ່ວນຮ້ອຍທຽບກັບເງິນບາດ (ຮູບສະແດງ 18). ແຕ່ຍ້ອນອັດຕາເງິນເຟີ້ຂອງ ສປປ ລາວ ສູງກວ່າບັນດາປະເທດຄູ່ຄ້າ ເຮັດໃຫ້ອັດຕາແລກປ່ຽນຕົວຈິງສືບຕໍ່ແຂງຄ່າຂຶ້ນ. ອັດຕາແລກປ່ຽນຕົວຈິງແຂງຄ່າສະສົມຫຼາຍກວ່າ130ສ່ວນຮ້ອຍໃນໄລຍະຫ້າປີຜ່ານມາ (ຮູບສະແດງ 19), ເຊິ່ງກໍ່ເຮັດໃຫ້ສິນຄ້າສົ່ງອອກຂອງລາວມີລາຄາສູງຂຶ້ນໂດຍທຽບຖານ ແລະ ກະທົບກັບຄວາມສາມາດແຂ່ງຂັນ ພ້ອມທັງເຮັດໃຫ້ສິນຄ້ານຳເຂົ້າຖືກລົງເຊິ່ງກໍ່ໝາຍເຖິງການນຳເຂົ້າຫຼາຍຂຶ້ນແລະຄວາມກົດດັນຕໍ່ດຸນການຊຳລະກັບຕ່າງປະເທດ.

## *ສະພາບໃນຂະແໜງເງິນຕາ*

16. ການປ່ອຍສິນເຊື່ອມີອັດຕາຊ້າລົງໃນທ້າຍປີ 2014. ອັດຕາການຂະຫຍາຍຕົວຂອງສິນເຊື່ອຢູ່ໃນລະດັບ 14 ສ່ວນຮ້ອຍໃນເດືອນທັນວາ ທຽບກັບ 35 ສ່ວນຮ້ອຍ ຍ້ອນການປ່ອຍສິນເຊື່ອໃຫ້ພາກເອກະຊົນຊະລໍຕົວລົງໃນທຸກໆຂະແໜງການ (ຮູບສະແດງ 22, ຮູບສະແດງ 23). ສ່ວນໜຶ່ງກໍ່ແມ່ນຕິດພັນກັບຄວາມຫຍຸ້ງຍາກດ້ານງົບປະມານ ແລະ ມາດຕະການຄວບຄຸມລາຍຈ່າຍພາກລັດ. ເຖິງຢ່າງໃດກໍ່ຕາມ ອັດຕາການຂະຫຍາຍຕົວຂອງສິນເຊື່ອໃນລາວ ຍັງສູງຢູ່ທຽບກັບປະເທດອື່ນໆໃນພາກ

**ຮູບສະແດງ 18: ອັດຕາແລກປ່ຽນເງິນກີບ**




*ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ*

**ຮູບສະແດງ 19: ອັດຕາແລກປ່ຽນອັດຕາຕົວຈິງ (REER)**




*ແຫຼ່ງຂໍ້ມູນ: ກອງທຶນການເງິນສາກົນ*

**ຮູບສະແດງ 20: ອັດຕາການຂະຫຍາຍຕົວຂອງສິນເຊື່ອໃນພາກພື້ນອາຊີຕາເວັນອອກແລະປາຊີຟິກ**
(ສ່ວນຮ້ອຍທຽບໃສ່ປີກາຍ)




*ແຫຼ່ງຂໍ້ມູນ: ທະນາຄານແຫ່ງ ສປປ ລາວ ແລະ ບົດລາຍງານ EAP Update October 2014*

ພື້ນ (ຮູບສະແດງ 20). ຂະແໜງອຸດສາຫະກຳ, ກໍ່ສ້າງ ແລະ ຂະແໜງການຄ້າກວມເອົາຫຼາຍກວ່າເຄິ່ງໜຶ່ງຂອງປະລິມານສິນເຊື່ອໃຫ້ພາກເອກະຊົນ (ຮູບສະແດງ 24).

17. ເຖິງແມ່ນວ່າການປ່ອຍສິນເຊື່ອໄດ້ຊະລໍຕົວລົງແລ້ວ ແຕ່ສະພາບຂອງລະບົບທະນາຄານໂດຍລວມກໍ່ຍັງມີຄວາມສ່ຽງ. ຂະແໜງການໄດ້ຂະຫຍາຍຕົວໄວແລະຊັບສິນຂອງຂະແໜງທະນາຄານສືບຕໍ່ເພີ່ມຂຶ້ນຈົນສູງກວ່າ 70 ສ່ວນຮ້ອຍຕໍ່ GDP ທຽບກັບ ລະດັບຕໍ່າກວ່າ 50 ສ່ວນຮ້ອຍໃນສີ່ປີກ່ອນ(ຮູບສະແດງ 21).ທະນາຄານທຸລະກິດລັດກວມເອົາປະມານເຄິ່ງໜຶ່ງ. ອັດຕາການຂະຫຍາຍຕົວໄວຂອງສິນເຊື່ອໂດຍລວມ ແລະ ຂອງຂະແໜງການໃນຊຸມປີຜ່ານມາໄດ້ເປັນສິ່ງທ້າທາຍໃຫ້ວຽກງານຄຸ້ມຄອງທະນາຄານ. ອັດຕາສ່ວນໜີ້ທີ່ບໍ່ເກີດດອກອອກຜົນເລີ່ມເພີ່ມຂຶ້ນ ເຊິ່ງໃນນັ້ນອັດຕາສ່ວນດັ່ງກ່າວສຳລັບກຸ່ມທະນາຄານທຸະກິດລັດເພີ່ມຂຶ້ນຈາກ 3 ສ່ວນຮ້ອຍໃນທ້າຍປີ 2013 ເປັນປະມານ 8 ສ່ວນຮ້ອຍໃນກາງປີ 2014 ແລະ ອັດຕາສ່ວນທຶນຕໍ່ຊັບສິນກໍ່ຫຼຸດລົງຕໍ່າກວ່າ 3 ສ່ວນຮ້ອຍໃນໄລຍະດັ່ງກ່າວ. ທ່າອ່ຽງດັ່ງກ່າວອາດໝາຍເຖິງໜີ້ສິນທີ່ອາດເກີດຂຶ້ນສຳລັບລັດຖະບານ. ທະນາຄານແຫ່ງ ສປປ ລາວ ໄດ້ອອກແຈ້ງການຈຳກັດການອະນຸມັດສ້າງຕັ້ງທະນາຄານໃໝ່ ແລະຈະປະເມີນສະພາບຂອງຂະແໜງການຄືນ. ໃນຂະນະດຽວກັນ ກໍ່ມີແຜນທີ່ຈະສືບຕໍ່ປັບປຸງກົດລະບຽບ ແລະ ສ້າງຕົວຊີ້ວັດຄວາມສ່ຽງທີ່ສ່ອງແສງເຖິງຄວາມໝັ້ນຄົງ. ນອກຈາກນັ້ນ ການສ້າງໃຫ້ມີລະບົບການທົດສອບຄວາມອ່ອນໄຫວຕໍ່ວິກິດການແບບ (stress tests) ເປັນແຕ່ລະໄລຍະເພື່ອຊ່ວຍໃຫ້ທະນາຄານແຫ່ງ ສປປ ລາວ ສາມາດທົດສອບຈຸດແຂງ ແລະ ຈຸດອ່ອນຂອງລະບົບທະນາຄານ ແລະ ສະຖາບັນການເງິນເພື່ອສາມາດສຸມໃສ່ປັບປຸງແລະປະຕິຮູບໃນຈຸດທີ່ຕ້ອງການທີ່ສຸດ.

**ຮູບສະແດງ 21: ຊັບສິນຂອງພາກທະນາຄານ**
(ສ່ວນຮ້ອຍຕໍ່ GDP)




*ແຫຼ່ງຂໍ້ມູນ: ທະນາຄານແຫ່ງສປປລາວ ແລະ ການຄິດໄລ່ຂອງທີມງານ ທະນາຄານໂລກ*

**ຮູບສະແດງ 22: ການປະກອບສ່ວນຕໍ່ການ ຂະຫຍາຍຕົວຂອງສິນເຊື່ອ**
(ສ່ວນຮ້ອຍ ແລະ ຈຸດສ່ວນຮ້ອຍ)




*ແຫຼ່ງຂໍ້ມູນ: ທະນາຄານແຫ່ງສປປລາວ ແລະ ການຄິດໄລ່ຂອງທີມງານ ທະນາຄານໂລກ*

**ຮູບສະແດງ 23: ການປະກອບສ່ວນຕໍ່ການຂະຫຍາຍຕົວຂອງສິນເຊື່ອຈາກແຕ່ລະຂະແໜງການ**
(ຈຸດສ່ວນຮ້ອຍ)




*ແຫຼ່ງຂໍ້ມູນ: ທະນາຄານແຫ່ງສປປລາວ ແລະ ການຄິດໄລ່ຂອງທີມງານ ທະນາຄານໂລກ*

**ຮູບສະແດງ 24: ສິນເຊື່ອໃນແຕ່ລະຂະແໜງການ**
(ສ່ວນຮ້ອຍຕໍ່ GDP)




*ແຫຼ່ງຂໍ້ມູນ: ທະນາຄານແຫ່ງສປປລາວ ແລະ ການຄິດໄລ່ຂອງທີມງານ ທະນາຄານໂລກ*

# ພາກທີ II: ຫົວຂໍ້ສະເພາະ




*Photo by Bart Verweij / World Bank, 2014*

## ປະຊາຄົມ ເສດຖະກິດ ອາຊຽນ (AEC) 2015 – ຜົນກະທົບຕໍ່ ສປປ ລາວ[13]

1. ປະຊາຄົມເສດຖະກິດອາຊຽນ (AEC) ຈະມີຜົນສັກສິດຢ່າງເປັນທາງການໃນທ້າຍປີ 2015, ເຊິ່ງຈະສະແດງໃຫ້ເຫັນເຖິງບາດກ້າວຄັ້ງທຳອິດໃນການສ້າງຕະຫຼາດທີ່ເປັນອັນໜຶ່ງອັນດຽວລະຫວ່າງບັນດາປະເທດ ສະມາຊິກອາຊຽນ. ໃນເງື່ອນໄຂດັ່ງກ່າວນີ້, ມັນມີຄວາມໝາຍຄວາມສຳຄັນ ຄືແນວໃດຕໍ່ກັບ ສປປ ລາວ? ເຊິ່ງປະເທດລາວ ກໍ່ໄດ້ເຊື່ອມໂຍງເຂົ້າໃນພາກພື້ນອາຊຽນຫຼາຍແລ້ວ. ໃນຕົວຈິງ, ການສ້າງຕັ້ງ AEC ໃນປີ 2015 ແມ່ນເປັນພຽງບາດກ້າວທຳອິດເທົ່ານັ້ນ ແລະ ກໍ່ເປັນບາດກ້າວທີ່ສຳຄັນໃນການກໍ່ສ້າງ ຕະຫຼາດຂອງພາກພື້ນທີ່ເປັນອັນໜຶ່ງອັນດຽວກັນ, ແຕ່ວ່າ ຍັງມີຫຼາຍບາດກ້າວທີ່ຈະຕ້ອງໄດ້ປະຕິບັດ ໃນຫຼາຍໆປີຕໍ່ໜ້າເພື່ອໃຫ້ບັນດາປະເທດສະມາຊິກສາມາດໄດ້ຮັບຜົນປະໂຫຍດຈາກປະຊາຄົມດັ່ງກ່າວ. ດັ່ງນັ້ນ ບົດລາຍງານຫຍໍ້ສະບັບນີ້ ແມ່ນຈະຊີ້ແຈງໃຫ້ເຫັນ 4 ດ້ານຕົ້ນຕໍຂອງຜົນກະທົບຈາກການເຊື່ອມໂຍງເຂົ້າສູ່ AEC ຕໍ່ກັບ ສປປ ລາວຄື: ການຄ້າດ້ານສິນຄ້າ; ການຄ້າດ້ານການບໍລິການ; ການລົງທຶນລະຫວ່າງປະເທດ; ແລະ ການອຳນວຍຄວາມສະດວກທາງດ້ານການຄ້າ.

### *ການຄ້າດ້ານສິນຄ້າ*

❖ ໃນປີ 2015 ມີສິ່ງໃດເກີດຂຶ້ນແດ່?

2. ຂໍ້ຕົກລົງວ່າດ້ວຍການຄ້າຂາຍສິນຄ້າໃນກອບອາຊຽນ (ATIGA) ໄດ້ກຳນົດເອົາບັນດາລະບຽບການ ແລະ ຂໍ້ກຳນົດກ່ຽວກັບການນຳເຂົ້າ ແລະ ສົ່ງອອກວັດຖຸສິນຄ້າລະຫວ່າງ ບັນດາປະເທດສະມາຊິກອາຊຽນ. ພັນທະຕົ້ນຕໍໃນກອບຂອງ AEC ແມ່ນພາຍໃນ ປີ 2015, ທຸກໆການຄ້າທີ່ເກີດຂຶ້ນລະຫວ່າງປະເທດສະມາຊິກອາຊຽນແມ່ນຈະໄດ້ຮັບການຍົກເວັ້ນພາສີ. ແຕ່ໃນຕົວຈິງແລ້ວ, ອັດຕາພາສີທັງໝົດ ລວມທັງພາສີສຳລັບສິນຄ້າຢູ່ໃນລາຍການທີ່ມີຄວາມລະອຽດອ່ອນ, ລວມມີສິນຄ້າກະສິກຳທີ່ບໍ່ທັນປຸງແຕ່ງ ໄດ້ຖືກລຶບລ້າງແລ້ວໃນປີ 2010 ໃນ 6 ປະເທດສະມາຊິກທຳອິດຂອງອາຊຽນ (ບຣູໄນ, ອິນໂດເນເຊຍ, ມາເລເຊຍ, ຟີລິບປິນ, ສິງກະໂປ ແລະ ໄທ). ສ່ວນປະເທດອື່ນທີ່ຮ່ວມນຳຫຼັງແມ່ນປະເທດ ກຳປູເຈຍ, ລາວ, ມຽນມ້າ ແລະ ຫວຽດນາມ (CLMV) ແມ່ນມີໄລຍະເວລາດົນກວ່າໃນການປະຕິບັດພັນທະດັ່ງກ່າວ ແລະ ປະຈຸບັນສາມາດລຶບລ້າງອັດຕາພາສີໄດ້ຫຼາຍກວ່າ 80 ສ່ວນຮ້ອຍ ຂອງສິນຄ້ານຳເຂົ້າທັງໝົດ, ເຊິ່ງອັດຕາພາສີທີ່ຍັງບໍ່ທັນລຶບລ້າງເທື່ອນັ້ນ ແມ່ນສຳລັບສິນຄ້າທີ່ມີຄວາມລະອຽດອ່ອນ, ເປັນຕົ້ນແມ່ນສິນຄ້າກະສິກຳທີ່ຍັງບໍ່ທັນປຸງແຕ່ງ. ປະເທດຫວຽດນາມ ໄດ້ຫຼຸດຜ່ອນອັດຕາພາສີຂອງຕົນລົງໃນການນຳເຂົ້າສິນຄ້າກະສິກຳໃຫ້ເຫຼືອໃນລະຫວ່າງ 0 ຫາ 5 ສ່ວນຮ້ອຍ ໃນປີ 2013, ສປປ ລາວ ແລະ ມຽນມ້າ ຈະຕ້ອງໄດ້ຫຼຸດຜ່ອນພາສີລົງໃຫ້ເຫຼືອໃນລະດັບດຽວກັນພາຍໃນປີ 2015, ແລະ ປະເທດກຳປູເຈຍຈະຫຼຸດຜ່ອນລົງພາຍໃນປີ 2017. ປະເທດ CLMV ແມ່ນມີພັນທະໃນການລຶບລ້າງອັດຕາພາສີທັງໝົດ ລວມທັງພາສີສຳລັບສິນຄ້າທີ່ມີຄວາມລະອຽດອ່ອນໃຫ້ໄດ້ພາຍໃນປີ 2018. ໃນດ້ານທິດສະດີ, ເມື່ອພາສີຕ່ຳລົງ ສິນຄ້ານຳເຂົ້າຢູ່ໃນພາກພື້ນກໍ່ຈະມີ

13 *ບົດນີ້ໄດ້ຖືກກະກຽມໂດຍກ້ອນສະຫວ່າງ ຫງາດສາຍຊົນ (ນັກເສດຖະສາດການຄ້າ) ແລະ ຣິຊາດ ຣົກອດ (ນັກເສດຖະສາດອາວຸໂສ)*

ມູນຄ່າຫຼຸດລົງ. ສິ່ງດັ່ງກ່າວອາດຈະເປັນປະໂຫຍດຕໍ່ຜູ້ຊົມໃຊ້ ແລະ ຜູ້ປະກອບການທີ່ຕ້ອງໄດ້ນຳເຂົ້າວັດສະດຸຕ່າງໆ ເພື່ອການປຸງແຕ່ງສິນຄ້າອື່ນໆ, ແຕ່ກົງກັນຂ້າມຈະເຮັດໃຫ້ຜູ້ປະກອບການທີ່ຜະລິດສິນຄ້າປະເພດດຽວກັບສິນຄ້ານຳເຂົ້າ ພົບກັບການແຂ່ງຂັນທີ່ຂຸ້ນຂ້ຽວທາງດ້ານລາຄາ. ລັດຖະບານກໍ່ອາດສູນເສຍລາຍຮັບຈາກພາສີນຳເຂົ້າສ່ວນນີ້ໄປ (ປະມານ 10 ສ່ວນຮ້ອຍ ຂອງລາຍຮັບພາຍໃນທັງໝົດ).

3. ໃນຂະນະດຽວກັນ, ພາຍໃຕ້ກອບ AEC, ປະເທດສະມາຊິກຕ້ອງປະຕິບັດພັນທະໃນການລຶບລ້າງສິ່ງກີດຂວາງທີ່ບໍ່ແມ່ນພາສີນຳອີກ (ຕົວຢ່າງ: ການຕັ້ງໂກຕ້າ, ການນຳໃຊ້ມາດຕະຖານທີ່ບໍ່ເໝາະສົມ, ການອອກໃບອະນຸຍາດ ຫຼື ຂໍ້ຈຳກັດໃນເຂດຊາຍແດນ). ປະເທດສະມາຊິກອາຊຽນທັງໝົດຈະຕ້ອງປະຕິບັດພັນທະດັ່ງກ່າວນີ້ໃຫ້ໄດ້ພາຍໃນປີ 2010, ຍົກເວັ້ນປະເທດຟີລິບປິນ ທີ່ມີໄລຍະຜ່ອນຜັນຈົນຮອດປີ 2013 ແລະ ປະເທດ CLMV ຮອດປີ 2015. ໃນຕົວຈິງ ການຈັດຕັ້ງປະຕິບັດແມ່ນໄປໄດ້ຊ້າ ແລະ ຍິ່ງອັດຕາພາສີຍິ່ງຫຼຸດລົງເຫຼືອເກືອບ 0 ສ່ວນຮ້ອຍ ບັນດາປະເທດຍິ່ງເລີ່ມນຳໃຊ້ມາດຕະການບໍ່ແມ່ນພາສີເຂົ້າມາທົດແທນເພື່ອຄວບຄຸມການນຳເຂົ້າ. ແຕ່ສ່ວນຫຼາຍ ການສ້າງມາດຕະການດັ່ງກ່າວຍັງຂາດການກຳນົດຈຸດປະສົງນະໂຍບາຍທີ່ຈະແຈ້ງ ແລະ ສົມເຫດສົມຜົນ.

### ❖ ຜົນກະທົບຕໍ່ ສປປ ລາວ ແມ່ນຫຍັງ?

4. ລາຄາສຳລັບສິນຄ້ານຳເຂົ້າສຳລັບ ສປປ ລາວ ຄາດວ່າຈະຫຼຸດລົງຫຼັງ ຈາກທີ່ມີການລຶບລ້າງພາສີນຳເຂົ້າສິນຄ້າໃນໄລຍະ ປີ 2015-18. ສິ່ງດັ່ງກ່າວຈະຊ່ວຍຫຼຸດຕົ້ນທຶນໃຫ້ແກ່ບັນດາຜູ້ປະກອບການທີ່ນຳໃຊ້ວັດສະດຸນຳເຂົ້າ ແລະ ຈະສ້າງຜົນປະໂຫຍດໃຫ້ແກ່ຜູ້ບໍລິໂພກຈາກການນຳເຂົ້າ. ຢ່າງໃດກໍ່ຕາມ, ຜູ້ຜະລິດພາຍໃນທີ່ແຂ່ງຂັນກັບສິນຄ້ານຳເຂົ້າ ຈະພົບກັບການແຂ່ງຂັນທີ່ຍາກກວ່າເກົ່າ.

5. ໃນປີ 2015 ສປປ ລາວ ຄາດວ່າຈະສາມາດລົບລ້າງພາສີນຳເຂົ້າສິນຄ້າທັງໝົດ ຍົກເວັ້ນພາສີນຳເຂົ້າສິນຄ້າ 900 ລາຍການ ທີ່ມີຄວາມລະອຽດອ່ອນ (ກວມປະມານ 10 ສ່ວນຮ້ອຍ ຂອງສິນຄ້າໃນລາຍການພາສີທັງໝົດ) ເຊິ່ງອັດຕາພາສີນຳເຂົ້າສິນຄ້າດັ່ງກ່າວຈະເຫຼືອຢູ່ 0-5 ສ່ວນຮ້ອຍ ແລະການນຳເຂົ້າສິນຄ້າ 63 ລາຍການທີ່ມີຄວາມລະອຽດອ່ອນສູງເຊິ່ງຈະຫຼຸດລົງເຫຼືອ 5 ສ່ວນຮ້ອຍ (ກວມປະມານ 1 ສ່ວນຮ້ອຍ ຂອງສິນຄ້າໃນລາຍການພາສີທັງໝົດ). ອັດຕາພາສີສຳລັບສິນຄ້າດັ່ງກ່າວທີ່ຍັງຢູ່ໃນໄລຍະຜ່ອນຜັນຈະຖືກລົບລ້າງໃຫ້ໄດ້ທັງໝົດພາຍໃນປີ 2018. ຮອດເດືອນ ກຸມພາ 2014, ມີປະມານ 79 ສ່ວນຮ້ອຍ ຂອງສິນຄ້າໃນລາຍການພາສີທັງໝົດແມ່ນມີອັດຕາພາສີເທົ່າ 0 ສ່ວນຮ້ອຍ, 17 ສ່ວນຮ້ອຍ ແມ່ນຢູ່ໃນລະຫວ່າງ 0-5 ສ່ວນຮ້ອຍ ແລະ ອີກ 4 ສ່ວນຮ້ອຍແມ່ນມີອັດຕາສູງກວ່າ 5 ສ່ວນຮ້ອຍ. ອັດຕາພາສີທີ່ຍັງເຫຼືອເຫຼົ່ານີ້ ສ່ວນໃຫຍ່ແມ່ນໃຊ້ກັບສິນຄ້າປະເພດກະສິກຳທີ່ຍັງບໍ່ທັນໄດ້ຮັບການປຸງແຕ່ງ, ລວມທັງເຂົ້າ. ໃນເວລາທີ່ການຈັດຕັ້ງປະຕິບັດການຫຼຸດຜ່ອນພາສີເລີ່ມໃກ້ເຂົ້າມາ ລັດຖະບານອາດຈະສູນເສຍລາຍຮັບຈາກການເກັບພາສີ, ໂດຍສະເພາະການເກັບພາສີນຳເຂົ້າພາຫະນະຈາກອາຊຽນ. ຕໍ່ກັບອັດຕາພາສີທີ່ຈະຫຼຸດລົງນີ້, ລັດຖະບານຈຶ່ງໄດ້ຫັນຈາກການເກັບພາສີ (ໃນເວລານຳເຂົ້າ) ໄປສູ່ການເກັບອາກອນຊົມໃຊ້ຈາກການຂາຍພາຫະນະ (ໃນເວລາຂາຍ).

**6. ໃນດ້ານການສົ່ງອອກ, ສປປ ລາວ ໄດ້ຮັບຜົນປະໂຫຍດຈາກການຍົກເວັ້ນພາສີໃນການສົ່ງອອກສິນຄ້າໄປຫາ 6 ປະເທດສະມາຊິກທໍາອິດຂອງອາຊຽນທີ່ເຂົ້າເປັນສະມາຊິກໃນປີ 2010 ແລະ ຍັງຈະໄດ້ຮັບຜົນປະໂຫຍດຈາກການຫຼຸດອັດຕາພາສີສໍາລັບສິນຄ້າສົ່ງອອກໄປປະເທດກໍາປູເຈຍ, ຫວຽດນາມ ແລະ ມຽນມ້າ ໃນໄລຍະປີ 2015-18.** ການສົ່ງອອກສິນຄ້າຈາກລາວ ໄປປະເທດໃນອາຊຽນບໍ່ໄດ້ມີການເພີ່ມຂຶ້ນຢ່າງກ້າວກະໂດດ ເຖິງແມ່ນວ່າອັດຕາພາສີຫຼຸດລົງຫຼາຍໃນປີ 2010 ເຊິ່ງກໍ່ໝາຍຄວາມວ່າບັນຫາຕົ້ນຕໍແທ້ຈິງແລ້ວແມ່ນບັນຫາດ້ານຄວາມອາດສາມາດໃນການສະໜອງການຜະລິດ ແລະ ການແຂ່ງຂັນຂອງພາກເອກະຊົນຂອງລາວຫຼາຍກວ່າ ບັນຫາການປະຕິບັດການຫຼຸດຜ່ອນອັດຕາພາສີ. ອີກດ້ານໜຶ່ງ ຜູ້ສົ່ງອອກຂອງລາວຈໍານວນຫຼາຍຍັງພົບກັບບັນຫາ ການປະຕິບັດມາດຕະການທີ່ບໍ່ແມ່ນພາສີ ເຊັ່ນ: ການຈັດຕັ້ງປະຕິບັດເງື່ອນດ້ານສຸຂະອະນາໄມ ແລະ ສຸຂະອະນາໄມພືດ ລວມທັງມາດຕະຖານທາງດ້ານວິຊາການຕ່າງໆ ທີ່ບັນດາປະເທດຕ່າງໆນໍາໃຊ້ເຊິ່ງການແກ້ໄຂສິ່ງທ້າທາຍດັ່ງກ່າວແມ່ນຍັງຕ້ອງໃຊ້ເວລາ.

## *ການຄ້າດ້ານການບໍລິການ*

### ❖ ໃນປີ 2015 ມີສິ່ງໃດເກີດຂຶ້ນແດ່?

**7. ຂໍ້ກໍານົດກ່ຽວກັບການຄ້າດ້ານການບໍລິການໃນບັນດາປະເທດອາຊຽນແມ່ນໄດ້ກໍານົດຢູ່ໃນຂໍ້ຕົກລົງວ່າດ້ວຍຂອບວຽກກ່ຽວກັບການບໍລິການໃນອາຊຽນ (AFAS).** ຂໍ້ກໍານົດດັ່ງກ່າວລວມເອົາວຽກງານດ້ານການສະໜອງການບໍລິການຂ້າມແດນ, ການລົງທຶນຕ່າງປະເທດໃນຂະແໜງບໍລິການ ແລະ ການເຄື່ອນຍ້າຍຂອງແຮງງານລະຫວ່າງປະເທດເພື່ອສະໜອງການບໍລິການຕ່າງໆ. ບັນດາປະເທດສະມາຊິກອາຊຽນໄດ້ເພີ່ມທະວີເອົາໃຈໃສ່ຫຼຸດຜ່ອນສິ່ງກີດຂວາງທາງດ້ານການຄ້າດ້ານການບໍລິການ ເພື່ອບັນລຸໃຫ້ໄດ້ຕາມຈຸດປະສົງຂອງປະຊາຄົມເສດຖະກິດອາຊຽນ (AEC), ແຕ່ການຈັດຕັ້ງປະຕິບັດຕົວຈິງຍັງມີຄວາມຊັກຊ້າ. ເຖິງວ່າໃນປະຈຸບັນ ສິ່ງກີດຂວາງດ້ານການສະໜອງການບໍລິການລະຫວ່າງປະເທດໄດ້ຫຼຸດຜ່ອນລົງຫຼາຍແລ້ວກໍ່ຕາມ, ແຕ່ຫຼາຍປະເທດຍັງຈໍາກັດເພດານສໍາລັບການລົງທຶນຈາກຕ່າງປະເທດໃນຂະແໜງບໍລິການຢູ່ໃນຫຼາຍປະເທດໃນອາຊຽນ. ໃນກອບຂອງອາຊຽນ ຍັງມີຫຼາຍວຽກງານທີ່ຈະຕ້ອງໄດ້ປະຕິບັດເພື່ອເຮັດໃຫ້ແຮງງານສາມາດເຄື່ອນຍ້າຍໄປເຮັດວຽກໄດ້ຢ່າງອິດສະຫຼະລະຫວ່າງປະເທດພາຍໃນພາກພື້ນ ເຊິ່ງກໍ່ອາດຈະບໍ່ເປັນການງ່າຍ. ພັນທະຕົ້ນຕໍໃນກອບ AEC ແມ່ນເພື່ອອໍານວຍຄວາມສະດວກໃຫ້ແກ່ການອະນຸຍາດໃຫ້ນັກທຸລະກິດສາມາດເຂົ້າປະເທດໄດ້ຊົ່ວຄາວ, ການໂຍກຍ້າຍພະນັກງານບໍລິສັດ ແລະ ການເຄື່ອນຍ້າຍຂອງບຸກຄົນທີ່ມີສີມືໃນອາຊີບສະເພາະບາງປະເພດເທົ່ານັ້ນ. ອາຊີບທີ່ອະນຸຍາດໃຫ້ເຄື່ອນຍ້າຍສະດວກໃນກອບ AEC ລວມມີເອົາພຽງແຕ່ ອາຊີບນາງພະຍາບານ, ນັກອອກແບບ, ວິສະວະກອນ, ນັກການຢາ, ໝໍປົວແຂ້ວ, ນັກບັນຊີ ແລະ ນັກສໍາຫຼວດເທົ່ານັ້ນ. ຕົວຢ່າງ: ນັບແຕ່ປີ 2015 ນັກວິສະວະກອນລາວສາມາດເດີນທາງໄປເຮັດວຽກຢູ່ໄທໄດ້ຊົ່ວຄາວອີງຕາມຄວາມຮັບຮູ້ຮ່ວມກັນ ຢ່າງເປັນເອກະພາບທັງສອງຝ່າຍຕໍ່ກັບຄວາມສາມາດ ແລະ ປະສົບການຂອງຜູ້ກ່ຽວ. ສ່ວນການເຄື່ອນຍ້າຍແຮງງານດິບພາຍໃນກອບອາຊຽນແມ່ນຍັງຖືກຫ້າມຢູ່ ອີງຕາມກົດໝາຍຂອງປະເທດສະມາຊິກ ແລະ ບໍ່ທັນມີພັນທະໜ້າທີ່ກໍານົດໃນ AEC ກ່ຽວກັບແຮງງານ

ດົນເທື່ອ.

❖ ຜົນກະທົບຕໍ່ ສປປ ລາວ ແມ່ນຫຍັງ?

8. ສປປ ລາວ ມີພັນທະພາຍໃຕ້ AEC ກໍ່ຄືພາຍໃຕ້ອົງການການຄ້າໂລກ (WTO), ໃນການເພີ່ມຂະແໜງການບໍລິການຫຼາຍປະເພດຂຶ້ນຕື່ມທີ່ສາມາດເປີດໃຫ້ຕ່າງປະເທດມາລົງທຶນ. ຮອດປີ 2015, ປະເທດລາວແມ່ນມີພັນທະໃນການເພີ່ມເພດານສັດສ່ວນການລົງທຶນຈາກຕ່າງປະເທດໃນຂະແໜງບໍລິການ ເປັນ 70 ສ່ວນຮ້ອຍ. ໃນຫຼາຍຂະແໜງການກໍ່ບໍ່ໄດ້ມີການຈຳກັດການລົງທຶນຈາກຕ່າງປະເທດ ແຕ່ຢ່າງໃດເລີຍ, ໝາຍວ່າອະນຸຍາດໃຫ້ການລົງທຶນຈາກຕ່າງປະເທດສາມາດກວມ 100 ສ່ວນຮ້ອຍ. ແຕ່ຢ່າງໃດກໍ່ຕາມ, ເຊັ່ນດຽວກັບການຄ້າທາງດ້ານສິນຄ້າ, ບັນຫາທີ່ສຳຄັນທີ່ສຸດສຳລັບການດຶງດູດ ການລົງທຶນຈາກຕ່າງປະເທດເຂົ້າໃນຫຼາຍຂະແໜງການ ແມ່ນຕິດພັນກັບລັກສະນະຂອງ ສປປ ລາວ ທີ່ເປັນຕະຫຼາດນ້ອຍ ແລະ ມີຕົ້ນທຶນໃນການເຮັດທຸລະກິດສູງ. ການເພີ່ມທະວີປະລິມານ ແລະ ຄຸນນະພາບຂອງການລົງທຶນຈາກຕ່າງປະເທດໃນຂະແໜງບໍລິການຢູ່ ສປປ ລາວ ເປັນວິທີການທີ່ດີທີ່ສຸດເພື່ອເພີ່ມຄວາມສາມາດໃນການແຂ່ງຂັນໃຫ້ແກ່ຜູ້ປະກອບການໃນ ສປປ ລາວ ລວມທັງຜູ້ປະກອບການໃນອຸດສາຫະກຳປຸງແຕ່ງທີ່ຕ້ອງໄດ້ອາໃສ ທຸລະກິດບໍລິການ.

9. ພັນທະໃນ AEC ກ່ຽວກັບການເຄື່ອນຍ້າຍຂອງບາງອາຊີບຄາດວ່າຈະບໍ່ສົ່ງຜົນກະທົບຕໍ່ ສປປ ລາວ ຢ່າງຫຼວງຫຼາຍ ເນື່ອງຈາກປະເທດເຮົາຍັງຂາດແຮງງານທີ່ມີສີມືໃນວິຊາອາຊີບດັ່ງກ່າວຢູ່. ອີງຕາມທິດສະດີແລ້ວ, ມັນອາດຈະເປັນການງ່າຍ ແລະ ປະຢັດຕົ້ນທຶນ ສຳລັບບໍລິສັດໃນການນຳເຂົ້າການບໍລິການຫຼັງຈາກປີ 2015 ເພື່ອເພີ່ມຄວາມສາມາດໃນການແຂ່ງຂັນ, ແຕ່ສຳລັບ ສປປ ລາວ ແລ້ວ ເບິ່ງຄືວ່າຈະເປັນການຍາກໃນການທີ່ຈະສົ່ງອອກແຮງງານທີ່ຊຳນານງານນີ້ໄປຕ່າງປະເທດໃນອະນາຄົດອັນໃກ້ນີ້. ແຕ່ຢ່າງໃດກໍ່ຕາມ, ການຈັດຕັ້ງປະຕິບັດຂໍ້ຕົກລົງສຳລັບການເຄື່ອນຍ້າຍແຮງງານດັ່ງກ່າວແມ່ນຍັງຕ້ອງມີອີກຫຼາຍຂັ້ນຕອນ ບໍ່ພຽງແຕ່ຮຽກຮ້ອງໃຫ້ມີການປັບປຸງຂັ້ນຕອນການອອກວີຊາ ແລະ ໃບອະນຸຍາດເຮັດວຽກໃຫ້ງ່າຍດາຍແລະເປັນເອກະພາບກວ່າເກົ່າ, ແຕ່ມັນຍັງຮຽກຮ້ອງໃຫ້ມີການປະຕິຮູບທາງດ້ານກົດໝາຍ ແລະ ຂໍ້ກຳນົດພາຍໃນ ສປປ ລາວ ໃນການຮັບຮູ້ລະດັບໃບປະກາດແລະລະດັບສີມືຂອງແຮງງານຈາກປະເທດອື່ນໆໃນອາຊຽນ.

## *ການລົງທຶນ*

❖ ໃນປີ 2015 ມີສິ່ງໃດເກີດຂຶ້ນແດ່?

10. ພາຍໃຕ້ຂໍ້ຕົກລົງອາຊຽນວ່າດ້ວຍການລົງທຶນຢ່າງຮອບດ້ານ, ປະເທດສະມາຊິກ ອາຊຽນ ໄດ້ໃຫ້ຄຳໝັ້ນສັນຍາ ໃນການສ້າງລະບອບສົ່ງເສີມການລົງທຶນທີ່ເປີດກວ້າງ ໂດຍປາສະຈາກມາດຕະການຈຳກັດ ຫຼື ການປະຕິບັດຈຳແນກການລົງທຶນຕ່າງປະເທດ. ການລົງທຶນຈາກຕ່າງປະເທດຈະໄດ້ຮັບການອຳນວຍຄວາມສະດວກ ໂດຍການປັບປຸງລະບຽບ, ຂໍ້ກຳນົດ ແລະ ຂັ້ນຕອນຕ່າງໆ ໃຫ້ມີຄວາມໂປ່ງໃສຂຶ້ນຕື່ມ, ມີຄວາມສອດຄ່ອງ ແລະ ມີຄວາມແນ່ນອນກວ່າເກົ່າ. ການສະເໜີຂໍລົງທຶນ ແລະ ການອະນຸມັດການລົງທຶນຄາດວ່າຈະໄດ້ຮັບການປັບປຸງໃຫ້ມີຄວາມງ່າຍດາຍ ແລະ ໂປ່ງໃສ ເພື່ອດຶງດູດ ແລະ ອຳນວຍຄວາມສະດວກໃຫ້ແກ່ການລົງທຶນຈາກຕ່າງປະເທດເຂົ້າມາໃນພາກພື້ນ.ນອກຈາກການຄ້າທາງດ້ານການບໍລິການແລ້ວ, ລະບອບ

ການສົ່ງເສີມການລົງທຶນດັ່ງກ່າວຍັງກວມເອົາບັນດາຂະແໜງການປຸງແຕ່ງ, ກະສິກຳ, ການປະມົງ, ປ່າໄມ້, ຂຸດຄົ້ນບໍ່ແຮ່ ແລະ ເໝືອງ. ນັກລົງທຶນຈະໄດ້ຮັບການປົກປ້ອງຢ່າງເໝາະສົມໂດຍຜ່ານຂັ້ນຕອນ ແລະ ມາດຕະການແກ້ໄຂຂໍ້ຂັດແຍ່ງດ້ວຍຄວາມໂປ່ງໃສສອດຄ່ອງກັບມາດຕະຖານແລະກົດລະບຽບສາກົນ.

### ❖ ຜົນກະທົບຕໍ່ ສປປ ລາວ ແມ່ນຫຍັງ?

11. ສປປ ລາວ ກໍ່ໃຫ້ຄຳໝັ້ນສັນຍາໃນການສ້າງລະບົບການສົ່ງເສີມການລົງທຶນແບບເປີດກວ້າງເພື່ອຄວາມສອດຄ່ອງກັບເງື່ອນໄຂຂອງ AEC ແລະ ໄດ້ເອົາໃຈໃສ່ໃນການປະຕິບັດຕາມກົດໝາຍການສົ່ງເສີມການລົງທຶນສະບັບປັບປຸງ, ລຶບລ້າງທຸກມາດຕະການແບ່ງແຍກ, ຍົກເລີກຂັ້ນຕອນໃນການຂໍໃບອະນຸຍາດການລົງທຶນ ແລະ ຮັບປະກັນໃຫ້ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດໄດ້ຮັບການປະຕິບັດທີ່ເທົ່າທຽມກັນ. ຢ່າງໃດກໍ່ຕາມ, ໃນຕົວຈິງກໍ່ຍັງມີຄວາມແຕກໂຕນຫຼາຍແລະເວົ້າລວມຍັງຂາດຄວາມໂປ່ງໃສທີ່ເປັນສິ່ງສຳຄັນໃນການດຶງດູດການລົງທຶນຈາກຕ່າງປະເທດທີ່ມີຄຸນນະພາບມາ ສປປ ລາວ. ການຂໍໃບທະບຽນ ແລະ ໃບອະນຸຍາດຫຼາຍຂັ້ນຕອນໃນຂັ້ນຂະແໜງການທັງໃຊ້ເວລາດົນຫຼາຍໃນການປະກອບເອກະສານໃຫ້ຄົບຖ້ວນ ແລະ ເພື່ອໄດ້ຮັບການອະນຸມັດ. ມີພຽງບາງຂັ້ນຕອນເທົ່ານັ້ນທີ່ຄອບຄຸມໂດຍລະບົບຄອມພິວເຕີ. ກົນໄກການປົກປ້ອງແລະແກ້ໄຂຂໍ້ຂັດແຍ່ງໃຫ້ແກ່ນັກລົງທຶນຍັງບໍ່ທັນໄດ້ດີ ເນື່ອງຈາກຂາດຄວາມໂປ່ງໃສ ແລະ ຂັ້ນຕອນໃນການປະກາດລົ້ມລະລາຍຍັງຢູ່ຂັ້ນພື້ນຖານຢູ່.

## *ການອຳນວຍຄວາມສະດວກທາງດ້ານການຄ້າ*

### ❖ ໃນປີ 2015 ມີສິ່ງໃດເກີດຂຶ້ນແດ່?

12. ພາຍໃຕ້ກອບ AEC ປະເທດສະມາຊິກມີພັນທະໃນການອຳນວຍຄວາມສະດວກ ເພື່ອສົ່ງເສີມການຄ້າຢ່າງເປີດກວ້າງ ໂດຍຜ່ານຂັ້ນຕອນທາງການຄ້າ ແລະ ພາສີລະບົບດຽວທີ່ເປັນເອກະພາບ ແລະ ໄດ້ມາດຕະຖານເລັ່ງໃສ່ຫຼຸດຜ່ອນຕົ້ນທຶນດ້ານທຸລະກຳໃນການເຮັດການຄ້າ. ໃນລະດັບປະເທດ, ຂັ້ນຕອນການຊຳລະແລະແຈ້ງພາສີຈະໄດ້ຮັບການປັບປຸງແລະຄຸ້ມຄອງໂດຍລະບົບ ຄອມພິວເຕີໂດຍນຳໃຊ້ລະບົບການຄຸ້ມຄອງຄວາມສ່ຽງ ແລະ ສົມທົບກັບຂັ້ນຕອນທາງດ້ານກົດໝາຍທີ່ງ່າຍຂຶ້ນ ແລະ ເປັນເອກະພາບກັນລວມທັງຂັ້ນຕອນການຊຳລະພາສີ ແລະ ການອອກທະບຽນ ແລະ ໃບອະນຸຍາດ ໂດຍຜ່ານການບໍລິການປະຕູດຽວແຫ່ງຊາດ. ຢ່າງໃດກໍ່ຕາມ, ຕົວຈິງແລ້ວບໍ່ແມ່ນທຸກໆປະເທດສະມາຊິກຈະສາມາດນຳໃຊ້ລະບົບເຫຼົ່ານີ້ໄດ້ຢ່າງເຕັມສ່ວນກ່ອນເຂົ້າ AEC ປີ 2015. ບັນດາປະເທດສະມາຊິກມີພັນທະໃນການສ້າງຊ່ອງທາງໃນການເຂົ້າຫາຂໍ້ມູນ ແລະ ລະບົບເກັບຮັກສາຂໍ້ມູນທາງດ້ານການຄ້າແບບອີເລັກໂຕຼນິກເປັນຕົ້ນກົດໝາຍ, ຂໍ້ກຳນົດແລະຂໍ້ມູນກ່ຽວກັບຂັ້ນຕອນທາງດ້ານການຄ້າ, ຮູບສະແດງຂອງການຄຸ້ມຄອງ ແລະ ຂັ້ນຕອນຂອງການນຳເຂົ້າແລະສົ່ງອອກ. ໃນລະດັບພາກພື້ນ, ການບໍລິການປະຕູດຽວແຫ່ງຊາດຈະສັງລວມເຂົ້າໃນການບໍລິການປະຕູດຽວຂອງອາຊຽນ.

### ❖ ຜົນກະທົບຕໍ່ ສປປ ລາວ ແມ່ນຫຍັງ?

13. ສປປ ລາວ ໄດ້ມີບາດກ້າວຄືບໜ້າດີສົມຄວນໃນວຽກງານການອຳນວຍຄວາມສະດວກທາງ

ການຄ້າ, ແຕ່ຍ້ອນສະພາບການເປັນປະເທດທີ່ບໍ່ມີຊາຍແດນຕິດກັບທະເລເຮັດໃຫ້ມີຕົ້ນທຶນທາງການຄ້າສູງ (ຮູບສະແດງ 25). ເຖິງວ່າການປະຕິບັດພັນທະໃນກອບ AEC ຈະຊ່ວຍເຮັດໃຫ້ປະເທດໄດ້ຮັບຜົນປະໂຫຍດໃນລະດັບໜຶ່ງ ແຕ່ການປັບປຸງວຽກງານການອຳນວຍຄວາມສະດວກທາງການຄ້າ, ເປັນຕົ້ນການປັບປຸງຂັ້ນຕອນຢູ່ດ່ານຊາຍແດນທີ່ວ່ອງໄວ ແລະ ງ່າຍດາຍຂຶ້ນກວ່າເກົ່າກໍ່ຊ່ວຍສ້າງຜົນປະໂຫຍດໄປໃນໂຕຢູ່ແລ້ວ. ຄວາມຈິງ ສປປ ລາວ ແມ່ນໜຶ່ງໃນບັນດາປະເທດສະມາຊິກ ອາຊຽນທີ່ໄດ້ສຳເລັດການສ້າງຊ່ອງທາງເຂົ້າຫາຂໍ້ມູນທາງການຄ້າແບບອີເລັກໂຕຼນິກ, ເຊິ່ງ ສປປ ລາວ ໄດ້ສ້າງລະບົບດັ່ງກ່າວ ແລ້ວໃນປີ 2012 ເພື່ອເປັນລະບົບເກັບຮັກສາຂໍ້ມູນທາງດ້ານຄ້າແຫ່ງຊາດ. ຊ່ອງທາງດັ່ງກ່າວໄດ້ສະໜອງຂໍ້ມູນອອກສູ່ສາທາລະນະຊົນຮັບຊາບກ່ຽວກັບກົດໝາຍ, ຂໍ້ກຳນົດ ແລະ ຂັ້ນຕອນຕ່າງໆທີ່ກ່ຽວຂ້ອງກັບການຄ້າ. ພ້ອມນີ້, ສປປ ລາວ ຍັງມີຄວາມຄືບໜ້າຢ່າງຫຼວງຫຼາຍໃນການນຳໃຊ້ລະບົບພາສີທີ່ຄອບຄຸມໂດຍຄອມພິວເຕີ ເພື່ອປັບປຸງການຄຸ້ມຄອງການຄ້າຢູ່ດ່ານ ແລະ ໄດ້ເລີ່ມວຽກງານອອກແບບການບໍລິການປະຕູດຽວແຫ່ງຊາດ. ຢ່າງໃດກໍ່ຕາມ, ຍັງມີຫຼາຍວຽກງານທີ່ຈຳເປັນຕ້ອງໄດ້ເຮັດ ເພື່ອຫຼຸດຜ່ອນຕົ້ນທຶນທາງການຄ້າ ແລະ ຍົກລະດັບມາດຕະຖານການປະຕິບັດງານໃຫ້ເທົ່າທຽມກັບປະເທດອື່ນໃນພາກພື້ນອາຊຽນ.

14. ເພື່ອຮັບປະກັນໃຫ້ ສປປ ລາວ ໄດ້ຮັບໂອກາດ ແລະ ໄດ້ຮັບຜົນປະໂຫຍດຈາກການເຊື່ອມໂຍງເຂົ້າໃນພາກພື້ນ, ສປປ ລາວ ຈຳເປັນຈະຕ້ອງສືບຕໍ່ການປະຕິຮູບລົງເລິກໃນຫຼາຍດ້ານທີ່ມີຄວາມສຳຄັນຕໍ່ການປັບປຸງ ຄວາມສາມາດໃນການແຂ່ງຂັນໃຫ້ແກ່ພາກເອກະຊົນ. ວຽກງານທີ່ເປັນບູລິມະສິດລວມມີການສືບຕໍ່ປະຕິຮູບທາງດ້ານກົດໝາຍ ແລະ ນະໂຍບາຍພ້ອມທັງການຈັດຕັ້ງປະຕິບັດພັນທະຕ່າງໆໃຫ້ມີປະສິດທິພາບຕໍ່ໄປນີ້ (i) ການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ຫຼຸດຜ່ອນການປະຕິບັດມາດຕະການ ທີ່ບໍ່ແມ່ນພາສີ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍທາງການຄ້າລົງ; (ii) ອຳນວຍຄວາມສະດວກການເຮັດຂໍ້ຕົກລົງ ແລະ ຮັບຮູ້ຮ່ວມກັນກ່ຽວກັບສາຂາອາຊີບໃນກອບ AEC ແລະ ການຍົກລະດັບສີມືແຮງງານ; (iii) ສ້າງລະບົບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນທີ່ມີຄວາມໂປ່ງໃສ ແລະ ປາສະຈາກການແບ່ງແຍກ; ແລະ (iv) ສົ່ງເສີມການລົງທຶນ ທີ່ມີຄຸນນະພາບ.

**ຮູບສະແດງ 25: ຕົ້ນທຶນທາງການຄ້າຍັງສູງ**
ຄ່າໃຊ້ຈ່າຍໃນການສົ່ງອອກແລະນຳເຂົ້າ (US$ ຕໍ່ ຄອນເທນເນີ້)




*ແຫຼ່ງຂໍ້ມູນ: ບົດລາຍງານແວດລ້ອມການດຳເນີນທຸລະກິດ 2013, 2014, 2015*



*Photo by Stanislas Fradelizi / World Bank, 2011*

## ເສີມຂະຫຍາຍການສ້າງວຽກເຮັດງານທຳຢ່າງມີສະມັດຕະພາບ ເພື່ອການເຕີບໂຕຢ່າງກວ້າງຂວາງ

1. **ໃນຫວ່າງບໍ່ດົນມານີ້, ສື່ມວນຊົນໄດ້ນຳສະເໜີເຖິງ "ບັນຫາທາງດ້ານສີມືແຮງງານ" ຢູ່ໃນ ສປປ ລາວ ເຊິ່ງໄດ້ເຮັດໃຫ້ເກີດມີການສຸມໃສ່ການລິເລີ່ມພັດທະນາສີມືແຮງງານຢ່າງຫຼວງຫຼາຍ.** ໃນບົດຂ່າວທີ່ກຳລັງເປັນທີ່ສົນໃຈຂະນະນີ້ກ່ຽວກັບການເພີ່ມຄ່າແຮງງານ ແລະ ຄຳຮ້ອງທຸກຈາກບັນດາຜູ້ປະກອບການກ່ຽວກັບການຂາດແຄນແຮງງານທີ່ມີສີມື ໄດ້ເພີ່ມທະວີຄວາມກັງວົນໃຫ້ແກ່ຜູ້ປະກອບການຕ່າງໆວ່າແຮງງານລາວນັ້ນມີທັກສະພຽງພໍ ເພື່ອຕອບສະໜອງຄວາມຕ້ອງການຂອງພາກທຸລະກິດແລ້ວບໍ. ອີງຕາມບົດປະເມີນແວດລ້ອມທາງດ້ານການລົງທຶນທີ່ສຳເລັດໃນຫວ່າງບໍ່ດົນມານີ້[14] ໄດ້ໃຫ້ຮູ້ວ່າ ສີມືແຮງງານທີ່ຍັງຈຳກັດເປັນບັນຫາຕົ້ນຕໍໃນການສົ່ງເສີມພາກເອກະຊົນໃຫ້ຂະຫຍາຍຕົວໃນ ສປປ ລາວ ຫຼາຍກວ່າບັນຫາການຂາດແຄນດ້ານໂຄງລ່າງ ອີງຕາມຄຳຄິດເຫັນຈາກຜູ້ປະກອບການຕ່າງໆ ໃນການສຳຫຼວດວິສາຫະກິດທີ່ຜ່ານມາ. ພ້ອມນີ້, ສະມັດຕະພາບການຜະລິດຂອງແຮງງານໃນ ສປປ ລາວ ຄາດວ່າໄດ້ພຽງເຄິ່ງໜຶ່ງ ຂອງລະດັບສຳລັບປະເທດທີ່ພັດທະນາໃນລະດັບດຽວກັນນີ້. ນອກຈາກນີ້ກໍ່ ສັງເກດໄດ້ວ່າ ສະມັດຕະພາບແຮງງານລາວໃນໄລຍະທົດສະວັດຜ່ານມາຍັງບໍ່ທັນເພີ່ມຂຶ້ນຈົນເປັນທີ່ສັງເກດໄດ້.

2. **ແຕ່ຢ່າງໃດກໍ່ຕາມ, ບົດລາຍງານການພັດທະນາ ສປປ ລາວ ປີ 2014[15] ພັດມີຂໍ້ໂຕ້ຖຽງວ່າບັນຫາທາງດ້ານກຳລັງແຮງງານທີ່ ສປປ ລາວ ພວມປະເຊີນຢູ່ນັ້ນບໍ່ແມ່ນທາງດ້ານການສຶກສາພຽງແຕ່ຢ່າງດຽວ.** ການເບິ່ງໃນແງ່ຂອງການພັດທະນາສີມືແຮງງານພຽງແຕ່ຢ່າງດຽວເພື່ອແກ້ໄຂບັນຫານັ້ນອາດຈະບໍ່ແມ່ນການແກ້ໄຂບັນຫາທີ່ເປັນພື້ນຖານເຊິ່ງກວມເອົາດ້ານການເຕີບໂຕທາງດ້ານເສດຖະກິດ, ການສ້າງວຽກເຮັດງານທຳ ແລະ ການຫຼຸດຜ່ອນຄວາມທຸກຍາກ. ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃຫ້ທຸລະກິດດ້ານກະສິກຳ ແລະ ບໍ່ແມ່ນກະສິກຳເພື່ອດຶງດູດການລົງທຶນ ແລະ ເຮັດໃຫ້ເສດຖະກິດ ຂະຫຍາຍຕົວນັ້ນເປັນບາດກ້າວທີ່ສຳຄັນກ່ອນໝູ່ໝົດໃນການພັດທະນາສີມືແຮງງານ.

3. **ສິ່ງໜຶ່ງທີ່ຊີ້ບອກວ່າບັນຫາທາງດ້ານໂຄງສ້າງແຮງງານທີ່ໃຫຍ່ກວ່ານັ້ນແມ່ນບັນຫາທີ່ຜູ້ປະກອບການຍັງຂາດແຄນແຮງງານ, ແມ່ນແຕ່ໃນວຽກທີ່ຕ້ອງການສີມືແຮງງານຕ່ຳກໍ່ຕາມ.** ເກືອບເຄິ່ງໜຶ່ງຂອງຈຳນວນຜູ້ປະກອບການທັງໝົດໃນ ສປປ ລາວ ໄດ້ຊີ້ໃຫ້ເຫັນວ່າເຂົາເຈົ້າຍັງຂາດ ຫຼື ມີຜູ້ສະໝັກເຮັດວຽກໜ້ອຍຫຼາຍ ໃນຕຳແໜ່ງທີ່ບໍ່ຕ້ອງການສີມືແຮງງານເລີຍ (ເບິ່ງຮູບສະແດງ 26) ເຊິ່ງມີອັດຕາຂາດແຄນແຮງງານສູງກວ່າ ໃນປະເທດອ້ອມຂ້າງ. ປະກົດການດັ່ງກ່າວມັນຊີ້ໃຫ້ເຖິງບັນຫາທາງດ້ານກຳລັງແຮງງານ. ເປັນຫຍັງຈຶ່ງບໍ່ມີຄົນ ສະໝັກເຮັດວຽກໃນຂະແໜງອຸດສະຫະກຳການຜະລິດ ເຊິ່ງມັນເປັນໂອກາດທີ່ດີກວ່າ? ສປປ ລາວ ມີບັນຫາຂາດແຄນແຮງງານ ແລະ/ຫຼື ບັນຫາແຮງງານບໍ່ມີສີມືກັນແທ້? ຫຼື ຍ້ອນຂາດແຄນໂອກາດທາງດ້ານວຽກເຮັດງານທຳທີ່ບໍ່ນອນຢູ່ໃນຂະແໜງກະສິກຳທີ່ໜ້າສົນໃຈ ແລະ ມີຄ່າຈ້າງສູງກວ່າບໍ?

---

14 Record, R. et al. (2014) *"ການປະເມີນແວດລ້ອມການລົງທຶນໃນປີ 2014: ຄວາມບໍ່ແນ່ນອນທາງດ້ານນະໂຍບາຍໃນທ່າມກາງການຂະຫຍາຍຕົວຂອງຂະແໜງຊັບພະຍາກອນທຳມະຊາດ", ນະຄອນວໍຊິງຕັນ, DC: ທະນາຄານໂລກ.*

15 Sondergaard, L. et al. (2014) *"ບົດລາຍງານການພັດທະນາ ສປປ ລາວ ປີ 2014: ເສີມຂະຫຍາຍການສ້າງວຽກເຮັດງານທຳ ຢ່າງມີສະມັດຕະພາບ ເພື່ອການເຕີບໂຕຢ່າງກວ້າງຂວາງ", ນະຄອນວໍຊິງຕັນ, DC: ທະນາຄານໂລກ.*

ຮູບສະແດງ 26: ອັດຕາສ່ວນຂອງຜູ້ປະກອບການໃນ ສປປ ລາວ, ຫວຽດນາມ ແລະ ແຂວງຢູນນານ (ຈີນ) ທີ່ຮ້ອງທຸກວ່າເຂົາເຈົ້າບໍ່ ມີ ຫຼື ມີຜູ້ທີ່ມາສະໝັກງານໜ້ອຍຫຼາຍ, ຈັດແບ່ງຕາມລະດັບສີມືແຮງງານ




*ແຫຼ່ງຂໍ້ມູນ: ການສຳຫຼວດວິສາຫະກິດໃນ ສປປ ລາວ, ຫວຽດນາມ ແລະ ແຂວງຢູນນານ (ຈີນ) ໂດຍ ທະນາຄານໂລກ (2012)*

4. ການແກ້ໄຂບັນຫາກຳລັງແຮງງານ ແລະ ສະມັດຕະພາບຂອງການຜະລິເປັນບັນຫາຕົ້ນຕໍ ເນື່ອງຈາກວ່າ ສປປ ລາວ ພວມຢູ່ໃນໄລຍະການປ່ຽນແປງທາງດ້ານປະຊາກອນ. ຈຳນວນປະຊາກອນຄາດວ່າຈະເພີ່ມຂຶ້ນ 38 ເປີເຊັນ ຈາກ 6,4 ລ້ານ ໃນປີ 2010 ມາເປັນ 8,8 ລ້ານ ໃນປີ 2030, ປະຊາກອນໃນໄວເຮັດວຽກຈະເພີ່ມຂຶ້ນປະມານ 96,000 ຄົນຕໍ່ປີ ໃນໄລຍະທົດສະວັດຂ້າງໜ້ານີ້ ເຊິ່ງເພີ່ມຂຶ້ນ 63,000 ຄົນທຽບໃສ່ຊຸມປີ 1990. ການເພີ່ມຂຶ້ນຂອງຈຳນວນແຮງງານແລະ ການຫຼຸດລົງຂອງຈຳນວນຜູ້ທີ່ບໍ່ຢູ່ໃນໄວເຮັດວຽກຈະເປັນໂອກາດອັນດີໃນ ການເຕີບໂຕຂອງເສດຖະກິດ, ຖ້າ ສປປ ລາວ ຫາກສາມາດໝູນໃຊ້ໂອກາດທາງດ້ານແຮງງານໜຸ່ມນ້ອຍໂດຍການ ສ້າງວຽກເຮັດງານທຳຢ່າງມີສະມັດຕະພາບ. ຖ້າປາສະຈາກວຽກເຮັດງານທຳໃຫ້ແກ່ແຮງງານໃໝ່ເຫຼົ່ານີ້ແລ້ວ, ວຽກງານການຫຼຸດຜ່ອນຄວາມທຸກຍາກ ແລະ ສະຖຽນລະພາບຂອງຊາດກໍ່ອາດຈະບໍ່ສຳເລັດຜົນຕາມຄາດໝາຍໄດ້.

## *ສິ່ງທ້າທາຍຕົ້ນຕໍ*

5. ບັນຫາສິ່ງທ້າທາຍທາງດ້ານກຳລັງແຮງງານໃນ ສປປ ລາວ ແມ່ນຮຽກຮ້ອງໃຫ້ຕ້ອງໄດ້ຮັບການແກ້ໄຂ ເພື່ອຮັບປະກັນໃຫ້ສຳເລັດວຽກງານການປ່ຽນແປງທາງດ້ານໂຄງສ້າງປະຊາກອນ ແລະ ກ້າວໄປສູ່ການພັດທະນາໃນລະດັບຕໍ່ໄປ. ສິ່ງທ້າທາຍດັ່ງກ່າວມີດັ່ງນີ້:

- *ການເອື່ອຍອີງໃສ່ຂະແໜງຊັບພະຍາກອນທຳມະຊາດຫຼາຍເກີນໄປ.* ການເອື່ອຍອີງໃສ່ຂະແໜງຊັບພະຍາກອນທຳມະຊາດ ເພື່ອຊຸກຍູ້ໃຫ້ແກ່ການເຕີບໂຕນັ້ນ, ມັນຈະບໍ່ສ້າງໃຫ້ມີການເຕີບໂຕ ແລະ ການສ້າງງານທີ່ມີຄວາມສົມດຸນໄດ້. ຍ້ອນວ່າຂະແໜງດັ່ງກ່າວນັ້ນມີອັດຕາການສ້າງທຶນຮອນຕໍ່ການສ້າງແຮງງານສູງຫຼາຍ, ມັນສາມາດສ້າງມູນຄ່າທີ່ກວມປະມານ 18 ເປີເຊັນຂອງ GDP ຂອງ ສປປ ລາວ ໃນປີ 2013 ແຕ່ສ້າງວຽກເຮັດງານທຳໄດ້ພຽງ 22,000 ຄົນ. ຍິ່ງກວ່ານັ້ນ, ການຂະຫຍາຍຕົວຢ່າງແຂງແຮງຂອງຂະແໜງຊັບພະຍາກອນທຳມະຊາດຍັງເຮັດໃຫ້ຂະແໜງອຸດສາຫະກຳການຜະລິດໃໝ່ພົບຄວາມຫຍຸ້ງຍາກໃນການພັດທະນາ, ພ້ອມທັງເປັນການກົດດັນທາງດ້ານອັດຕາແລກປ່ຽນ ເຊິ່ງເຮັດໃຫ້ການສົ່ງອອກຜົນຜະລິດມີຄວາມສາມາດໃນການແຂ່ງຂັນຕໍ່າ ແລະ ການເພີ່ມຂຶ້ນຂອງຄວາມຕ້ອງການຊົມໃຊ້ ແລະ ການລົງທຶນອາດສ້າງຄວາມກົດດັນໃຫ້ແກ່ຄ່າງຈ້າງແຮງງານນຳອີກ. ຄວາມກົດດັນ

ຈາກຄ່າແຮງງານທີ່ເພີ່ມຂຶ້ນນັ້ນ ອາດເປັນເຫດຜົນໜຶ່ງທີ່ເຮັດໃຫ້ຄ່າແຮງງານໃນຂະແໜງການຜະລິດເພີ່ມຂຶ້ນ 12 ເປີເຊັນ ຕໍ່ປີ ໃນໄລຍະ 5 ປີທີ່ຜ່ານມາ, ສູງກວ່າອັດຕາການເພີ່ມຂຶ້ນຂອງສະມັດຕະພາບການຜະລິດ.

- *ສະມັດຕະພາບຂອງການຜະລິດຢູ່ໃນຂະແໜງກະສິກຳ.* ຍ້ອນວ່າກຳລັງແຮງງານສ່ວນຫຼາຍໃນປະຈຸບັນ ແມ່ນຢູ່ໃນຂະແໜງກະສິກຳ, ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນຢູ່ໃນຂະແໜງດັ່ງກ່າວຈຶ່ງມີຄວາມສຳຄັນຫຼາຍໃນວຽກງານການຫຼຸດຜ່ອນຄວາມທຸກຍາກຢູ່ ສປປ ລາວ. ຢ່າງໃດກໍ່ຕາມ, ແຮງງານລາວ 7 ໃນ 10 ຄົນແມ່ນເຮັດວຽກໃນຂະແໜງກະສິກຳທີ່ມີສະມັດຕະພາບການຜະລິດຕ່ຳ ເຊິ່ງຍັງເປັນຂະແໜງທີ່ມີຈຳນວນແຮງງານຫຼາຍເຖິງວ່າຈະມີ ເງື່ອນໄຂການດຳລົງຊີວິດຕ່ຳກໍ່ຕາມ. ສິ່ງນີ້ເປັນບັນຫາຕົ້ນຕໍ ເມື່ອພິຈາລະນາເບິ່ງວ່າມີເດັກນ້ອຍ ປະມານ 1 ລ້ານຄົນ ທີ່ມີອາຍຸຕ່ຳກວ່າ 10 ປີ ອາໄສຢູ່ໃນຄອບຄົວທີ່ເຮັດການປູກຝັງ ແລະ ຍັງປະສົບກັບຄວາມຫຍຸ້ງຍາກໃນການຫຼຸດພົ້ນອອກຈາກຄວາມທຸກຍາກ.
- *ໂອກາດໃນການໄດ້ເຮັດວຽກທີ່ມີຄ່າຈ້າງສູງກວ່າ, ມີສະມັດຕະພາບການຜະລິດສູງກວ່າຍັງຈຳກັດ.* ຫຼາຍປະເທດແມ່ນພັດທະນາໂດຍການເຄື່ອນຍ້າຍແຮງງານຈາກອາຊີບທີ່ມີສະມັດຕະພາບຂອງການຜະລິດຕ່ຳໃນຂະແໜງກະສິກຳໄປສູ່ອາຊີບທີ່ມີຄ່າຈ້າງແຮງງານສູງກວ່າ, ມີສະມັດຕະພາບການຜະລິດສູງກວ່າໃນຂະແໜງອຸດສາຫະກຳການຜະລິດ ແລະ ການບໍລິການ. ເຖິງຢ່າງໃດກໍ່ຕາມ, ຂະແໜງອຸດສາຫະກຳການຜະລິດຂອງ ລາວ ຍັງພົບກັບບັນຫາການດຶງດູດກຳລັງແຮງງານ ແລະ ປັດໄຈຕ່າງໆທີ່ເຮັດໃຫ້ບໍ່ຢາກມີການລົງທຶນທີ່ຈຳເປັນໃນການເພີ່ມສະມັດຕະພາບຂອງການຜະລິດໃຫ້ສູງຂຶ້ນ (ແລະ ປັດໄຈທາງດ້ານຄ່າແຮງງານ). ດັ່ງທີ່ເຫັນໃນຮູບສະແດງ 27, ອັດຕາສ່ວນຂອງຂະແໜງອຸດສາຫະກຳການຜະລິດທາງດ້ານຜົນຜະລິດ ແລະ ແຮງງານຢູ່ໃນເສດຖະກິດໂດຍລວມຍັງຕ່ຳ ເມື່ອທຽບກັບຂະແໜງຊັບພະຍາກອນທຳມະຊາດ ແລະ ຂະແໜງກໍ່ສ້າງ ແລະ ບໍລິການໃນຫຼາຍປີຜ່ານມາ.
- *ອັດຕາການຮູ້ໜັງສືຍັງຕ່ຳຫຼາຍ.* ບັນຫາທາງດ້ານສີມືແຮງງານໃນ ສປປ ລາວ ມີຄວາມເລິກເຊິ່ງ ແລະ ຮ້າຍແຮງກວ່າທີ່ພວກເຮົາຮູ້ໂດຍທົ່ວໄປ,ເນື່ອງຈາກວ່າບັນຫາບໍ່ແມ່ນຍ້ອນການຂາດແຄນສີມື ແຮງງານແຕ່ມັນເປັນບັນຫາທີ່ເປັນພື້ນຖານທີ່ກ່ຽວກັບຄວາມສາມາດໃນການອ່ານ ແລະ ການຄິດໄລ່. ຜົນການປະເມີນຄວາມສາມາດໃນການອ່ານຢູ່ລະດັບການສຶກສາຂັ້ນຕົ້ນສະແດງໃຫ້ເຫັນວ່າເດັກນ້ອຍ ປໍ 2 ຫຼາຍກວ່າ 30 ເປີເຊັນ ອ່ານບໍ່ອອກເລີຍຈັກຄຳ ແລະ ໃນນັ້ນ 57 ເປີເຊັນ ແມ່ນຜູ້ທີ່ອ່ານອອກແຕ່ບໍ່ເຂົ້າໃຈຄວາມໝາຍຂອງເນື້ອໃນສິ່ງທີ່ເຂົາເຈົ້າໄດ້ອ່ານ(ຮູບສະແດງ 28). ການປະເມີນຄວາມສາມາດໃນການອ່ານຂອງຜູ້ໃຫຍ່ກໍ່ໄດ້ຈັດຕັ້ງປະຕິບັດໃນ 6 ປະເທດ ຢູ່ໃນໂລກ ເຊິ່ງລວມທັງ ຫວຽດນາມ, ແຂວງຢູນນານ (ຈີນ) ແລະ ສປປ ລາວ. ຜູ້ໃຫຍ່ໃນ ສປປ ລາວ ແມ່ນມີທັກສະໃນການອ່ານຕ່ຳກວ່າໝູ່ໃນຈຳນວນຜູ້ໃຫຍ່ທີ່

**ຮູບສະແດງ 27: ຜົນຜະລິດ ແລະ ແຮງງານຈັດແບ່ງຕາມຂະແໜງການໃນ ເສດຖະກິດລວມ ຂອງ ສປປ ລາວ**

ໂຄງປະກອບເສດຖະກິດ ອີງຕາມຜົນຜະລິດຂອງແຕ່ລະຂະແໜງການ (ວັດແທກໂດຍມູນຄ່າເພີ່ມ ແລະ ມີຫົວໜ່ວຍເປັນສ່ວນຮ້ອຍຂອງມູນຄ່າເພີ່ມທັງໝົດ)




*ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງ ສປປ ລາວ.*

ໂຄງປະກອບເສດຖະກິດ ອີງຕາມຊົ່ວໂມງເຮັດວຽກຂອງແຕ່ລະຂະແໜງການ (ມີຫົວໜ່ວຍເປັນສ່ວນຮ້ອຍ ຂອງຊົ່ວໂມງເຮັດວຽກທັງໝົດ)




*ແຫຼ່ງຂໍ້ມູນ: ອີງຕາມການຄິດໄລ່ຂອງຜູ້ຂຽນ ໂດຍອີງໃສ່ຂໍ້ມູນຈາກ LECS III, IV, V.*

**ຮູບສະແດງ 28: ການປະເມີນຄວາມສາມາດໃນການອ່ານໃນລະດັບການສຶກສາຂັ້ນຕົ້ນ ຂອງ ສປປ ລາວ**




*ແຫຼ່ງຂໍ້ມູນ: ທະນາຄານໂລກ (2014). “ບົດລາຍງານຜົນການປະເມີນຄວາມສາມາດໃນການອ່ານໃນລະດັບການສຶກສາຂັ້ນຕົ້ນ ຂອງ ສປປ ລາວ ປີ 2012” [ຮ່າງ].*

ເຂົ້າຮ່ວມສອບເສັງທັງໝົດ. ຜູ້ທີ່ຮຽນຈົບມັດທະຍົມຢູ່ໃນ ສປປ ລາວ ມີຜົນສອບເສັງເກືອບເທົ່າລະດັບສະເລ່ຍ ຂອງນັກຮຽນປະຖົມໃນຫວຽດນາມ (ເບິ່ງຮູບສະແດງ 29). ຍ້ອນເຫັນໄດ້ຄວາມສຳຄັນຂອງຄວາມສາມາດໃນການອ່ານໃນການພັດທະນາທັກສະອື່ນໆໃນລະດັບທີ່ສູງຂຶ້ນ, ການຮູ້ໜັງສືຂັ້ນພື້ນຖານ ທີ່ຍັງຢູ່ໃນລະດັບຕໍ່ານັ້ນຈະສົ່ງຜົນກະທົບທີ່ຮ້າຍແຮງຕໍ່ການຍົກລະດັບສະມັດຕະພາບຂອງການຜະລິດ, ການເຕີບໂຕຂອງເສດຖະກິດ ແລະ ຄວາມສາມາດໃນການແຂ່ງຂັນຂອງຊາດ.

### *ທິດທາງໃນຕໍ່ໜ້າ*

6. **ເນື່ອງຈາກວ່າກຳລັງແຮງງານຂອງຊາດ ໃນປະຈຸບັນຈຳນວນຫຼວງຫຼາຍແມ່ນມີອາຊີບປູກຝັງ, ການເພີ່ມສະມັດຕະພາບຂອງການຜະລິດໃນຂະແໜງປູກຝັງຖືວ່າເປັນບູລິມະສິດສູງສຸດຂອງການພັດທະນາໃນ ສປປ ລາວ.** ໃນໄລຍະສັ້ນ, ສະມັດຕະພາບຂອງການຜະລິດໃນຂະແໜງກະສິກຳຈະຊ່ວຍປັບປຸງຊີວິດ ການເປັນຢູ່ໃຫ້ແກ່ປະຊາຊົນລາວຈຳນວນ 4,5 ລ້ານຄົນທີ່ອາໄສການປູກຝັງໃນການດຳລົງຊີວິດ. ໃນໄລຍະຍາວ, ສະມັດຕະພາບ ຂອງການຜະລິດທີ່ເພີ່ມຂຶ້ນໃນການປູກຝັງ ໃນທີ່ສຸດກໍຈະຕ້ອງການແຮງງານ ໜ້ອຍລົງກວ່າເກົ່າ ເຊິ່ງຈະເຮັດໃຫ້ແຮງງານໃນຂະແໜງດັ່ງກ່າວນີ້ວ່າງ

ຮູບສະແດງ 29: ປຽບທຽບຄວາມຮູ້ໜັງສືຂອງຜູ້ໃຫຍ່ຈັດແບ່ງຕາມລະດັບການສຶກສາລະຫວ່າງ ສປປ ລາວ ແລະຫວຽດນາມ




*ແຫຼ່ງຂໍ້ມູນ: ການສໍາຫຼວດຄົວເຮືອນ STEP 2011/2012. ໃນການສໍາຫຼວດ, ມີການອອກແບບການປະເມີນຄວາມຮູ້ໜັງສື ໂດຍສູນສອບເສັງດ້ານການສຶກສາ (ETS)*

*ໝາຍເຫດ: ຮູບສະແດງຂ້າງເທິງໄດ້ສະແດງໃຫ້ເຫັນຄະແນນຈາກການສອບເສັງວັດແທກຄວາມຮູ້ໜັງສືຂັ້ນພື້ນຖານ (ແຕ່ 0-8 ຄະແນນ) ຂອງຜູ້ໃຫຍ່ໃນລະດັບການສຶກສາທີ່ແຕກຕ່າງກັນ ຢູ່ ສປປ ລາວ ແລະ ຫວຽດນາມ*

ງານແລ້ວເຄື່ອນຍ້າຍໄປຊອກເຮັດວຽກໃນຂະແໜງການອື່ນ. ເວົ້າສະເພາະ ແມ່ນມີສອງຢ່າງທີ່ຄວນເອົາໃຈໃສ່ເປັນພິເສດ ດັ່ງລຸ່ມນີ້:

- ອໍານວຍຄວາມສະດວກໃຫ້ແກ່ການຄ້າໃນການຜະລິດເຂົ້າເປືອກ ແລະ ເຂົ້າສານ ເພື່ອຊຸກຍູ້ໃຫ້ມີການລົງທຶນຈາກເອກະຊົນໃນການສີເຂົ້າ ເຊິ່ງຈະຊ່ວຍຫຼຸດຜ່ອນຕົ້ນທຶນໃນການສີເຂົ້າ ແລະ ສ້າງແຮງຈູງໃຈໃຫ້ແກ່ຊາວກະສິກອນໃນການຜະລິດເພື່ອສົ່ງອອກຫຼາຍຂຶ້ນ;
- ຄຸ້ມຄອງການໃຊ້ຈ່າຍງົບປະມານຂອງລັດ ໃນການສະໜັບສະໜູນຊາວນາໃຫ້ດີຂຶ້ນກວ່າເກົ່າ ໂດຍໃຫ້ມີການດຸ່ນດ່ຽງທາງດ້ານການຈັດສັນງົບປະມານລະຫວ່າງກິດຈະກໍາການຄົ້ນຄວ້າທົດລອງວິທະຍາສາດເຂົ້າໃນການປູກຝັງ, ການພັດທະນາເຕັກໂນໂລຢີ ແລະ ການໂອນຄວາມຮູ້ທາງດ້ານວິຊາການ (ລວມທັງແນວພັນທີ່ດີ) ແລະ ການຂະຫຍາຍຊົນລະປະທານ.

7. ໃນຂະນະທີ່ສະມັດຕະພາບຂອງການຜະລິດກະສິກໍາໄດ້ຮັບການຍົກລະດັບ ແລະ ແຮງງານທີ່ສາມາດເຄື່ອນຍ້າຍ ອອກຈາກຂະແໜງປູກຝັງມີຈໍານວນເພີ່ມຂຶ້ນນັ້ນ, ສປປ ລາວ ຈໍາເປັນຈະຕ້ອງໄດ້ສ້າງວຽກງານທີ່ສາມາດດຶງດູດແຮງງານເຂົ້າມາເຮັດວຽກໃນຂະແໜງທີ່ບໍ່ແມ່ນການປູກຝັງໃຫ້ຫຼາຍຂຶ້ນຕື່ມ ເພື່ອຮອງຮັບຈໍານວນແຮງງານທີ່ເພີ່ມຂຶ້ນດັ່ງກ່າວ. ກົງກັນຂ້າມກັບການລາຍງານຂອງສື່ມວນຊົນ, ສປປ ລາວ ບໍ່ໄດ້ປະເຊີນໜ້າກັບບັນຫາຂາດແຄນແຮງງານ ເນື່ອງຈາກວ່າຍັງມີ "ແຫຼ່ງສະສົມ" ແຮງງານໃນຂະແໜງປູກຝັງຢ່າງຫຼວງຫຼາຍ ເຊິ່ງສາມາດຍ້າຍອອກມາເປັນແຮງງານໃນຂະແໜງທີ່ບໍ່ແມ່ນການປູກຝັງໄດ້; ແຕ່ໃນຄວາມເປັນຈິງແລ້ວ, ບັນຫາແມ່ນຢູ່ບ່ອນວ່າ ສປປ ລາວ ຂາດແຄນວຽກງານ ທີ່ຈະສາມາດດຶງດູດເອົາແຮງງານກໍ່ຄືຊາວນາອອກມາຈາກຂະແໜງປູກຝັງລ້ຽງສັດໄດ້. ເພື່ອສາມາດສ້າງວຽກເຮັດງານທໍາທີ່ດຶງດູດໃຈໄດ້ນັ້ນ, ມັນຮຽກຮ້ອງໃຫ້ຕ້ອງແກ້ໄຂບັນຫາສິ່ງກີດຂວາງໃນການດໍາເນີນທຸລະກິດຢູ່ ສປປ ລາວ ເພື່ອ

ຊຸກຍູ້ໃຫ້ມີການລົງທຶນ ແລະ ກະຕຸ້ນໃຫ້ມີການຍົກລະດັບສະມັດຕະພາບ ຂອງການຜະລິດໃຫ້ແກ່ຂະແໜງການຕ່າງໆ. ເວົ້າສະເພາະແມ່ນມີສາມບັນຫາຕົ້ນຕໍ ທີ່ຕ້ອງໄດ້ເອົາໃຈໃສ່ດັ່ງລຸ່ມນີ້:

- ປັບປຸງທາງດ້ານຄ່າໃຊ້ຈ່າຍໃນການປະຕິບັດຕາມຂັ້ນຕອນຕ່າງໆຂອງລັດ ແລະ ຄ່າທຳນຽມຕ່າງໆ ເພື່ອຄວາມວ່ອງໄວ ແລະ ງ່າຍດາຍກວ່າເກົ່າ ພ້ອມທັງເພື່ອສ້າງແວດລ້ອມເອື້ອອຳນວຍໃຫ້ແກ່ການດຳເນີນທຸລະກິດໃຫ້ດີກວ່າເກົ່າ;

- ປັບປຸງທາງດ້ານຄວາມໂປ່ງໃສ ໃນການບໍລິການຂອງພາກລັດຕໍ່ຜູ້ປະກອບການໂດຍສ້າງເປັນມາດຕະການຄັກແນ່ເປັນຕົ້ນແມ່ນການຈັດພິມເຜີຍແຜ່ຕາຕະລາງຄ່າທຳນຽມຕ່າງໆ, ເງື່ອນໄຂການຂໍໃບອະນຸຍາດ ແລະ ທະບຽນທຸລະກິດ; ແລະ

- ຄວນສ້າງເງື່ອນໄຂໃຫ້ຄວາມສະດວກແກ່ພາກເອກະຊົນໃຫ້ສາມາດຮັບຮູ້ເຖິງການປ່ຽນແປງທາງດ້ານນິຕິກຳຕ່າງໆ ພ້ອມທັງປະຕິບັດນິຕິກຳ, ລະບຽບ ແລະ ຂໍ້ກຳນົດກົດໝາຍຕ່າງໆຢ່າງເປັນເອກະພາບກັນພ້ອມທັງຫຼຸດຜ່ອນຂັ້ນຕອນຕ່າງໆລົງ.

8. ໃນຂະນະທີ່ການຜະລິດທີ່ຫຼາກຫຼາຍຈະສ້າງໂອກາດດ້ານວຽກເຮັດງານທຳທີ່ມີສະມັດຕະພາບ, ມັນຮຽກຮ້ອງໃຫ້ມີການຮັບປະກັນວ່າກຳລັງແຮງງານ ລາວ ຈະຕ້ອງມີຄວາມພ້ອມທາງດ້ານການສຶກສາ ແລະ ມີທັກສະໃນການເຮັດວຽກ. ການສົມໃສ່ການສ້າງກຳລັງແຮງງານທີ່ມີສີມືພື້ນຖານທີ່ຈຳເປັນໃນການຜະລິດໃຫ້ມີສະມັດຕະພາບຄວນເປັນບູລິມະສິດຕົ້ນຕໍ. ຮຽກຮ້ອງໃຫ້ມີການສຸມທຶນຮອນເຂົ້າໃສ່ການສ້າງໂອກາດທີ່ສຳຄັນໃຫ້ແກ່ແຮງງານໃນເມື່ອເຂົາເຈົ້າໄດ້ຮັບການຝຶກຝົນສີມືແລ້ວໂດຍການ:

- ເສີມຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ການພັດທະນາ ແລະ ການສຶກສາເດັກນ້ອຍກ່ອນໄວຮຽນ ເພື່ອຊ່ວຍກະກຽມຄວາມພ້ອມທາງດ້ານທັກສະ ແລະ ການຮຽນຮູ້ພື້ນຖານພ້ອມທັງທັກສະທາງດ້ານພຶດຕິກຳກ່ອນເຂົ້າໂຮງຮຽນ ເຊິ່ງລວມທັງການສຸມໃສ່ການຫຼຸດຜ່ອນການຂາດສານອາຫານຊຳເຮື້ອທີ່ເປັນອຸປະສັກໃຫ້ແກ່ການພັດທະນາທາງດ້ານການຮຽນຮູ້ຂອງເດັກ;

- ຮັບປະກັນໃຫ້ເດັກນ້ອຍທັງໝົດສາມາດອ່ານໜັງສືໄດ້ພາຍຫຼັງຈົບ ປໍ 2, ສ້າງພຶດຕິກຳມັກອ່ານ ເພື່ອສ້າງກຳລັງແຮງງານ ສປປ ລາວ ໃຫ້ມີສີມື ແລະ ມີປະສິດທິພາບ; ແລະ

- ສ້າງທັກສະທາງດ້ານວິຊາການທີ່ກ່ຽວຂ້ອງກັບວຽກເຮັດງານທຳໂດຍໃຫ້ລັດຖະບານເຂົ້າມາມີບົດບາດທາງດ້ານຍຸດທະສາດໃນການພັດທະນາທັກສະໃນລະດັບອະຊີວະສຶກສາ ໂດຍມີການສ້າງນະໂຍບາຍ, ກຳນົດມາດຕະຖານ, ສຸມທຶນຮອນໃສ່ການສ້າງເອກະສານເພື່ອການຝຶກອົບຮົມ ແລະ ສ້າງຄູຝຶກ, ປັບປຸງຂໍ້ມູນຂ່າວສານກ່ຽວກັບລະບົບການຝຶກອົບຮົມແລະ ມີການປະເມີນຜົນການຝຶກອົບຮົມ.

9. ໃນຂັ້ນຕອນການວາງແຜນປະຕິຮູບວຽກງານເຫຼົ່ານີ້, ມັນຮຽກຮ້ອງໃຫ້ມີນະໂຍບາຍທີ່ສຳຄັນເພື່ອເປັນເອກະສານອ້າງອີງທາງດ້ານຂໍ້ມູນຂ່າວສານທີ່ດີກວ່າເກົ່າ. ຕົວຢ່າງ: ນະໂຍບາຍທີ່ມີຜົນກະທົບຕໍ່ກຳລັງແຮງງານ ຄວນອີງໃສ່ສະແດງໃຫ້ເຫັນພາບອີງປະກອບໃນຕະຫຼາດແຮງງານຢ່າງຄົບ

ຖ້ວນແລະຊັດເຈນ-ມີຫຍັງເກີດຂຶ້ນແດ່, ແມ່ນໃຜທີ່ໄດ້ຮັບຜົນກະທົບ, ຄວາມໝາຍຄວາມສຳຄັນ ຂອງນະໂຍບາຍດັ່ງກ່າວມີຫຍັງແດ່. ແຕ່ຢ່າງໃດກໍ່ຕາມ, ຂໍ້ມູນຂ່າວສານກ່ຽວກັບການຈ້າງງານ, ການເຄື່ອນຍ້າຍແຮງງານ ແລະ ຕົວຊີ້ວັດທາງດ້ານຕະຫຼາດແຮງງານຕາມ ແຕ່ລະຂະແໜງການແມ່ນຍັງຂາດແຄນຢູ່. ເຄື່ອງມືຕ່າງໆເປັນຕົ້ນແມ່ນຜົນການສຳຫຼວດກຳລັງ ແຮງງານຈະສາມາດຊ່ວຍສະໜອງຂໍ້ມູນທີ່ຈຳເປັນໃຫ້ແກ່ຜູ້ວາງນະໂຍບາຍໃຫ້ສາມາດຮັບຮູ້ຂໍ້ມູນກ່ຽວກັບສິ່ງທ້າທາຍຕົ້ນຕໍ ແລະ ຊອກຫາວິທີການແກ້ໄຂ. ບັນຫາດັ່ງກ່າວນີ້ໄດ້ຮຽກຮ້ອງໃຫ້ມີການເອົາໃຈໃສ່ ເພີ່ມເຕີມໃນການຄົ້ນຄວ້າຈັດລຽງບັນດາປັດໄຈທີ່ມີຜົນກະທົບເຮັດໃຫ້ເກີດມີສິ່ງທ້າທາຍຕ່າງໆກ່ຽວກັບກຳລັງແຮງງານດັ່ງທີ່ກ່າວມາຂ້າງເທິງ, ພ້ອມທັງຊຸກຍູ້ໃຫ້ມີການຄົ້ນຄວ້າວິໄຈບັນຫາກ່ຽວກັບຄ່າແຮງງານ ໃນຂະແໜງປຸງແຕ່ງທີ່ເພີ່ມຂຶ້ນໄວກວ່າສະມັດຕະພາບຂອງການຜະລິດ ແລະ ສຶກສາກ່ຽວກັບ ສິ່ງກີດຂວາງອື່ນໆຕໍ່ກັບແຮງງານໃນ ການຍ້າຍວຽກ ແລະ ຍ້າຍຂະແໜງການ.


ການເພີ່ມຜະລິດຕະພາບ ໃນຂະແໜງກະສິກຳ
ຊຸກຍູ້ການລົງທຶນເອກະຊົນ ໃນທຸລະກິດໂຮງສີເຂົ້າ ໂດຍການອຳນວຍຄວາມສະດວກດ້ານການຄ້າ ເຂົ້າເປືອກ ແລະ ເຂົ້າສານ
ໝູນໃຊ້ຊັບພະຍາກອນຂອງລັດ ເພື່ອສະໜັບສະໜູນຊາວກະສິກອນທີ່ປູກ ເຂົ້າ
ສ້າງວຽກທີ່ໜ້າດຶງດູດໃນຂະແໜງ ການທີ່ບໍ່ແມ່ນກະສິກຳ
ເຮັດໃຫ້ການດຳເນີນທຸລະກິດມີຄວາມສອດຄ່ອງ ແລະ ມີກົນໄກການຊຳລະຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບພາກລັດທີ່ງ່າຍດາຍ
ປັບປຸງຄວາມໂປ່ງໃສໃນຂະແໜງການລັດໃນການໃຫ້ບໍລິການແກ່ພາກທຸລະກິດ
ສ້າງສະພາບແວດລ້ອມໃນການດຳເນີນທຸລະກິດໃຫ້ມີຄວາມເອກະພາບ ແລະ ສາມາດຄາດຄະເນໄດ້
ຮັບປະກັນທັກສະຄວາມຮູ້ພື້ນຖານ
ຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ການສຶກສາ ແລະພັດທະນາເດັກກ່ອນໄວຮຽນ
ຮັບປະກັນໃຫ້ເດັກທຸກຄົນສາມາດອ່ານໄດ້ ພາຍຫຼັງຈົບ ປີ 2
ສ້າງທັກສະດ້ານວິຊາການທີ່ສອດຄ່ອງກັບໜ້າວຽກ

# ເອກະສານຊ້ອນທ້າຍ 1: ພາບລວມຂອງເສດຖະກິດຂອງສປປ ລາວ




*Photo by Remy Rossi / World Bank, 2013*

| | 2011 | 2012 | 2013 | 2014 | 2015 |
|---|---|---|---|---|---|
| ການເຕີບໂຕ ແລະ ອັດຕາເງິນເຟີ້ (ການປ່ຽນແປສ່ວນຮ້ອຍ, ນອກຈາກຈະລະບຸໄວ້) | | | | ປະເມີນ | ຄາດຄະເນ |
| ການເຕີບໂຕ | 8.0 | 8.0 | 8.5 | 7.5 | 6.4 |
| *(ບໍ່ລວມຂະແໜງຊັບພະຍາກອນ, ຈຸດສ່ວນຮ້ອຍ)* | 4.4 | 4.8 | 6.0 | 6.6 | 4.4 |
| ລາຍຮັບຕໍ່ຫົວຄົນ (Atlas method, US$) | 1100 | 1260 | 1460 | 1570 | .. |
| ອັດຕາເງິນເຟີ້ (ອັດຕາສະເລ່ຍແຕ່ລະປີ) | 7.6 | 4.3 | 6.4 | 4.2 | 5.0 |
| ການເງິນພາກລັດ (ປີງົບປະມານ, ສ່ວນຮ້ອຍ ຕໍ່ GDP) 1/ | FY10/11 | FY11/12 | FY12/13 | FY13/14 | FY14/15 |
| ລາຍຮັບທັງໝົດລວມການຊ່ວຍເຫຼືອລ້າ | **22.1** | **23.9** | **23.0** | **23.2** | **22.8** |
| ລາຍຮັບພາຍໃນ | 16.4 | 17.3 | 17.4 | 17.9 | 17.9 |
| ລາຍຮັບພາຍໃນ (ບໍ່ລວມບໍ່ແຮ່ແລະໄຟຟ້າ) | 13.0 | 13.0 | 13.7 | 14.8 | 15.4 |
| ລາຍຮັບພາຍໃນ (ບໍ່ລວມບໍ່ແຮ່) | 13.6 | 14.0 | 14.6 | 15.9 | 16.4 |
| ເງິນຊ່ວຍເຫຼືອລ້າ | 5.7 | 6.6 | 5.7 | 5.3 | 4.9 |
| ລາຍຈ່າຍທັງໝົດ | **24.9** | **25.2** | **29.1** | **27.5** | **27.1** |
| ລາຍຈ່າຍປົກກະຕິ | 10.4 | 11.0 | 16.3 | 14.8 | 15.2 |
| ລາຍຈ່າຍລົງທຶນ ແລະ ການປ່ອຍກູ້ຕໍ່ | 12.9 | 13.4 | 12.2 | 12.1 | 11.3 |
| ຂາດດຸນງົບປະມານ | **-2.7** | **-1.3** | **-6.0** | **-4.3** | **-4.2** |
| ຂາດດຸນງົບປະມານ (ບໍ່ລວມລາຍຮັບຈາກບໍ່ແຮ່) | -5.6 | -4.6 | -8.8 | -6.3 | -5.7 |
| ຂາດດຸນງົບປະມານ (ບໍ່ລວມລາຍຮັບຈາກໄຟຟ້າ ແລະບໍ່ແຮ່) | -6.2 | -5.6 | -9.8 | -7.4 | -6.8 |
| ດຸນຊໍາລະກັບຕ່າງປະເທດ ( ສ່ວນຮ້ອຍ ຕໍ່ GDP, ນອກຈາກລະບຸເປັນຫົວໜ່ວຍອື່ນ) | | | | | |
| ດຸນບັນຊີຊໍາລະປົກກະຕິ ( ສ່ວນຮ້ອຍ ຕໍ່ GDP) | -9.8 | -12.7 | -11.5 | -11.2 | -11.5 |
| ດຸນບັນຊີທຶນ ( ສ່ວນຮ້ອຍ ຕໍ່ GDP) | 9.2 | 13.4 | 10.8 | 12.5 | 12.0 |
| ດຸນຊໍາລະລວມ ( ສ່ວນຮ້ອຍ ຕໍ່ GDP) | -0.6 | 0.6 | -0.7 | 1.3 | 0.5 |
| ຄັງແຮສໍາຮອງ | | | | | |
| ລ້ານໂດລາ | 679 | 740 | 662 | 815 | 884 |
| ກຸ້ມສໍາລັບການນໍາເຂົ້າສິນຄ້າແລະບໍລິການ | 2.3 | 1.9 | 1.5 | 1.7 | 1.7 |
| ໜີ້ສິນຕ່າງປະເທດຂອງພາກລັດ /2 | | | | | |
| ລ້ານໂດລາ (ທ້າຍປີ) | 3,769 | 4,500 | 5,092 | 5,601 | 6,118 |
| ສ່ວນຮ້ອຍ ຕໍ່ GDP (ທ້າຍປີ) | 46.7 | 47.7 | 48.3 | 48.5 | 48.7 |
| ການຊໍາລະໜີ້ສິນຕ່າງປະເທດຂອງພາກລັດ | | | | | |
| ອັດຕາການຊໍາລະໜີ້ສິນຂອງພາກລັດ (ສ່ວນຮ້ອຍ ຕໍ່ ມູນຄ່າສົ່ງອອກ) | 2.7 | 4.1 | 5.1 | 4.8 | 5.2 |
| ອັດຕາການຊໍາລະໜີ້ສິນຂອງພາກລັດ (ສ່ວນຮ້ອຍ ຕໍ່ ລາຍຮັບງົບປະມານ) | 7.4 | 9.8 | 12.4 | 11.2 | 12.3 |
| ຂະແໜງການເງິນ | | | | | |
| ອັດຕາການຂະຫຍາຍຕົວຂອງສິນເຊື່ອ | 48.1 | 26.6 | 34.5 | 14.2 | 15.0 |
| ອັດຕາການຂະຫຍາຍຕົວຂອງເງິນຄວາມໝາຍກວ້າງ M2 | 29.0 | 31.0 | 17.0 | 20.0 | 20.0 |
| ໝາຍເຫດ: | | | | | |
| ມູນຄ່າ GDP (ລ້ານໂດລາ) | 8,234 | 9,390 | 11,187 | 11,837 | 13,030 |
| ອັດຕາແລກປ່ຽນ (ກີບ/ໂດລາ, ສະເລ່ຍ) | 8,058 | 7,982 | 7,862 | 8,035 | 8,035 |

*ແຫຼ່ງຂໍ້ມູນ: ການປະເມີນແລະຄາດຄະເນຂອງທີມງານທະນາຄານໂລກ ອີງຕາມຂໍ້ມູນຈາກລັດຖະບານແລະແຫຼ່ງອື່ນໆ.*

1/ ປີງົບປະມານ (ຕຸລາ ເຖິງ ກັນຍາ).

2/ ບົດປະເມີນຄວາມຍືນຍົງດ້ານໜີ້ສິນ 2014

# ເອກະສານຊ້ອນທ້າຍ 2: ການຄາດຄະເນການຂະຫຍາຍຕົວຂອງເສດຖະກິດໃນພາກພື້ນອາຊີຕາເວັນອອກແລະປາຊີຟິກ



*Photo by Remy Rossi / World Bank, 2013*

| | 2012 | 2013 | 2014 | 2015 |
|---|---|---|---|---|
| | | | ປະເມີນ | ຄາດຄະເນ |
| ເສດຖະກິດໂລກ | 2.4 | 2.5 | 2.6 | 3.0 |
| ປະເທດລາຍຮັບສູງ | 1.4 | 1.4 | 1.8 | 2.2 |
| ປະເທດກຳລັງພັດທະນາ | 4.8 | 4.9 | 4.4 | 4.8 |
| ພາກພື້ນອາຊີຕາເວັນອອກແລະປາຊີຟິກ | 7.4 | 7.2 | 6.9 | 6.7 |
| ຈີນ | 7.7 | 7.7 | 7.4 | 7.1 |
| ອິນໂດເນເຊຍ | 6.3 | 5.8 | 5.1 | 5.2 |
| ມາເລເຊຍ | 5.6 | 4.7 | 5.7 | 4.9 |
| ຟິລິປິນ | 6.8 | 7.2 | 6.4 | 6.7 |
| ໄທ | 6.5 | 2.9 | 0.5 | 3.5 |
| ຫວຽດນາມ | 5.2 | 5.4 | 5.4 | 5.5 |
| ກຳປູເຈຍ | 7.3 | 7.4 | 7.2 | 7.5 |
| ສປປ ລາວ | 8.0 | 8.5 | 7.5 | 6.4 |
| ມຽນມາ | 7.3 | 8.3 | 8.5 | 8.5 |
| | | | | |
| ອາຊີຕາເວັນອອກ - ບໍ່ລວມຈີນ | 6.3 | 5.3 | 4.6 | 5.2 |
| ອາຊຽນ (ASEAN) | 5.7 | 5.0 | 4.5 | 5.0 |

*ແຫຼ່ງຂໍ້ມູນ: ບົດລາຍງານເສດຖະກິດຂອງພາກພື້ນອາຊີຕາເວັນອອກແລະປາຊີຟິກ ຕຸລາ 2014, ບົດລາຍງານເສດຖະກິດໂລກ ມັງກອນ 2015*

ຫ້ອງການທະນາຄານໂລກປະຈຳ ສປປ ລາວ
ປະຕູໄຊ, ຖະໜົນເນຣູ
ຕູ້ໄປສະນີ 345
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: (856-21) 266 200
ແຟັກ: (856-21) 266 299
www.worldbank.org/laos

**The World Bank**
1818 H Street, NW
Washington, D.C. 20433, USA
Tel: (202) 4731000
Fax: (202) 4776391
www.worldbank.org

